# ຂອບການຟື້ນຟູເສດຖະກິດ ຂອງ ສປປ ລາວ 2022 - 2025















ກະຊວງ ແຜນການ ແລະ ການລົງທຶນ
ສະໜັບສະໜູນໂດຍຄະນະວິຊາການວຽກງານແກ້ໄຂຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19
ພະຈິກ 2022

ສາລະບານ


1 ຄຳນຳ ........................................ 6

2 ພາກສະເໜີ ........................................ 7

2.1 ຄຳນິຍາມຂອງຂອບການຟື້ນຟູເສດຖະກິດ ........................................ 8

2.2 ການກຳນົດການຈັດຕັ້ງປະຕິບັດສຳລັບຂອບການຟື້ນຟູເສດຖະກິດ ........................................ 9

2.3 ສອດຄ່ອງກັບຍຸດທະສາດ ແລະ ແຜນທີ່ມີຢູ່ ........................................ 10

2.4 ການຄຸ້ມຄອງຄວາມສ່ຽງ ແລະ ການປະສານງານຂອງກອບການຟື້ນຟູເສດຖະກິດ ........................................ 14

3 ເນື້ອໃນ ........................................ 15

3.1 ຜົນກະທົບຂອງ COVID-19 ........................................ 15

3.2 ວິກິດການ '4F' (ອາຫານ, ຝຸ່ນ, ນ້ຳມັນເຊື້ອໄຟ ແລະ ການເງິນ) ........................................ 18

3.3 ວິໄສທັດ ........................................

4 ເສົາຄ້ຳຂອງກອບການຟື້ນຟູເສດຖະກິດ ........................................ 21

4.1 ເສົາຄ້ຳ 1: ການສະໜອງທຶນໃຫ້ແກ່ການພັດທະນາແບບຍືນຍົງ ແລະ ການຮ່ວມມືພັດທະນາຢ່າງມີປະສິດທິຜົນ ........................................ 25

4.2 ເສົາຄ້ຳ 2: ການຄ້າ ແລະ ພາກເອກະຊົນ, ຕ່ອງໂສ້ມູນຄ່າ ແລະ ການທ່ອງທ່ຽວ ........................................ 29

4.3 ເສົາຄ້ຳ 3: ການຄຸ້ມຄອງການປ່ຽນແປງ ແລະ ການເພີ່ມທະວີການກະກຽມນະໂຍບາຍໃຫ້ແກ່ວຽກງານທີ່ເປັນທຳ 36

4.4 ເສົາຄ້ຳ 4: ທຶນມະນຸດ/ການພັດທະນາຊັບພະຍາກອນມະນຸດ ........................................ 44

4.5 ເສົາຄ້ຳ 5: ການເຕີບໂຕສີຂຽວ, ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງຄວາມສ່ຽງໄພພິບັດ ........................................ 51

5 ການຕິດຕາມ, ການປະເມີນຜົນ ແລະ ການຄຸ້ມຄອງຄວາມສ່ຽງ ........................................ 57

5.1 ໄລຍະເວລາຂອງກອບວຽກ ແລະ ຄວາມສອດຄ່ອງກັບຂະບວນການແຫ່ງຊາດ ........................................ 57

5.2 ການປະສານງານ ແລະ ຄວາມຮັບຜິດຊອບສຳລັບການຕິດຕາມເປົ້າໝາຍ ........................................ 58

5.3 ຄວາມສ່ຽງ, ລະດັບຄວາມສ່ຽງ ແລະ ຍຸດທະສາດການຫຼຸດຜ່ອນ ........................................ 58

6 ເອກະສານຊ້ອນທ້າຍ ........................................ 63

6.1 ເອກະສານຍຸດທະສາດທີ່ກ່ຽວຂ້ອງກັບ 5 ເສົາຄ້ຳ ........................................ 63

6.2 ລາຍການແຜນວາດ ........................................ 65

6.3 ລາຍການຕາຕະລາງ ........................................ 65

# ຄຳຂອບໃຈ

ຂອບການຟື້ນຟູເສດຖະກິດໄດ້ຖືກຮ່າງຂຶ້ນມາໂດຍການຊີ້ນຳ-ນຳພາຈາກຄະນະນຳກະຊວງແຜນການ ແລະ ການລົງທຶນ ທີ່ເອົາໃຈໃສ່ລົງເລິກໃກ້ຊິດໃຫ້ທິດທາງໃນການຮ່າງຂອບຟື້ນຟູເສດຖະກິດສະບັບນີ້ຂຶ້ນມາ; ໃນຂັ້ນວິຊາການ ສະແດງຄວາມຂອບໃຈ ສະຖາບັນຄົ້ນຄວ້າວິໄຈການພັດທະນາ (DRI), ກະຊວງແຜນການ ແລະ ການລົງທຶນ (MPI). ໂດຍການຊີ້ນຳ-ນຳພາຂອງທ່ານ ດຣ ສິດທິຣິດ ຣາດຊະພົນ, ຫົວໜ້າສະຖາບັນ ແລະ ທ່ານ ນ. ສີສະຫວັນ ດີດາຣາວົງ, ຮອງຫົວໜ້າສະຖາບັນ ທີ່ຢູ່ໃນຄະນະຊີ້ນຳຂະບວນການສ້າງຂອບການຟື້ນຟູເສດຖະກິດ ຮ່ວມກັບທ່ານນາງ Dr Grace-Ann Cornwall, ທີ່ປຶກສາສາກົນໃນການຄົ້ນຄວ້າ ແລະ ການຈັດກອງປະຊຸມປຶກສາຫາລືຮ່ວມກັບທຸກພາກສ່ວນໃນແຕ່ລະໄລຍະ. ນອກຈາກນັ້ນ, ຂະບວນການດັ່ງກ່າວຍັງໄດ້ຮັບການສະໜັບສະໜູນແລະອຳນວຍຄວາມສະດວກໂດຍທີມງານຂອງອົງການສະຫະປະຊາຊາດ, ທະນາຄານພັດທະນາອາຊີ, ທະນາຄານໂລກ ແລະ ສະຖາບັນເຕີບໂຕສີຂຽວສາກົນ ແລະ ທີ່ຂາດບໍ່ໄດ້ແມ່ນໄດ້ຮັບການຮ່ວມມືຈາກບັນດາກະຊວງທີ່ກ່ຽວຂ້ອງ, ຕົວແທນຈາກພາກເອກະຊົນ, ອົງການຈັດຕັ້ງສາກົນ, ສະຖານທູດ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານກໍໄດ້ປະກອບສ່ວນອັນສຳຄັນຕະຫຼອດໄລຍະເວລາສອງປີ, ເຮັດໃຫ້ສາມາດສ້າງເອກະສານຂອບການຟື້ນຟູເສດຖະກິດສະບັບນີ້ໄດ້ຢ່າງມີຜົນສຳເລັດ .

# ຕົວອັກສອນຫຍໍ້

| | |
|---|---|
| ADB | ທະນາຄານພັດທະນາອາຊີ |
| ACRF | ຂອບການຟື້ນຟູຮອບດ້ານຂອງອາຊຽນ |
| AF | ກອງທຶນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ |
| BOL | ທະນາຄານແຫ່ງ ສປປ ລາວ |
| CRPD | ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ |
| DCDC | ກົມຄວບຄຸມພະຍາດຕິດຕໍ່ |
| DHHP | ກົມອະນາໄມ ແລະ ສົ່ງເສີມສຸຂະພາບ |
| DPC | ກົມແຜນການ ແລະ ການຮ່ວມມື |
| DRI | ສະຖາບັນຄົ້ນຄວ້າວິໄຈການພັດທະນາ |
| ECE | ການສຶກສາກ່ອນໄວຮຽນ |
| FAO | ອົງການອາຫານ ແລະ ການກະເສດ |
| FDD | ກົມອາຫານ ແລະ ຢາ |
| GCF | ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ |
| GDP | ລວມຍອດຜະລິດຕະພັນພາຍໃນ |
| GEF | ກອງທຶນສິ່ງແວດລ້ອມໂລກ |
| HRBA | ແນວທາງສິດທິມະນຸດ |
| IFI | ສະຖາບັນການເງິນສາກົນ |
| ILO | ອົງການແຮງງານສາກົນ |
| IYCF | ການໃຫ້ອາຫານເດັກອ່ອນ ແລະ ເດັກນ້ອຍ |
| Lao PDR | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| LASES | ສະຖາບັນວິທະຍາສາດສັງຄົມ ແລະ ເສດຖະກິດຂອງລາວ |
| LSB | ສູນສະຖິຕິແຫ່ງຊາດລາວ |
| LDC | ປະເທດດ້ອຍພັດທະນາ |
| LFTU | ສະຫະພັນກຳມະບານລາວ |
| LSSO | ອົງການປະກັນສັງຄົມຂອງລາວ |
| LNCCI | ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ |
| LWU | ສະຫະພັນແມ່ຍິງລາວ |
| LYU | ສູນກາງຊາວໜຸ່ມ |
| MAF | ກະຊວງກະສິກຳ ແລະ ປ່າໄມ້ |
| MDA | ກະຊວງ, ກົມ ແລະ ອົງການ |
| MEM | ກະຊວງພະລັງງານ ແລະ ບໍ່ແຮ່ |
| MoLSW | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| MoES | ກະຊວງສຶກສາທິການ ແລະ ກິລາ |

| | |
|---|---|
| MoF | ກະຊວງການເງິນ |
| MoFA | ກະຊວງການຕ່າງປະເທດ |
| MoIC | ກະຊວງອຸດສາຫະກຳ ແລະ ການຄ້າ |
| MoICT | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ |
| MoNRE | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| MoPS | ກະຊວງປ້ອງກັນຄວາມສະຫງົບ |
| MoTC | ກະຊວງເຕັກໂນໂລຊີ ແລະ ການສື່ສານ |
| MPI | ກະຊວງແຜນການ ແລະ ການລົງທຶນ |
| MPWT | ກະຊວງໂຍທາທິການ ແລະ ຂົນສົ່ງ |
| MSME | ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ |
| NCAWMC | ຄະນະກຳມະການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກນ້ອຍ |
| NDVP | ແຜນການນຳໃຊ້ ແລະ ການສັກຢາກັນພະຍາດແຫ່ງຊາດ |
| NHI | ປະກັນສຸຂະພາບແຫ່ງຊາດ |
| NSEDP | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ |
| NSPS | ຍຸດທະສາດການຄຸ້ມຄອງສັງຄົມແຫ່ງຊາດ |
| NUoL | ມະຫາວິທະຍາໄລແຫ່ງຊາດລາວ |
| ODA | ການຊ່ວຍເຫຼືອທາງການເພື່ອການພັດທະນາ |
| OSPP | ຫ້ອງການໄອຍາການສູງສຸດຂອງ ສປປ ລາວ |
| PoE | ທ່າເຮືອ/ດ່ານຂາເຂົ້າ |
| RCEP | ການຮ່ວມມືດ້ານເສດຖະກິດແບບຮອບດ້ານລະດັບພາກພື້ນ |
| SDGs | ເປົ້າໝາຍການພັດທະນາແບບຍືນຍົງ |
| SEZs | ເຂດເສດຖະກິດພິເສດ |
| STS | ຍຸດທະສາດໃນການຂ້າມຜ່ານແບບຄ່ອງຕົວເພື່ອອອກຈາກສະຖານະພາບປະເທດດ້ອຍພັດທະນາ |
| TFR | ອັດຕາການຈະເລີນພັນທັງໝົດ |
| TVET | ອາຊີວະສຶກສາ |
| UHC | ການຄຸ້ມຄອງສຸຂະພາບແບບຖ້ວນໜ້າ |
| UN | ສະຫະປະຊາຊາດ |
| UNFPA | ກອງທຶນປະຊາກອນຂອງອົງການສະຫະປະຊາຊາດ |
| UNRCO | ຫ້ອງການປະສານງານຂອງອົງການສະຫະປະຊາຊາດ |
| WASH | ໂຄງການນ້ຳສະອາດ ແລະ ສຸຂະອະນາໄມ |
| WHO | ອົງການອະນາໄມໂລກ |

# 1 ຄໍານໍາ

ວິກິດການ ແລະ ຜົນກະທົບຈາກພາຍນອກຕ່າງໆໃນຊຸມປີຜ່ານມາໄດ້ຂັດຂວາງຄວາມຄືບໜ້າຂອງການພັດທະນາຂອງ ສປປ ລາວ. ໃນຕົ້ນປີ 2020, ພະຍາດໂຄວິດ 19 ໄດ້ກາຍເປັນໄພຂົ່ມຂູ່ຕໍ່ສຸຂະພາບຂອງປະຊາຊົນ ແລະ ແຜ່ລາມໄປຢ່າງກວ້າງຂວາງ ແລະໄວ ຈົນກາຍເປັນຄວາມສ່ຽງຕໍ່ການພັດທະນາທາງດ້ານເສດຖະກິດ ແລະ ສັງຄົມ. ພ້ອມດຽວກັນນີ້, ບັນດາປະເທດທົ່ວໂລກໄດ້ເລັ່ງດໍາເນີນມາດຕະການເພື່ອຄວບຄຸມການແຜ່ລະບາດ. ໃນປີ 2021, ເຫັນໄດ້ຢ່າງຈະແຈ້ງວ່າຜົນກະທົບຂອງໂຄວິດ 19 ນັ້ນຈະບໍ່ພຽງແຕ່ເປັນສິ່ງທ້າທາຍໃນໄລຍະສັ້ນເທົ່ານັ້ນ ແຕ່ຍັງຈະສົ່ງຜົນກະທົບໄລຍະຍາວໄປອີກຫຼາຍປີຂ້າງໜ້າ. ກ້າວເຂົ້າສູ່ປີ 2022, ໂລກເຮົາໄດ້ປະເຊີນກັບສິ່ງທ້າທາຍ ແລະ ເຫດການທີ່ບໍ່ຄາດຄິດໃໝ່ໆ ເປັນຕົ້ນ ຄວາມຂັດແຍ່ງທີ່ເກີດຂຶ້ນຢ່າງຕໍ່ເນື່ອງໃນຢູເຄຣນ, ລາຄາອາຫານ, ນໍ້າມັນເຊື້ອໄຟ ແລະ ຝຸ່ນເພີ່ມຂຶ້ນຢ່າງໄວວາ ແລະ ສະພາບການເງິນທີ່ບໍ່ຄ່ອງຕົວ ເຮັດໃຫ້ຄ່າຄອງຊີບເພີ່ມຂຶ້ນຢ່າງໜັກໜ່ວງເກືອບທຸກແຫ່ງ, ລວມທັງໃນ ສປປ ລາວ.

ສະນັ້ນ, ການເລັ່ງຟື້ນຟູ ແລະ ສ້າງຄວາມທົນທານ ຈຶ່ງເປັນສິ່ງຈໍາເປັນສໍາລັບລັດຖະບານ ສປປ ລາວ. ຈຸດປະສົງຂອງຂອບການຟື້ນຟູເສດຖະກິດນີ້ ແມ່ນເພື່ອຫຼຸດຜ່ອນຜົນກະທົບທາງລົບຂອງເຫດການຮຸນແຮງ ແລະ ໄພພິບັດໃນປັດຈຸບັນຕໍ່ປະຊາຊົນໃນ ສປປ ລາວ ແລະ ເພື່ອໃຫ້ປະເທດພ້ອມຮັບມືກັບຄວາມທ້າທາຍໃນອະນາຄົດໄດ້ດີຂຶ້ນ. ຈຸດສຸມຂອງຂອບການຟື້ນຟູນີ້ ແມ່ນສຸມໃສ່ການປົກປ້ອງກຸ່ມທີ່ມີຄວາມສ່ຽງ ແລະ ດ້ອຍໂອກາດທີ່ສຸດ ຍ້ອນວ່າເຂົາເຈົ້າກໍາລັງປະເຊີນກັບຜົນກະທົບທີ່ເປັນອັນຕະລາຍຈາກວິກິດການ.

ຄວາມພະຍາຍາມໃນການສ້າງປະເທດທີ່ມີຄວາມທົນທານ ບໍ່ສາມາດເກີດຂຶ້ນໄດ້ໂດຍບຸກຄົນໃດໜຶ່ງ ແຕ່ມັນຕ້ອງການ ການສະໜັບສະໜູນຈາກທຸກພາກສ່ວນກ່ຽວຂ້ອງ. ດັ່ງນັ້ນ, ຂອບການຟື້ນຟູເສດຖະກິດຈຶ່ງໄດ້ກໍານົດຂຶ້ນພາຍໃຕ້ຂະບວນການທີ່ກວມລວມ ແລະ ມີສ່ວນຮ່ວມ. ຂັ້ນຕອນຕ່າງໆໃນການກະກຽມຮ່າງເອກະສານນີ້ແມ່ນອີງໃສ່ຜົນຂອງການຄົ້ນຄວ້າຍ່ອຍຕ່າງໆ, ການສົນທະນາສອງຝ່າຍ ແລະ ການປຶກສາຫາລືຫຼາຍຄັ້ງກັບບັນດາພາກສ່ວນທີ່ກ່ຽວຂ້ອງ.

ສິ່ງສໍາຄັນທີ່ຕ້ອງຮັບຮູ້ແມ່ນ ຂອບການຟື້ນຟູສະບັບນີ້ບໍ່ແມ່ນການສ້າງເປັນແຜນງານແຫ່ງຊາດສະບັບໃໝ່ ແຕ່ມີຈຸດປະສົງເພື່ອປະກອບສ່ວນເຂົ້າໃນບັນດາຍຸດທະສາດຕ່າງໆເຊັ່ນ: ຍຸດທະສາດທາງການເງິນ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ ໂດຍສະເພາະ ແຜນການ 5 ປີ ຄັ້ງທີ IX (2021-2025), ເຊິ່ງການຈັດຕັ້ງປະຕິບັດຂອບການຟື້ນຟູນີ້ມີຄວາມສອດຄ່ອງຢ່າງໃກ້ຊິດກັບເອກະສານສໍາຄັນອື່ນໆ ເປັນຕົ້ນ ແຜນຂອງຂະແໜງການ ແລະ ຂອບວຽກຮ່ວມມືກັບພາກພື້ນ ແລະ ສາກົນ.

ຜົນສໍາເລັດຂອງຂອບການຟື້ນຟູເສດຖະກິດ ແມ່ນຂຶ້ນກັບຜົນການຈັດຕັ້ງປະຕິບັດຂອງບັນດາກະຊວງ, ບັນດາພາກສ່ວນເສດຖະກິດຕ່າງໆທີ່ໄດ້ກໍານົດໜ້າວຽກລະອຽດໃນຂອບຟື້ນຟູນີ້ ເຊິ່ງໄດ້ຮັບການສະໜັບສະໜູນທີ່ສອດຄ່ອງ ແລະ ການປະສານງານຈາກຄູ່ຮ່ວມພັດທະນາ.

ພວກເຮົາຂໍຖືເອົາໂອກາດນີ້ ຂອບໃຈທຸກພາກສ່ວນທີ່ໄດ້ປະກອບສ່ວນເຂົ້າໃນການກະກຽມຂອບການຟື້ນຟູເສດຖະກິດຂອງ ສປປ ລາວ ໃນໄລຍະສອງປີຜ່ານມາ ພວກເຮົາເຫັນໄດ້ຜົນສໍາເລັດໃນການສ້າງຂອບຟື້ນຟູນີ້ທີ່ໄດ້ນໍາໃຊ້ກົນໄກການເຮັດວຽກທີ່ມີສ່ວນຮ່ວມຈາກຫຼາຍພາກສ່ວນ ແລະ ຫວັງວ່າໃນຂະບວນການຈັດຕັ້ງປະຕິບັດກໍ່ຈະໄດ້ຮັບການຮ່ວມມືຈາກບັນດາທ່ານເຊັ່ນກັນ.

| | |
|---|---|
| ທ່ານ ປອ ສະຖາບັນດິດ ອິນສີຊຽງໃໝ່ | ທ່ານ ນ. ຊາຣາ ເຊັກເກເນັສ |
| ຮອງລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ | ຜູ້ປະສານງານຂອງອົງການສະຫະປະຊາຊາດ |

# 2 ພາກສະເໜີ

ການສ້າງຂອບການຟື້ນຟູເສດຖະກິດສະບັບນີ້ແມ່ນການສືບຕໍ່ໜ້າວຽກທີ່ໄດ້ປຶກສາຫາລື ແລະກະກຽມຜ່ານມາຖືເປັນເອກະສານທີ່ສຳຄັນ ແລະຈຳເປັນໃນການກຳນົດວຽກຈຸດສຸມ, ມາດຕະການເພື່ອແກ້ໄຂຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ຕໍ່ການພັດທະນາເສດຖະກິດ-ສັງຄົມ, ພ້ອມດຽວກັນນັ້ນ ຍັງແມ່ນການປະເມີນຜົນກະທົບທີ່ເກີດຈາກວິກິດການໃນປັດຈຸບັນ ທັງທາງດ້ານນ້ຳມັນເຊື້ອໄຟ, ການເງິນ, ອາຫານ ແລະ ຄາດໝາຍບູລິມະສິດໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຂອບວຽກອື່ນໆທີ່ກ່ຽວຂ້ອງ ເຊິ່ງຈະເປັນການປະກອບສ່ວນອັນໃຫຍ່ຫຼວງທີ່ສຸດໃນການສ້າງຄວາມທົນທານຕໍ່ວິກິດການທີ່ອາດເກີດຂຶ້ນໃນອະນາຄົດ. ຂອບການຟື້ນຟູນີ້ໄດ້ຖືກຮ່າງຂຶ້ນໂດຍຜ່ານຂະບວນການປຶກສາຫາລື ພາຍໃຕ້ການນຳພາຂອງກະຊວງແຜນການ ແລະ ການລົງທຶນ ໂດຍໄດ້ຮັບການສະໜັບສະໜູນຈາກຄະນະປະຕິບັດງານຫຼາຍຝ່າຍ ເຊິ່ງປະກອບດ້ວຍບັນດາກະຊວງ, ພາກເອກະຊົນ ແລະ ຕາງໜ້າພາກສັງຄົມ, ຄູ່ຮ່ວມພັດທະນາ ກໍ່ຄືບັນດາອົງການ, ກອງທຶນ ແລະ ແຜນງານຂອງອົງການສະຫະປະຊາຊາດ.

ເດືອນພຶດສະພາ ປີ 2020 ໄດ້ເກີດມີການແຜ່ລະບາດຂອງພະຍາດໂຄວິດ-19 ໃນຫລາຍພື້ນທີ່ ແລະ ສົ່ງຜົນກະທົບໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ເຊິ່ງກະຊວງແຜນການ ແລະ ການລົງທຶນເປັນຜູ້ຕິດຕາມ ແລະ ປະເມີນໜ້າວຽກດັ່ງກ່າວ; ຫຼາຍໜ້າວຽກໄດ້ມີການໂຈະ, ເລື່ອນ ສົ່ງຜົນໃຫ້ມີການຄົ້ນຄວ້າຄືນການກຳນົດມາດຕະການໃນການຮັບມືກັບຜົນກະທົບດັ່ງກ່າວ ຈຶ່ງໄດ້ມີການຮ່ວມເຮັດວຽກປຶກສາຫາລືກັບບັນດາທີມງານທີ່ຢູ່ໃນຄະນະຟື້ນຟູເສດຖະກິດ, ແນ່ນອນຜົນກະທົບດັ່ງກ່າວໄດ້ກະທົບໃສ່ບັນດາຄາດໝາຍ, ແຜນວຽກທີ່ກຳນົດໃນແຜນພັດທະນາອາດບໍ່ສາມາດປະຕິບັດໄດ້ຕາມຄາດໝາຍ ແລະ ຕ້ອງມີການດັດປັບຄືນ. ຜ່ານການຄົ້ນຄວ້າປຶກສາຫາລືໄດ້ກຳນົດໜ້າວຽກຫຼັກອອກເປັນ 5 ວຽກຈຸດສຸມ ທີ່ມີທັງໜ້າວຽກລະອຽດ ແລະ ມາດຕະການໃນການຈັດຕັ້ງປະຕິບັດໃນການຮັບມືກັບຜົນກະທົບຂອງການລະບາດຂອງພະຍາດດັ່ງກ່າວຢ່າງມີປະສິດທິພາບ. ໃນປີ 2021, ກະຊວງແຜນການ ແລະການລົງທຶນ ແລະ ຄະນະສະເພາະກິດທີ່ມີຫຼາຍພາກສ່ວນໄດ້ເລີ່ມຂະບວນການປຶກສາຫາລື ແລະທົບທວນໜ້າວຽກຕ່າງໆຄືນໃໝ່ ໂດຍເນັ້ນໜັກໃສ່ການກຳນົດບູລິມະສິດ ແລະ ຂໍ້ແນະນຳທາງດ້ານນະໂຍບາຍທີ່ສາມາດແກ້ໄຂຜົນກະທົບຂອງການລະບາດດັ່ງກ່າວເພື່ອຟື້ນຟູເສດຖະກິດເບື້ອງຕົ້ນກໍຄືການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ. ການນຳສະເໜີວຽກງານການຟື້ນຟູເສດຖະກິດຈາກພະຍາດໂຄວິດ 19 ໃນກອງປະຊຸມໂຕະມົນລະດັບສູງໃນປີ 2021, ທ່ານຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໄດ້ສະເໜີຂັ້ນຕອນເພີ່ມເຕີມ ແລະເປົ້າໝາຍການພັດທະນາຂອບການຟື້ນຟູນີ້ (ພາຍຫຼັງປ່ຽນຊື່ມາເປັນຂອບການຟື້ນຟູເສດຖະກິດ).

ນັບແຕ່ເດືອນກຸມພາ 2022 ເປັນຕົ້ນມາ, ເສດຖະກິດຂອງປະເທດໄດ້ພົບກັບວິກິດການຂອງການລະບາດຂອງພະຍາດໂຄວິດ-19 ແລະ ສິ່ງທ້າທາຍທາງດ້ານເສດຖະກິດມະຫາພາກຂອງສປປລາວທີ່ມີມາແຕ່ດົນ ເຊິ່ງໄດ້ສົ່ງຜົນກະທົບຢ່າງໜັກໜ່ວງຕໍ່ການດຳລົງຊີວິດຂອງປະຊາຊົນ. ການເພີ່ມຂຶ້ນຂອງອັດຕາເງິນເຟີ້ ແລະ ການອ່ອນຄ່າຂອງຄ່າເງິນກີບໄດ້ສົ່ງຜົນຕໍ່ການເພີ່ມຂຶ້ນຂອງລາຄາອາຫານ, ນ້ຳມັນເຊື້ອໄຟ ແລະ ປຸ໋ຍ (ຝຸ່ນ) ແລະ ຍັງສົ່ງຜົນຕໍ່ສະພາບການເງິນ ແລະ ເສດຖະກິດ-ສັງຄົມຂອງປະເທດ (ເບິ່ງພາກທີ 2.2). ສະພາບທີ່ເກີດຂຶ້ນນີ້ເປັນປັດໄຈສຳຄັນໃນການສ້າງຂອບການຟື້ນຟູເສດຖະກິດແຫ່ງຊາດຂຶ້ນ ທີ່ ສປປລາວ ຕ້ອງກຽມຄວາມພ້ອມຮັບມືກັບຜົນກະທົບຄັ້ງໃໝ່ນີ້ ໂດຍ *ການສ້າງ, ທົບທວນຄືນເພື່ອໃຫ້ມີສິ່ງດີກວ່າເກົ່າ.*[1]

[1] United Nations. 2020. *A UN Framework for the Immediate Socio-Economic Response to COVID-19*, https://unsdg.un.org/sites/default/files/2020-04/UN-framework-for-the-immediate-socio-economic-response-to-COVID-19.pdf

ຂອບການຟື້ນຟູເສດຖະກິດຂອງ ສປປລາວ ສ້າງຂຶ້ນຕາມ 5 ເສົາຄ້ຳ ທີ່ໄດ້ຜ່ານການປຶກສາຫາລື ແລະ ເຫັນດີຈາກຄະນະປະຕິບັດງານຫຼາຍພາກສ່ວນ; ແຕ່ລະເສົາຄ້ຳປະກອບດ້ວຍ 3 ຫາ 6 ອີງປະກອບທີ່ສະເໜີໃນກອງປະຊຸມໂຕະມົນປະຈຳປີ 2021. ຈຸດປະສົງຂອງຂອບການຟື້ນຟູເສດຖະກິດນີ້ແມ່ນການຈັດລຽງບູລິມະສິດການຈັດຕັ້ງປະຕິບັດ (ເບິ່ງພາກທີ 3), ທີ່ໄດ້ມີການປຶກສາຫາລືຫຼາຍຝ່າຍໃນເດືອນກັນຍາ 2022 ແລະ ການປຶກສາຫາລືຂັ້ນລັດຖະມົນຕີໃນເດືອນຕຸລາ 2022.

ເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ, ຂອບຟື້ນຟູເສດຖະກິດນີ້ໄດ້ລະບຸແຈ້ງຂະບວນການແລະ ກົນໄກການຕິດຕາມ ແລະ ການປະເມີນຜົນຢ່າງລະອຽດ (ເບິ່ງພາກທີ 4). ໂດຍສະເພາະ ຂອບການຟື້ນຟູເສດຖະກິດນີ້ຈະສະໜັບສະໜູນໃຫ້ແກ່:

1. ການທົບທວນໄລຍະກາງຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 9 ທີ່ຈະມາເຖິງໃນປີ 2023;
2. ການພັດທະນາແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 10.

ຂະບວນການໂຕະມົນປະຈຳປີເປີດໂອກາດໃຫ້ລາຍງານຄວາມຄືບໜ້າ ແລະຍົກໃຫ້ເຫັນສິ່ງທ້າທາຍກ່ຽວກັບການຈັດຕັ້ງປະຕິບັດ.

ໃນພາກສະເໜີນີ້ຈະໃຫ້ຄຳນິຍາມຂອງການຟື້ນຟູ, ໂຄງຮ່າງຂອງວິທີການຄັດເລືອກການຈັດຕັ້ງປະຕິບັດຂອບການຟື້ນຟູ ແລະ ປຶກສາຫາລືກ່ຽວກັບຄວາມສອດຄ່ອງກັບຍຸດທະສາດ ແລະ ແຜນງານແຫ່ງຊາດອື່ນໆ ລວມທັງ ການເຊື່ອມໂຍງເຂົ້າກັບຂອບວຽກ ແລະ ຄຳໝັ້ນສັນຍາຕໍ່ກັບສາກົນ, ເຄື່ອງມືດ້ານກົດໝາຍ, ເຊັ່ນດຽວກັບພາບລວມຂອງຂອບການຕິດຕາມ ແລະ ປະເມີນຜົນ.

## 2.1 ຄຳນິຍາມຂອບການຟື້ນຟູເສດຖະກິດ

ອີງຕາມຄຳແນະນຳຂອງອົງການສະຫະປະຊາຊາດກ່ຽວກັບການຊ່ວຍເຫຼືອເພື່ອສ້າງຄວາມທົນທານ/ການຟື້ນຟູໃຫ້ສັງຄົມ[2]:

> *"ການຟື້ນຟູ/ຄວາມທົນທານ ແມ່ນຄວາມສາມາດຂອງບຸກຄົນ, ຄົວເຮືອນ, ຊຸມຊົນ, ເມືອງ, ສະຖາບັນ, ລະບົບ ແລະ ສັງຄົມເພື່ອປ້ອງກັນ, ຕ້ານ, ດູດຊັບ, ປັບຕົວ, ຕອບໂຕ້ ແລະ ຟື້ນຟູໃນທາງບວກຢ່າງມີປະສິດທິພາບ ແລະ ປະສິດທິຜົນໃນເວລາທີ່ປະເຊີນກັບຄວາມສ່ຽງທີ່ຫຼາກຫຼາຍ, ໃນຂະນະດຽວກັນກໍຮັກສາລະດັບການເຄື່ອນໄຫວທີ່ເປັນທີ່ຍອມຮັບໂດຍບໍ່ກະທົບຕໍ່ໂອກາດໃນໄລຍະຍາວ ສຳລັບການພັດທະນາທີ່ຍືນຍົງ, ຄວາມສະຫງົບສຸກ ແລະ ຄວາມໝັ້ນຄົງ, ສິດທິມະນຸດ ແລະ ການເປັນຢູ່ທີ່ດີຂອງທຸກຄົນ."*

ຈຸດສຸມຂອງຂອບການຟື້ນຟູເສດຖະກິດ ແມ່ນການເພີ່ມທະວີຄວາມສາມາດໃນການຟື້ນຟູ ແລະ ສ້າງຄວາມທົນທານຂອງ ສປປ ລາວ, ເຊິ່ງເຮັດໄດ້ດັ່ງນີ້:

- ***ການປະເມີນຄວາມສ່ຽງ,*** ເຊິ່ງເຂົ້າໃຈວ່າ "*ຜົນຂອງການພົວພັນລະຫວ່າງໄພຂົ່ມຂູ່ ຫຼື ໄພອັນຕະລາຍ ແລະ ຄຸນລັກສະນະທີ່ເຮັດໃຫ້ປະຊາຊົນແລະສະຖານທີ່ ພົບກັບຄວາມບອບບາງຈາກໄພຂົ່ມຂູ່ ຫຼື ໄພອັນຕະລາຍ ແລະ ຄວາມສາມາດໃນການຄຸ້ມຄອງຄວາມສ່ຽງ*"
- ***ການຈັດການກັບຕົວຂັບເຄື່ອນຄວາມສ່ຽງ,*** "*(…) ຫຼື ປັດໃຈສ່ຽງ, ຄວາມກົດດັນ - [ທີ່] ຖືເປັນຂະບວນການ ຫຼື ເງື່ອນໄຂ ເຊິ່ງມັກກ່ຽວຂ້ອງກັບການພັດທະນາ ແລະ ຄວາມບໍ່ສະເໝີພາບ ທີ່ມີອິດທິພົນຕໍ່ລະດັບ*

[2] https://unsdg.un.org/sites/default/files/2021-09/UN-Resilience-Guidance-Final-Sept.pdf

*ຄວາມສ່ຽງ ໂດຍການປະກອບສ່ວນເຂົ້າໃນການສຳພັດ/ເປີດຮັບ ແລະ ຄວາມບອບບາງ ຫຼື ການຫຼຸດຜ່ອນຄວາມສາ ມາດ*".

- ດ້ວຍ ***ຄຳນິຍາມກວ້າງໆຂອງຕົວຂັບເຄື່ອນຄວາມສ່ຽງ,*** ທີ່ລວມເອົາ "*ໄພທຳມະຊາດ, ໄພຈາກມະນຸດ ແລະ ເຕັກໂນໂລຊີ, ພະຍາດລະບາດ, ເສດຖະກິດ, ໄພອັນຕະລາຍ, ຂໍ້ຂັດແຍ່ງ, ຄວາມບໍ່ປອດໄພ, ແລະ ການລະເມີດສິດທິມະນຸດ*"
- ດ້ວຍ ***ການພິຈາລະນາຄວາມຫຼາກຫຼາຍຂອງພາກສ່ວນກ່ຽວຂ້ອງ,*** ທີ່ວ່າ "*ການສ້າງຄວາມທົນທານ ສາມາດຫຼຸດຜ່ອນຄວາມສ່ຽງທີ່ຫຼາກຫຼາຍໃນບັນດາຂະແໜງການ ແລະ ລະບົບຕ່າງໆ*"
- ດ້ວຍວິທີການທີ່ເປັນລະບົບ, ດ້ວຍມຸມມອງ ແລະ ມາດຕາສ່ວນທີ່ແຕກຕ່າງກັນ, ທີ່ວ່າ "*ການທີ່ມີຄວາມສັບສົນ ແລະ ການພົວພັນກັນຫລາຍຂຶ້ນລະຫວ່າງຄົນ, ເສດຖະກິດ, ການເມືອງ ແລະ ທຳມະຊາດ, ຈະເຮັດໃຫ້ຄວາມສ່ຽງເປັນລະບົບທີ່ເພີ່ມຂຶ້ນ*"

ດັ່ງນັ້ນ, ສັງຄົມທີ່ມີຄວາມທົນທານໄດ້ຖືກກຳນົດໂດຍ "*ລະບົບ, ສະຖາບັນ ແລະ ປະຊາຊົນ [ທີ່ມີ] ຊຸດຄວາມສາມາດ ແລະ ຊັບພະຍາກອນທີ່ແຕກຕ່າງກັນ ທີ່ສາມາດຮັບມື, ທົນທານຕໍ່ເຫດການທາງລົບ ແລະ ເຫດການທີ່ຮຸນແຮງ*". ຄວາມສາມາດເຫຼົ່ານີ້ລວມມີ:

- ຄວາມສາມາດໃນການດູດຊັບ
- ຄວາມສາມາດໃນການປັບຕົວ
- ຄວາມສາມາດທີ່ຄາດຄະເນໄວ້
- ຄວາມສາມາດໃນການປ້ອງກັນ
- ຄວາມສາມາດໃນການຫັນປ່ຽນ

## 2.2 ການກຳນົດການຈັດຕັ້ງປະຕິບັດສຳລັບຂອບການຟື້ນຟູເສດຖະກິດ

ຈຸດປະສົງຂອງຂອບການຟື້ນຟູເສດຖະກິດສະບັບນີ້ແມ່ນຮັບຟັງການປຶກສາຫາລືຈາກທຸກພາກສ່ວນ ແລະ ສັງລວມມາເປັນມາດຕະການໄລຍະສັ້ນ-ໄລຍະກາງ ເພື່ອຟື້ນຟູເສດຖະກິດຈາກວິກິດການ 4F ໃຫ້ຍືນຍົງ ເຊັ່ນ ນໍ້າມັນເຊື້ອໄຟ , ອາຫານ, ຝຸ່ນ (ປຸ໋ຍ) ແລະ ການເງິນ, ຄວາມທ້າທາຍທາງເສດຖະກິດໃນປັດຈຸບັນ ແລະ ການລະບາດຂອງພະຍາດໂຄວິດ 19 ຕະຫຼອດຮອດການດຳເນີນງານ ເພື່ອສ້າງຄວາມທົນທານສຳລັບວິກິດການໃນອະນາຄົດ. ການພັດທະນາຂອບການຟື້ນຟູເສດຖະກິດໄດ້ຮັບຄຳແນະນຳຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງກວ້າງຂວາງ ແລະ ລະອຽດຖີ່ຖ້ວນ.

ໂດຍສະເພາະ, ການປຶກສາຫາລືຈາກຫລາຍພາກສ່ວນ ທັງຈາກບັນດາກະຊວງ, ອົງການສະຫະປະຊາຊາດ, ຄູ່ຮ່ວມພັດທະນາ, ພາກເອກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ໃນຂອບການຟື້ນຟູເສດຖະກິດຂອງ ສປປ ລາວ ທີ່ແນໃສ່:

- ສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 9 ແລະ ການແນະນຳເພີ່ມເຕີມຈາກແຜນຍຸດທະສາດການເງິນ ແລະ ແຜນຂະແໜງການ ພ້ອມທັງວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ເອກະສານອື່ນໆທີ່ມີຢູ່ແລ້ວ ເພື່ອແກ້ໄຂບູລິມະສິດອັນຮີບດ່ວນລະດັບຊາດ;

- ສອດຄ່ອງກັບເອກະສານສຳຄັນອື່ນໆລວມທັງຂອບການຟື້ນຟູການລະບາດຂອງພະຍາດໂຄວິດ 19 ແບບຮອບດ້ານຂອງອາຊຽນ ແລະ ແຜນການຈັດຕັ້ງປະຕິບັດ ແລະ ຍຸດທະສາດໃນການຂ້າມຜ່ານແບບຄ່ອງຕົວເພື່ອອອກຈາກສະຖານະພາບປະເທດດ້ອຍພັດທະນາ (ຢູ່ໃນຂັ້ນຕອນຮ່າງ);
- ສຸມໃສ່ການປະຕິບັດໄລຍະສັ້ນ ຫາ ໄລຍະກາງ (ໄລຍະເວລານັບຈາກນີ້ ຮອດປີ 2025) ທີ່ອາດຈະເຊື່ອມໄປໃສ່ແຜນຫ້າປີໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 10;
- ສຸມໃສ່ການຈັດຕັ້ງປະຕິບັດທີ່ມີທ່າແຮງແລະງົບປະມານໃຊ້ຈ່າຍໃນການຈັດຕັ້ງປະຕິບັດທີ່ຂ້ອນຂ້າງຕໍ່າ ເຊັ່ນດຽວກັນກັບການສ້າງຄວາມເຂັ້ມແຂງໃຫ້ກັບໂຄງການ ແລະ ແຜນງານທີ່ມີຢູ່ແລ້ວ;
- ພິຈາລະນາບົດຮຽນທີ່ຖອດຖອນໄດ້ຈາກປະເທດອື່ນ; ແລະ
- ຍົກສູງຄວາມພະຍາຍາມໃນການສັງລວມຂໍ້ມູນໃນປັດຈຸບັນ ເຊັ່ນ "ແຜນງານຮ່ວມກັນກ່ຽວກັບຂໍ້ມູນທີ່ມີຄວາມລະອຽດສູງ" ນຳພາໂດຍສະພາວິທະຍາສາດ ແລະ ເສດຖະກິດຂອງລາວ (LASES) ໂດຍໄດ້ຮັບການສະໜັບສະໜູນຈາກອົງການສະຫະປະຊາຊາດທີ່ເປັນສ່ວນໜຶ່ງຂອງກອງທຶນສຸກເສີນເພື່ອການພັດທະນາແບບຍືນຍົງ, ເຊິ່ງຈຸດປະສົງແມ່ນເພື່ອສ້າງຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບສະຫວັດດີການຂອງປະຊາຊົນ, ໂດຍສະເພາະຜູ້ທີ່ມີຄວາມສ່ຽງຫຼາຍທີ່ສຸດ ທີ່ໄດ້ຮັບຜົນກະທົບຈາກວິກິດການ 4F.

ສະຖາບັນຄົ້ນຄວ້າວິໄຈການພັດທະນາ ຂອງກະຊວງແຜນການ ແລະ ການລົງທຶນ ໂດຍໄດ້ຮັບການສະໜັບສະໜູນຈາກ UNRCO ໄດ້ຈັດກອງປະຊຸມອອນລາຍ ກັບຄູ່ຮ່ວມພັດທະນາ ແລະ ຕົວແທນພາກລັດ ໃນຫ້າຫົວຂໍ້, ທີ່ໄດ້ແຈ້ງໃຫ້ຊາບກ່ຽວກັບການຄັດເລືອກການຈັດຕັ້ງປະຕິບັດສຳລັບຂອບການຟື້ນຟູເສດຖະກິດ. ການປຶກສາຫາລືອອນລາຍກ່ຽວກັບຫ້າເສົາຄໍ້າໄດ້ຊ່ວຍ (i) ກຳນົດບູລິມະສິດໃນການຈັດຕັ້ງປະຕິບັດ, ຕາມຄວາມຈຳເປັນ; (ii) ໃຫ້ຄຳແນະນຳ ເພື່ອເພີ່ມຄວາມທົນທານສຳລັບແຕ່ລະເສົາຄໍ້າ; ແລະ (iii) ຮັບປະກັນວ່າແຕ່ລະເສົາຄໍ້າແມ່ນສອດຄ່ອງກັບແຜນພັດທະ ນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 9, ວາລະແຫ່ງຊາດ ແລະ ແຜນຂອງຂະແໜງການ.

ໃນແຕ່ລະກຸ່ມຫົວຂໍ້ໄດ້ມີຕາຕະລາງໜ້າວຽກທີ່ສອດຄ່ອງກັບຈຸດປະສົງຂອງກອງປະຊຸມເພື່ອນຳມາປຶກສາຫາລື. ໃນເດືອນກັນຍາ ແລະ ຕຸລາ 2022, ໄດ້ມີການປຶກຫາລືກັບຫຼາຍພາກສ່ວນທີ່ເປັນຜູ້ຈັດຕັ້ງປະຕິບັດຕົວຈິງ ໂດຍເປັນກອງປະຊຸມຂັ້ນລັດຖະມົນຕີ ໃນການປະກອບຄຳຄິດເຫັນເຂົ້າໃນຂອບການຟື້ນຟູເສດຖະກິດ.

## 2.3 ສອດຄ່ອງກັບຍຸດທະສາດ ແລະ ແຜນທີ່ມີຢູ່

ຂອບການຟື້ນຟູເສດຖະກິດແມ່ນອີງໃສ່ບັນດາຄຳໝັ້ນສັນຍາກັບສາກົນ-ພາກພື້ນ, ແຜນພັດທະນາແຫ່ງຊາດແລະ ຍຸດທະສາດຂອງຂະແໜງການ. ສິ່ງນີ້ເປັນປັດໃຈສຳຄັນເພື່ອຫຼີກເວັ້ນບໍ່ໃຫ້ບັນດາເປົ້າໝາຍຍຸດທະສາດຊໍ້າຊ້ອນ ຫຼື ແຂ່ງຂັນກັນເອງ ແລະ ຮັບປະກັນຄວາມສອດຄ່ອງກັບບັນດາເປົ້າໝາຍສາກົນແລະພາກພື້ນ ລວມທັງສະໜັບສະໜູນວາລະການພັດທະນາແບບຍືນຍົງປີ 2030 ເຊິ່ງເປົ້າໝາຍລວມແມ່ນເພື່ອບໍ່ປະປ່ອຍໃຜໄວ້ຢູ່ເບື້ອງຫຼັງ. ນອກຈາກນີ້, ຂອບການຟື້ນຟູຍັງໄດ້ຮັບການປັບປຸງເພື່ອກຳນົດຂັ້ນຕອນທີ່ຮັບປະກັນໃຫ້ແຜນພັດທະນາແຫ່ງຊາດແລະຍຸດທະສາດແຫ່ງຊາດທີ່ມີຢູ່ແລ້ວກວມເອົາຫຼັກການຂອງຄວາມທົນທານ, ເຊິ່ງລະບຸໄວ້ໃນພາກ 1.1.

ຕາຕະລາງ 1 ລາຍລະອຽດກ່ຽວກັບເປົ້າໝາຍການພັດທະນາແບບຍືນຍົງ ແລະ ການພັດທະນາໃນປັດຈຸບັນທີ່ວິກິດການສົ່ງຜົນກະທົບຕໍ່ອາຫານ, ຝຸ່ນ, ນໍ້າມັນເຊື້ອໄຟ ແລະ ການເງິນ, ຕົວຢ່າງຂອງ 4Fs.

**ຕາຕະລາງ 1: ຜົນກະທົບຂອງວິກິດ 4Fs ຕໍ່ວາລະການພັດທະນາແບບຍືນຍົງ 2030**

| ເສົາຄໍ້າ | ສະພາບການພາຍໃນປະເທດທີ່ເກີດຈາກການລະບາດຂອງໂຄວິດ 19 | ສອດຄ່ອງກັບເປົ້າໝາຍການພັດທະນາແບບຍືນຍົງ |
|---|---|---|
| ອາຫານ | • 49% ຂອງຄອບຄົວຫຼຸດຄ່າໃຊ້ຈ່າຍ ຫຼື ຫຼຸດການບໍລິໂພກອາຫານໃນຊ່ວງວິກິດໂຄວິດ 19.[3]<br>• 15% ຂອງຄົວເຮືອນບໍ່ສາມາດຈ່າຍຄ່າອາຫານຂັ້ນພື້ນຖານໄດ້ ເນື່ອງຈາກສູນເສຍວຽກເຮັດງານທຳ ແລະ ລາຍຮັບຂອງຄົວເຮືອນຫຼຸດລົງ.[4]<br>• ປະມານ 70% ຂອງຜູ້ຕອບແບບສອບຖາມ ຕອບວ່າການເພີ່ມຂຶ້ນຂອງລາຄາອາຫານໄດ້ສົ່ງຜົນກະທົບຕໍ່ຄົວເຮືອນຂອງເຂົາເຈົ້າ. ເຫດການດັ່ງກ່າວໄດ້ເພີ່ມຄວາມຮຸນແຮງຂອງຄວາມບໍ່ໝັ້ນຄົງດ້ານສະບຽງອາຫານ. ໃນຂະນະທີ່ປະມານ 1/3 ຂອງຄົວເຮືອນທີ່ໄດ້ຮັບຜົນກະທົບໄດ້ນຳລາຍຮັບທີ່ໄດ້ຈາກວຽກອື່ນ ແລະ ໃຊ້ເງິນສະສົມ, ຫຼື ອາໄສການລ່າສັດ ແລະ ເກັບອາຫານຕາມທຳມະຊາດ ເພື່ອຮັບມືກັບເຫດການເຫຼົ່ານີ້.[5]<br>• 36.5% ຂອງຄົວເຮືອນທີ່ໄດ້ຮັບຜົນກະທົບຈາກການເພີ່ມຂຶ້ນຂອງລາຄາອາຫານ ຮັບມືກັບບັນຫາດັ່ງກ່າວດ້ວຍການບໍລິໂພກອາຫານໜ້ອຍລົງ.[6] | **ເປົ້າໝາຍ SDG1:** ຍຸດຕິຄວາມທຸກຍາກທຸກຮູບແບບທົ່ວທຸກແຫ່ງ.<br>**ເປົ້າໝາຍ SDG2:** ຍຸດຕິຄວາມອຶດຫິວ, ບັນລຸການຄໍ້າປະກັນດ້ານສະບຽງອາຫານ ແລະ ປັບປຸງໂພຊະນາການ ແລະ ສົ່ງເສີມກະສິກຳແບບຍືນຍົງ<br>**ເປົ້າໝາຍ SDG3:** ຮັບປະກັນຊີວິດມີສຸຂະພາບດີ ແລະ ສົ່ງເສີມຄວາມເປັນຢູ່ທີ່ດີສຳລັບທຸກຄົນໃນທຸກຊ່ວງອາຍຸ.<br>**ເປົ້າໝາຍ SDG4:** ຮັບປະກັນການສຶກສາທີ່ມີຄຸນນະພາບ ແລະ ເທົ່າທຽມກັນ ແລະ ສົ່ງເສີມໂອກາດໃນການຮຽນຮູ້ຕະຫຼອດຊີວິດສຳລັບທຸກຄົນ |
| ຝຸ່ນ | ▪ ລາຄາຢາປາບສັດຕູພືດ ແລະ ຢາຂ້າຫຍ້າເພີ່ມຂຶ້ນຢ່າງຫຼວງຫຼາຍ, ໃນເດືອນກໍລະກົດ 2022, ສູງກວ່າໄລຍະດຽວກັນໃນປີ 2021, ເຊິ່ງຈຳກັດຄວາມສາມາດໃນການຊື້ຢ່າງຫຼວງຫຼາຍ. ລາຄາສານເຄມີກະສິກຳສູງຂຶ້ນເຮັດໃຫ້ມີການນຳໃຊ້ຕໍ່າ, ໂດຍສະເພາະບັນດາຊາວກະສິກອນຂະໜາດນ້ອຍທີ່ມີຄວາມສ່ຽງ, ເຊິ່ງມີແນວໂນ້ມທີ່ຈະສົ່ງຜົນກະທົບທາງລົບຕໍ່ຜົນຜະລິດຂອງພືດລະດູຝົນຕົ້ນຕໍ ໃນປີ 2022[7]<br>▪ ຕ່ອງໂສ້ການສະໜອງໄດ້ຮັບຜົນກະທົບ, ເຮັດໃຫ້ການໄຫຼວຽນຂອງວັດຖຸດິບທີ່ຈຳເປັນໃນບາງແຂວງຢຸດສະງັກ ເຊັ່ນ ເມັດພັນ, ຝຸ່ນ ແລະ ອຸປະກອນຕ່າງໆ[8] | **ເປົ້າໝາຍ SDG2:** ຍຸດຕິຄວາມອຶດຫິວ, ບັນລຸການຄໍ້າປະກັນດ້ານສະບຽງອາຫານ ແລະ ປັບປຸງໂພຊະນາການ ແລະ ສົ່ງເສີມກະສິກຳແບບຍືນຍົງ<br>**ເປົ້າໝາຍ SDG3:** ຮັບປະກັນຊີວິດມີສຸຂະພາບດີ ແລະ ສົ່ງເສີມຄວາມເປັນຢູ່ທີ່ດີສຳລັບທຸກຄົນໃນທຸກຊ່ວງອາຍຸ. |
| ການເງິນ | ▪ ອັດຕາການວ່າງງານເພີ່ມຂຶ້ນຈາກ 16% ໃນປີ 2018 ເປັນ 25% ໃນເດືອນກໍລະ ກົດ ປີ 2020 ໂດຍມີຜົນກະທົບຫຼາຍ | **ເປົ້າໝາຍ SDG1:** ຍຸດຕິຄວາມທຸກຍາກທຸກຮູບແບບທົ່ວທຸກແຫ່ງ. |

[3] Southichack, M., Siliphong, P. Inthakesone, B. *Socio-Economic Impact Assessment Of COVID-19 On Lao PDR*. Vientiane. UN Lao PDR, 2020
[4] Ibd.
[5] World Bank Group. *Monitoring COVID-19 Impacts on Households in Lao PDR,* June -July 2020, https://openknowledge.worldbank.org/bitstream/handle/10986/34741/Results-Snapshot-from-a-Rapid-Monitoring-Phone-Survey-of-Households.pdf?sequence=5&isAllowed=y, accessed on October 27, 2022
[6] Ibd.
[7] Food and Agricultural Organization, GIEW Update, *The Lao People's Democratic Republic Soaring prices and reduced availability of agricultural inputs curb 2022 agricultural production prospects, increasing risks for acute food insecurity, https://www.fao.org/3/cc2094en/cc2094en.pdf, accessed October 27, 2022*
[8] United Nation. 2020. *Socio-Economic Impact Assessment of COVID-19 on Lao PDR*
https://laopdr.un.org/sites/default/files/2021-04/UN%20Lao%20PDR%20SEIA%20COVID-19_EnglishFA2web.pdf

| | | |
|---|---|---|
| | ຕໍ່ກຸ່ມແມ່ຍິງໄວໜຸ່ມ 32.6% ໃນປີ 2020 ເຊິ່ງສູງຫຼາຍເມື່ອທຽບກັບຜູ້ຊາຍ 19.2%<br>▪ ການເຂົ້າເຖິງການບໍລິການດ້ານສຸຂະພາບຖືກຈຳກັດຫຼາຍຂຶ້ນ ເນື່ອງຈາກເປັນການປະກັນສຸຂະພາບຂັ້ນຕ່ຳ. ຄົວເຮືອນໃນເຂດຊົນນະບົດຍັງປະສົບກັບການເຂົ້າເຖິງການບໍລິການດ້ານສຸຂະພາບທີ່ຫຼຸດລົງ ເນື່ອງຈາກຂໍ້ຈຳກັດດ້ານການເດີນທາງໃນທ້ອງຖິ່ນ ແລະ ຄວາມສາມາດໃນການຊຳລະຄ່າໃຊ້ຈ່າຍອື່ນໆ ເຊັ່ນ: ຄ່າລົງທະບຽນ.<br>▪ ວຽກທີ່ກ່ຽວຂ້ອງກັບການເດີນທາງ ແລະ ການທ່ອງທ່ຽວຫຼຸດລົງ 18.5% ໃນປີ 2020<br>▪ ໄວໜຸ່ມອາຍຸ 18-24 ປີ ມີຄວາມສ່ຽງສູງຕໍ່ການວ່າງງານ, ສິ່ງຜົນກະທົບຕໍ່ຄວາມສາມາດໃນການດຳລົງຊີວິດທີ່ໝັ້ນຄົງ ແລະ ລາຍຮັບຂອງເຂົາເຈົ້າ<br>▪ ການສູນເສຍລາຍຮັບຂອງຈູນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍໃນປີ 2020 ຄາດຄະເນວ່າຈະປະເຊີນກັບສິ່ງທ້າທາຍຕື່ມອີກ ໃນໄລຍະສັ້ນ ຫາ ໄລຍະກາງ.<br>▪ ວິກິດການເສດຖະກິດສົ່ງຜົນກະທົບຢ່າງຫຼວງຫຼາຍຕໍ່ SDG 4: ເນື່ອງຈາກຊີວິດການເປັນຢູ່ ແລະ ລາຍຮັບຂອງຄອບຄົວຫຼຸດລົງ, ໂອກາດທີ່ເດັກນ້ອຍອອກຈາກໂຮງຮຽນມີຫຼາຍຂຶ້ນ ໂດຍສະເພາະຕັ້ງແຕ່ຂັ້ນມັດທະຍົມສຶກສາຂຶ້ນໄປ. ທະນາຄານໂລກໄດ້ດຳເນີນການສຳຫຼວດທາງໂທລະສັບກ່ຽວກັບຜົນກະທົບຂອງໂຄວິດ 19 (ໃນເດືອນເມສາ/ພຶດສະພາ 2022) ສະແດງໃຫ້ເຫັນວ່າ 65% ຂອງຄົວເຮືອນຫຼຸດຄ່າໃຊ້ຈ່າຍກ່ຽວກັບການສຶກສາ ແລະ ສຸຂະພາບ ເພື່ອຮັບມືກັບໄພເງິນເຟີ້.[9] | **ເປົ້າໝາຍ SDG2:** ຢຸດຕິຄວາມອຶດຫິວ, ບັນລຸການຄ້ຳປະ ກັນດ້ານສະບຽງອາຫານ ແລະ ປັບປຸງໂພຊະນາການ ແລະ ສົ່ງເສີມກະສິກຳແບບຍືນຍົງ<br>**ເປົ້າໝາຍ SDG3:** ສຸຂະພາບດີ ແລະ ການເປັນຢູ່ທີ່ດີ<br>**ເປົ້າໝາຍ SDG4:** ຄຸນນະພາບການສຶກສາ<br>**ເປົ້າໝາຍ SDG5:** ບັນລຸຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກຍິງທຸກຄົນ..<br>**ເປົ້າໝາຍ SDG8:** ສົ່ງເສີມການເຕີບໂຕຂອງເສດຖະກິດແບບຍືນຍົງ, ການຄອບຄຸມ ແລະ ການເຕີບໂຕຂອງເສດຖະກິດແບບຍືນຍົງ, ແລະ ການຈ້າງງານທີ່ມີປະສິດທິຜົນ ແລະ ມີວຽກເຮັດງານທຳທີ່ດີສຳລັບທຸກຄົນ.<br>**ເປົ້າໝາຍ SDG11:** ເຮັດໃຫ້ຕົວເມືອງ ແລະ ການຕັ້ງຖິ່ນຖານຂອງມະນຸດປອດໄພ, ທົນທານ ແລະ ຍືນຍົງ. |
| ນ້ຳມັນເຊື້ອໄຟ | ▪ ຄວາມຕ້ອງການ ແລະ ການນຳໃຊ້ໄຟຟ້າທັງພາຍໃນ ແລະ ຕ່າງປະເທດນັບມື້ນັບເພີ່ມຂຶ້ນ ນັບຕັ້ງແຕ່ມີການລະບາດຂອງພະຍາດໂຄວິດ 19 ເປັນຕົ້ນມາ.<br>▪ ການເພີ່ມຂຶ້ນຂອງລາຄານ້ຳມັນເຊື້ອໄຟ ແລະ ການຂາດແຄນນ້ຳມັນເຊື້ອໄຟ (ຕ້ອງການເອກະສານອ້າງອີງ)<br>▪ ການຂາດແຄນນ້ຳມັນເຊື້ອໄຟໃນລະດູປູກຝັງຍັງເຮັດໃຫ້ຊາວກະສິກອນຂະໜາດນ້ອຍພົບກັບຄວາມທ້າທາຍ ເຊັ່ນ ບໍ່ສາມາດໄຖ ແລະ ກະກຽມການເຮັດນາໄດ້ | **ເປົ້າໝາຍ SDG7:** ຮັບປະກັນການເຂົ້າເຖິງພະລັງງານທີ່ລາ ຄາບໍ່ແພງ, ເຊື່ອຖືໄດ້, ຍືນຍົງ ແລະ ທັນສະໄໝສຳລັບທຸກຄົນ.<br>**ເປົ້າໝາຍ SDG8:** ສົ່ງເສີມການເຕີບໂຕຂອງເສດຖະກິດແບບຍືນຍົງ, ການຄອບຄຸມ ແລະ ການເຕີບໂຕຂອງເສດຖຸກິດແບບຍືນຍົງ, ແລະ ການຈ້າງງານທີ່ມີປະສິດທິຜົນ ແລະ ມີວຽກເຮັດງານທຳທີ່ດີສຳລັບທຸກຄົນ. |

[9] World Bank Group. Monitoring the Impact of COVID-19 in Lao PDR. https://www.worldbank.org/en/country/lao/brief/monitoring-the-impact-of-covid-19-in-lao-pdr, accessed October 27, 2022

ກອບການຟື້ນຟູເສດຖະກິດແມ່ນສອດຄ່ອງ ແລະ ສະໜັບສະໜູນເອກະສານຍຸດທະສາດພາກພື້ນ ແລະ ຍຸດທະສາດແຫ່ງຊາດດັ່ງຕໍ່ໄປນີ້.

### ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 9 (2021-2025)

ຍຸດທະສາດນີ້ແມ່ນເອກະສານອ້າງອີງຫຼັກສໍາລັບການສ້າງຂອບການຟື້ນຟູເສດຖະກິດແຫ່ງຊາດ. ແຜນການ 5 ປີ ທີ່ວາງແນວ ທາງສໍາລັບການສ້າງທິດທາງໃໝ່ດ້ານເສດຖະກິດ-ສັງຄົມ ແລະ ໄດ້ແບ່ງອອກເປັນ (6) ຜົນໄດ້ຮັບ. ລວມມີ: (a) ບັນລຸການເຕີບໂຕທາງດ້ານເສດຖະກິດທີ່ມີຄຸນນະພາບຢ່າງຕໍ່ເນື່ອງ, ໝັ້ນຄົງ ແລະ ຍືນຍົງ; (b) ປັບປຸງຄຸນນະພາບຊັບພະຍາກອນມະນຸດ ເພື່ອຕອບສະໜອງການພັດທະນາ, ຄວາມສາມາດໃນການຄົ້ນຄວ້າ, ຄວາມຕ້ອງການທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ, ແລະ ການສ້າງມູນຄ່າເພີ່ມໃນການຜະລິດ ແລະ ການບໍລິການ; (c) ເພີ່ມທະວີການເປັນຢູ່ທີ່ດີຂອງປະຊາຊົນ; (d) ເພີ່ມທະວີການປົກປັກຮັກສາສິ່ງແວດລ້ອມ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ; (e) ການຮ່ວມມືໃນພາກພື້ນ ແລະ ສາກົນ ແລະ ການເຊື່ອມໂຍງເຂົ້າກັບພື້ນຖານໂຄງລ່າງທີ່ເຂັ້ມແຂງ ແລະ ນໍາໃຊ້ທ່າແຮງຂອງປະເທດ ແລະ ຄວາມໄດ້ປຽບທາງພູມມີສາດຢ່າງມີປະສິດທິພາບ; ແລະ (f) ປັບປຸງການຄຸ້ມຄອງ ແລະ ບໍລິຫານຂອງລັດ, ສັງຄົມມີຄວາມສະເໝີພາບ, ຍຸຕິທໍາ ແລະ ໄດ້ຮັບການປົກປ້ອງດ້ວຍກົດໝາຍທີ່ມີປະສິດທິຜົນ. ຜົນໄດ້ຮັບເຫຼົ່ານີ້ ເປັນພື້ນຖານຍຸດທະສາດໃຫ້ແກ່ການດໍາເນີນງານຂອງຂອບການຟື້ນຟູເສດຖະກິດ.

### ຍຸດທະສາດໃນການຂ້າມຜ່ານແບບຄ່ອງຕົວເພື່ອອອກຈາກສະຖານະພາບປະເທດດ້ອຍພັດທະນາ (STS)

ພາຍຫຼັງການທົບທວນ 3 ປີໃນປີ 2021 ໂດຍຄະນະກາມາທິການເພື່ອການພັດທະນາຂອງອົງການສະຫະປະຊາຊາດ, ພິຈາລະນາຄວາມຄືບໜ້າໃນເງື່ອນໄຂອັນສໍາຄັນທີ່ໄດ້ມີການທົບທວນໃນສັດຕະວັດທີ່ຜ່ານມາ, ສປປລາວສາມາດຜ່ານໄດ້ທັງສາມຟໂຖຄຕໄດ້ຖືກແນະນໍາເພື່ອໃຫ້ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ. ກະຊວງການຕ່າງປະເທດ ກໍາລັງນໍາພາຂະບວນການລະ ຫວ່າງກະຊວງ ເພື່ອພັດທະນາ STS ທີ່ລະບຸຂັ້ນຕອນສະເພາະ ເພື່ອສະໜັບສະໜູນການບັນລຸເປົ້າໝາຍ NSEDP ຄັ້ງທີ 9 ຜ່ານຂະບວນການສຶກສາ ແລະ ອື່ນໆ. ນອກນີ້ STS ມີສາມຈຸດປະສົງໃນການບັນລຸເປົ້າໝາຍ ຄື: (a) ຮັບປະກັນການອອກຈາກສະຖານະພາບປະເທດດ້ອຍພັດທະນາ; (b) ຫຼຸດຜ່ອນຜົນກະທົບທາງລົບທີ່ເປັນໄປໄດ້; ແລະ (c) ປະກອບສ່ວນເຂົ້າໃນເປົ້າໝາຍການພັດທະນາແບບຍືນຍົງ.

### ກອບການຟື້ນຟູຮອບດ້ານຂອງອາຊຽນ (ACRF)

ຂອບການຟື້ນຟູຮອບດ້ານຂອງອາຊຽນ (ACRF) ແລະແຜນການຈັດຕັ້ງປະຕິບັດມີຈຸດປະສົງເພື່ອແກ້ໄຂຕາມເປົ້າໝາຍຂອງທັງສອງໜ້າວຽກຂອງອາຊຽນ, ໃນໄລຍະຂັ້ນຕອນການເປີດປະເທດຄືນໃໝ່ ເພື່ອໃຫ້ສາມາດມີຜົນສໍາເລັດໃນການຫັນປ່ຽນໄປສູ່ 'ປົກກະຕິແບບໃໝ່ - new normal' ເຊັ່ນດຽວກັນກັບເປົ້າໝາຍໄລຍະກາງ ແລະ ໄລຍະຍາວໂດຍຜ່ານຂັ້ນຕອນຕ່າງໆຈາກການຟື້ນຟູຈາກໂຄວິດ-19 ແລະ ສ້າງຄວາມທົນທານໄດ້ໃນໄລຍະຍາວ. ຂໍ້ລິເລີ່ມ ແລະ ແຜນງານທີ່ໄດ້ຮັບການປະຕິບັດໃນຂັ້ນຕອນນີ້ ຈະຕ້ອງມີລັກສະນະເປັນການຄາດຄະເນລ່ວງໜ້າທີ່ສະໜັບສະໜູນໃຫ້ແກ່ການວາງຈຸດປະສົງໃນໄລຍະຍາວ, ແລະ ອາດຈະໃຫ້ຂໍ້ມູນອ້າງອີງສາລັບການເຊື່ອມສານລະດັບພາກພື້ນໃນຂັ້ນຕອນຕໍ່ໄປຂອງອາຊຽນ (ACRF 2020 p.16-17).[10] ການຈັດຕັ້ງປະຕິບັດຂອງ ACRF ຢູ່ພາຍໃຕ້ແນວ ທາງສາມແງ່ມຸມ ທີ່ສະທ້ອນໃຫ້ເຫັນໃນກອບການຟື້ນຟູຂອງ ສປປ ລາວ (ເບິ່ງ**ແຜນວາດ** 1).

[10] ASEAN Comprehensive Recovery Framework https://asean.org/wp-content/uploads/2020/11/2-FINAL-ACRF_adopted-37th-ASEAN-Summit_12112020.pdf, accessed August 4, 2022

**ແຜນວາດ 1: ສາມໄລຍະຂອງການຟື້ນຟູ (3 Rs)**

**ການກັບມາເປີດປະເທດຄືນໃໝ່**

- ໄລຍະເວລາຂອງສະພາບການແຜ່ລະບາດທີ່ແຕກຕ່າງກັນໃນທົ່ວພາກພື້ນ
- ຈໍາເປັນຕ້ອງມີເງື່ອນໄຂໃນແຕ່ລະຂະແໜງການສໍາລັບການກັບຄືນມາເປີດປະເທດຄືນໃໝ່
- ເສດຖະກິດຈະກັບມາເປີດຄືນໄດ້ຢ່າງປອດໄພ ໃນຂະນະດຽວກັນກໍສາມາດຫຼຸດຄວາມສ່ຽງຂອງການກັບຄືນມາຂອງໄວຣັສ

→

**ການຟື້ນຟູ**

- ຂອບເວລາສໍາລັບໄລຍະການຟື້ນຟູນີ້ຈະບັນລຸໄດ້ກໍ່ຕໍ່ເມື່ອສໍາເລັດການຟື້ນຟູທັງໝົດ
- ສຸມໃສ່ການຊ່ວຍເຫຼືອຂະແໜງການ/ກຸ່ມທີ່ໄດ້ຮັບຜົນກະທົບຈາກພະຍາດລະບາດ
- ໃນໄລຍະນີ້, ກິດຈະກໍາທາງເສດຖະກິດຈະກັບຄືນສູ່ລະດັບກ່ອນໂຄວິດ

→

**ການຟື້ນຟູ/ຄວາມທົນທານ**

- ໄລຍະເວລາຂອງການເຊື່ອມໂຍງກັບວິໄສທັດລວມໄລຍະຍາວຂອງອາຊຽນ
- ສຸມໃສ່ການປະກອບສ່ວນໃຫ້ເກີດຄວາມຢືດຢຸ່ນ/ທົນທານ/ຄວາມສາມາດໃນການຮັບມືກັບເຫດການຕ່າງໆໃນພາກພື້ນໃນໄລຍະຍາວ
- ໄລຍະທີ່ຮັບຮູ້ເຖິງແນວໂນ້ມໃໝ່ ແລະ ສິ່ງທ້າທາຍທີ່ພົ້ນເດັ່ນ ແລະ ຄວາມສ່ຽງຕໍ່ການແຜ່ລະບາດຂອງພະຍາດໃນອະນາຄົດ

ແຫຼ່ງຂໍ້ມູນ: ຂອບການຟື້ນຟູຮອບດ້ານຂອງອາຊຽນ 2020.

**ຖະແຫຼງການວຽງຈັນກ່ຽວກັບການຮ່ວມມືພັດທະນາຢ່າງມີປະສິດທິພາບ (2016-2025)**

ຖະແຫຼງການວຽງຈັນວ່າດ້ວຍການເປັນຄູ່ຮ່ວມມືເພື່ອການພັດທະນາຢ່າງມີປະສິດທິພາບ ເຊິ່ງເປັນການຕົກລົງກັນລະຫວ່າງລັດຖະບານ ແລະ ຄູ່ຮ່ວມພັດທະນາ ໃນການເສີມສ້າງການເປັນຄູ່ຮ່ວມງານເພື່ອການພັດທະນາການຮ່ວມມືຢ່າງມີປະສິດທິຜົນໃນ ສປປລາວ. ເຊິ່ງມີຈຸດປະສົງເພື່ອສະໜັບສະໜູນການບັນລຸຜົນສໍາເລັດຂອງເປົ້າໝາຍ SDG 17 ແລະ ການບັນລຸຄວາມຄາດຫວັງຂອງ NSEDP ຄັ້ງທີ 9.

## 2.4 ການຄຸ້ມຄອງຄວາມສ່ຽງ ແລະ ການປະສານງານຂອງຂອບການຟື້ນຟູເສດຖະກິດ

ຂອບວຽກການກໍານົດຄວາມສ່ຽງ ແລະ ຫຼຸດຜ່ອນຄວາມສ່ຽງ (ເບິ່ງ**ພາກທີ 4**) ກໍານົດການຟື້ນຕົວຂອງສາກົນຈາກການລະບາດຂອງໂຄວິດ 19 ໃນໄລຍະ 2 ປີ ທ່າມກາງພາວະເສດຖະກິດຖົດຖອຍທົ່ວໂລກ ເປັນຄວາມສ່ຽງອັນສໍາຄັນທີ່ສົ່ງຜົນຕໍ່ການຈັດຕັ້ງປະຕິບັດຂອບການຟື້ນຟູເສດຖະກິດ. ກະຊວງແຜນການ ແລະ ການລົງທຶນຖືກມອບໝາຍໃຫ້ຄຸ້ມຄອງຂອບວຽກການຕິດຕາມກວດກາ ແລະ ປະເມີນຜົນຢ່າງມີປະສິດທິຜົນ ໂດຍຈະໄດ້ຮັບການສະໜັບສະໜູນຈາກໜ່ວຍປະສານງານຕົ້ນຕໍຂອງແຕ່ລະກະຊວງ.

# 3 ເນື້ອໃນ

ຮອດປີ 2020, ສປປ ລາວ ເປັນປະເທດໜຶ່ງທີ່ມີເສດຖະກິດເຕີບໂຕໄວທີ່ສຸດໃນອາຊີຕາເວັນອອກສ່ຽງໃຕ້ ແລະ ເປັນປະເທດທີ່ມີລາຍຮັບຕໍ່າໃນປີ 2011. ໃນປີ 1992/1993 ອັດຕາຄວາມທຸກຍາກຢູ່ທີ່ 46% ຫຼຸດລົງເຫຼືອ 23.2% ແລະ 18.3% ໃນປີ 2012/2013 ແລະ 2018/2019 ຕາມລໍາດັບ.[11] ການລະບາດຂອງພະຍາດໂຄວິດ-19 ກໍ່ໃຫ້ເກີດວິກິດລະດັບໂລກຢ່າງທີ່ບໍ່ເຄີຍມີມາກ່ອນ ແລະ ຍັງມີຄວາມສ່ຽງທີ່ຈະເຮັດໃຫ້ຄວາມຄືບໜ້າຂອງການຫຼຸດຜ່ອນຄວາມ ທຸກຍາກແລະການບັນລຸເປົ້າໝາຍການພັດທະນາແບບຍືນຍົງພົບບັນຫາ; ດ້ວຍເຫດນີ້ ເຮັດໃຫ້ມີຄວາມກັງວົນກ່ຽວກັບໂອກາດໃນການຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາທີ່ຍືນຍົງ ເຊິ່ງຜົນກະທົບນີ້ນໍາໄປສູ່ຄວາມກັງ ວົນທີ່ມີຄວາມກົດດັນຫຼາຍຂຶ້ນ.

ເດືອນກຸມພາ 2022, ຜົນກະທົບຈາກຄວາມຂັດແຍ່ງໃນປະເທດຢູເຄນ ສົ່ງຜົນໃຫ້ອັດຕາເງິນເຟີ້ໃນທົ່ວໂລກເພີ່ມຂຶ້ນ ແລະ ຄ່າເງິນຂອງປະເທດອ່ອນຄ່າລົງຢ່າງໄວວາ ລວມເຖິງຄວາມທ້າທາຍທາງເສດຖະກິດມະຫາພາກຂອງ ສປປ ລາວ ທີ່ໄດ້ສົ່ງຜົນກະທົບຕໍ່ຄ່າຄອງຊີບຢ່າງໜັກໜ່ວງ.

ໃນພາກນີ້ຈະສະແດງໃຫ້ເຫັນຜົນກະທົບຂອງການແຜ່ລະບາດ (ເບິ່ງ**ພາກທີ 2.1**) ແລະ ຜົນກະທົບຕໍ່ອາຫານ, ຝຸ່ນ, ນໍ້າມັນເຊື້ອໄຟ ແລະ ການເງິນ (ເບິ່ງ**ພາກທີ 2.2**).

## 3.1 ຜົນກະທົບຂອງ COVID-19

COVID-19 ແລະ ຂໍ້ຈໍາກັດໃນການສະກັດກັ້ນການແຜ່ລະບາດຂອງພະຍາດດັ່ງກ່າວ ເຮັດໃຫ້ມີຄວາມບອບບາງທາງດ້ານໂຄງສ້າງຂອງ ສປປລາວ ຮ້າຍແຮງຂຶ້ນເລື້ອຍໆ ແລະ ເຮັດໃຫ້ຄວາມບອບບາງເກີດຂຶ້ນໃໝ່ໃນຫຼາຍພື້ນທີ່. ຂອບການຟື້ນຟູເສດຖະກິດຈະດໍາເນີນການວິເຄາະ 5 ເສົາຄໍ້າດັ່ງນີ້:

### COVID-19 ແລະ ສະພາບແວດລ້ອມການເງິນມະຫາພາກ

COVID-19 ເຮັດໃຫ້ການເຕີບໂຕທາງດ້ານເສດຖະກິດມີຈັງວະທີ່ຊ້າລົງ ແລະ ອາດສົ່ງຜົນສະທ້ອນເຖິງການພັດທະນາຕ່າງໆໃນໄລຍະຜ່ານມາໃນລະດັບໃດໜຶ່ງ. ອັດຕາການເຕີບໂຕເລີ່ມຊ້າລົງກ່ອນການແຜ່ລະບາດຂອງພະຍາດ: ຫຼຸດລົງຈາກ 6.3% ໃນປີ 2018 ເປັນ 5.5% ໃນປີ 2019, ກ່ອນທີ່ຈະຫຼຸດລົງຕື່ມອີກເປັນ 3.3% ໃນປີ 2020 ເຊິ່ງ ເປັນລະດັບຕໍ່າສຸດໃນຮອບສາມທົດສະວັດ. ການນໍາໃຊ້ມາດຕະການດ້ານສາທາລະນະສຸກທີ່ມີປະສິດທິພາບໄດ້ສົ່ງຜົນໃຫ້ສາມາດຫຼຸດຜ່ອນການແຜ່ລະບາດຂອງພະຍາດດັ່ງກ່າວ, ແຕ່ໃນຂະນະດຽວກັນ ການລະບາດຂອງພະຍາດດັ່ງກ່າວພັດສົ່ງຜົນຕໍ່ການຈ້າງງານທີ່ຕ້ອງໄດ້ຢຸດສະຫງັກ ແລະ ເຮັດໃຫ້ລາຍໄດ້ຫຼຸດລົງ ເນື່ອງຈາກຫຼາຍຂະແໜງການໄດ້ຮັບຜົນກະທົບດັ່ງກ່າວຢ່າງໜັກ. ການຫຼຸດລົງຂອງການເຄື່ອນໄຫວທາງເສດຖະກິດໄດ້ສົ່ງຜົນໃຫ້ອັດຕາການວ່າງງານເພີ່ມຂຶ້ນເປັນ 23.4% ໃນຂະນະທີ່ການກັບຄືນມາຂອງແຮງງານອົບພະຍົບຈໍານວນຫຼວງຫຼາຍ ເຮັດໃຫ້ສູນເສຍການສົ່ງເງິນກັບບ້ານຈໍານວນຫຼາຍ (ເປັນແຫຼ່ງລາຍໄດ້ຫຼັກຂອງຄົວເຮືອນ ເຊິ່ງກວມເອົາເກືອບ 10%)[12], ແລະ ອັດຕາຄວາມທຸກຍາກເພີ່ມຂຶ້ນ. ໂຄງການ ADB (2022) ຄາດຄະເນວ່າເສດຖະກິດລາວຈະເຕີບໂຕ 2.5% ໃນປີ 2022 ແລະ 3.5% ໃນ

[11] United Nations Department of Social and Economic Affairs. *Developing the strategic guidelines for climate financing, considering possible linkages between climate financing and post COVID-19 agricultural development in Lao PDR, https://www.un.org/development/desa/dpad/wp-content/uploads/sites/45/DESA-Intdiv-LAO.pdf, accessed on August 4, 2022*

[12] Background Paper of the Multi-Stakeholder Taskforce to Study the Impact of COVID-19: Financing for Sustainable Development and Effective Development Cooperation (Macro-Fiscal Framework). November 2021.

ປີ 2023.[13] ອີງຕາມ Asian Development Outlook (2022), ທຸລະກິດສ່ວນຫຼາຍໄດ້ກັບຄືນສູ່ການດຳເນີນງານປົກກະຕິໃນເຄິ່ງປີທຳອິດ, ຈຳນວນນັກທ່ອງທ່ຽວສາກົນເພີ່ມຂຶ້ນ. ລາຄາສິນຄ້າມີການເໜັງຕີງສູງຂຶ້ນ ໂດຍສະເພາະແມ່ນນ້ຳມັນເຊື້ອໄຟ, ຄ່າຄອງຊີບທີ່ເພີ່ມຂຶ້ນ ສົ່ງຜົນໃຫ້ການບໍລິໂພກພາຍໃນຫຼຸດລົງ. ລາຄາຝຸ່ນ, ອາຫານສັດ, ອາຫານ ແລະ ນ້ຳມັນເຊື້ອໄຟເພີ່ມຂຶ້ນຢ່າງໄວ ເຮັດໃຫ້ກິດຈະກຳທາງດ້ານກະສິກຳ ແລະ ການຜະລິດຫຼຸດລົງ. ທ່າອ່ຽງເຫຼົ່ານີ້ເຮັດໃຫ້ການຟື້ນຕົວຂອງເສດຖະກິດຊັກຊ້າ.

### COVID-19 ແລະ ຜົນກະທົບຕໍ່ການຄ້າ ແລະ ພາກເອກະຊົນ, ຕ່ອງໂສ້ມູນຄ່າ ແລະ ການທ່ອງທ່ຽວ

ສະພາບແວດລ້ອມທາງທຸລະກິດທີ່ຊັບຊ້ອນ ແລະ ຄຸມເຄືອ ເຊິ່ງເປັນອຸປະສັກຕໍ່ການຄ້າ ແລະການເຊື່ອມໂຍງກັບພາກພື້ນ ໄດ້ຈຳກັດການດຶງດູດການລົງທຶນຂອງ ສປປ ລາວ. ການແຜ່ລະບາດຂອງໂຄວິດ 19 ເຮັດໃຫ້ສິ່ງທ້າທາຍດ້ານການຄ້າຮຸນແຮງຂຶ້ນ ດ້ວຍການຂັດຂວາງລະບົບຕ່ອງໂສ້ການສະໜອງລະຫວ່າງປະເທດ, ການບໍລິໂພກຂອງເອກະຊົນຫຼຸດລົງ ແລະ ຄວາມຕ້ອງການຈາກພາຍນອກຫຼຸດລົງ. ອຸດສາຫະກຳຕັດຫຍິບໄດ້ຮັບຜົນກະທົບຢ່າງໜັກໜ່ວງ ດ້ວຍອັດຕາການເຕີບໂຕຫຼຸດລົງ 14.3%; ອຸດສາຫະກຳເຄື່ອງດື່ມຫຼຸດລົງ 12.7% ແລະ ການຜະລິດເຄື່ອງເຟີນີເຈີ້ຫຼຸດລົງ 9.8%. ແມ່ຍິງທີ່ເຮັດວຽກໃນອຸດສາຫະກຳຕັດຫຍິບເສື້ອຜ້າ ແລະ ອຸປະກອນອີເລັກໂຕນິກໄດ້ຮັບຜົນກະທົບທີ່ບໍ່ສົມສ່ວນ. ກ່ອນປີ 2020 ຂະແໜງການທ່ອງທ່ຽວຖືວ່າເປັນຂະແໜງທີ່ປະກອບສ່ວນສາຄັນໃນເສດຖະກິດຂອງ ສປປ ລາວ, ໂດຍສ້າງລາຍຮັບຈາກອັດຕາແລກປ່ຽນຫຼາຍກວ່າ 900 ລ້ານໂດລາສະຫະລັດໃນປີ 2019. ການແຜ່ລະບາດເຮັດໃຫ້ ການພັດທະນານີ້ຢຸດຊະງັກກະທັນຫັນ - ທຸລະກິດຂະແໜງທີ່ພັກ (ໂຮງແຮມ) ປະສົບບັນຫາຂາດທຶນຫຼາຍທີ່ສຸດ.

### COVID-19 ແລະ ຜົນກະທົບຕໍ່ການກະກຽມຄວາມພ້ອມດ້ານນະໂຍບາຍສຳລັບວຽກງານທີ່ເປັນທຳ

COVID-19 ສົ່ງຜົນກະທົບຕໍ່ຜູ້ດ້ອຍໂອກາດ ແລະຜູ້ທີ່ມີຄວາມບອບບາງຫຼາຍທີ່ສຸດ, ໂດຍສະເພາະບຸກຄົນໃນເສດຖະກິດນອກລະບົບ ແລະວຽກງານທີ່ບໍ່ປອດໄພ, ແຮງງານທີ່ມີທັກສະຕ່ຳ, ແຮງງານເຄື່ອນຍ້າຍ ແລະກຸ່ມຊົນເຜົ່າ (ILO 2021).[14] ມີການເອື່ອຍອີງໃສ່ການສົ່ງເງິນກັບບ້ານຂອງແຮງງານສູງ. ແຮງງານເຄື່ອນຍ້າຍທີ່ສົ່ງເງິນກັບບ້ານກ່ອນເກີດໂຄວິດ 19 ໄດ້ຢຸດຕິການສົ່ງເງິນທັງໝົດ ຫຼື ມີຈຳນວນຫຼຸດລົງຢ່າງຫຼວງຫຼາຍ. ໃນປີ 2020, ທະນາຄານໂລກປະເມີນວ່າການສົ່ງເງິນກັບບ້ານຫຼຸດລົງຫຼາຍກວ່າ 125 ລ້ານໂດລາສະຫະລັດ ຫຼື 0.7% ຂອງ GDP. ການແຜ່ລະບາດໄດ້ເພີ່ມຄວາມສ່ຽງຕໍ່ຄວາມບອບບາງໃນກຸ່ມປະຊາກອນຫຼັກ ເຊິ່ງໄດ້ແກ່ ແມ່ຍິງ ແລະ ຊາວໜຸ່ມ. ແມ່ຍິງປະສົບກັບການສູນເສຍວຽກເຮັດງານທຳແລະລາຍໄດ້ທີ່ບໍ່ສົມສ່ວນບວກກັບຄວາມຮັບຜິດຊອບໃນການເບິ່ງແຍງບ້ານທີ່ບໍ່ໄດ້ຮັບຄ່າຈ້າງມີເພີ່ມຫຼາຍຂຶ້ນ. ຊາວໜຸ່ມຫຼາຍຄົນປະສົບກັບຄວາມຫຍຸ້ງຍາກໃນການຮຽນ, ການຝຶກອົບຮົມ ແລະການເຮັດວຽກ.

### COVID-19 ແລະ ຜົນກະທົບຕໍ່ຊັບພະຍາກອນມະນຸດ

ລະບົບການສຶກສາ ແລະ ສາທາລະນະສຸກໄດ້ຮັບຜົນກະທົບຢ່າງຫຼວງຫຼາຍຈາກການແຜ່ລະບາດຂອງໂຄວິດ 19. ເຊັ່ນດຽວກັນກັບປະເທດອື່ນໆ ການປິດໂຮງຮຽນເຮັດໃຫ້ສູນເສຍການຮຽນຮູ້ ແລະ ມີແນວໂນ້ມໃຫ້ການຮຽນຮູ້ທີ່ໃນ

---

[13] Asian Development Bank. *Supply Disruptions, Rising Prices Delay Lao PDR's Economic Recovery* https://www.adb.org/news/supply-disruptions-rising-prices-delay-lao-pdr-economic-recovery-adb#:~:text=News%20Release%20%7C%2021%20September%202022&text=The%20update%20of%20ADB%27s%20flagship,%25%20from%203.7%25%20for%202023, accessed October 4, 2022

[14] International Labour Organization. *Global call to action for a human-centred recovery from the COVID-19 crisis that is inclusive, sustainable and resilience*, https://www.ilo.org/wcmsp5/groups/public/---ed_norm/---relconf/documents/meetingdocument/wcms_806092.pdf, accessed August 15, 2022

ລະດັບຕ່ຳຢູ່ແຮງໄດ້ຮັບຜົນກະທົບເພີ່ມອີກ ເຊິ່ງຈະສົ່ງຜົນກະທົບໃນໄລຍະຍາວທີ່ບໍ່ສາມາດແກ້ໄຂໄດ້ ຫາກບໍ່ໃຫ້ບູລິມະສິດແກ່ການຟື້ນຟູການຮຽນການສອນ. ໃນປີ 2019, ຈາກການປະເມີນຜົນການຮຽນຊັ້ນປະຖົມສຶກສາປີທີ 5 ເຫັນວ່າເດັກນ້ອຍລາວຍັງມີລະດັບການຮຽນທີ່ຕ່ຳກວ່າເດັກນ້ອຍໃນປະເທດເພື່ອນບ້ານໃນຂົງເຂດ ອາຊີຕາເວັນອອກສ່ຽງໃຕ້ ໂດຍນັກຮຽນຊັ້ນປະຖົມສຶກສາປີທີ 5 ສ່ວນໃຫຍ່ເຮັດໄດ້ວິຊາຄະນິດສາດ, ທັກອ່ານ ແລະ ທັກຂຽນຂອງລະດັບຕົ້ນໆຊັ້ນປະຖົມ.[15] ການປ່ຽນໄປສູ່ການຮຽນທາງໄກເຮັດໃຫ້ຫຼາຍຄົນສູນເສຍການຮຽນຮູ້. ສະພາບການແຜ່ລະບາດຂອງພະຍາດດັ່ງກ່າວ ເຮັດໃຫ້ຄວາມແຕກໂຕນດ້ານການສຶກສາທີ່ມີຢູ່ຮຸນແຮງຫຼາຍຂຶ້ນ ໂດຍການຫຼຸດໂອກາດຂອງເດັກນ້ອຍ, ໄວລຸ້ນ ແລະ ໄວໜຸ່ມ ທີ່ມີຄວາມສ່ຽງສູງສຸດໃນການສືບຕໍ່ການຮຽນຂອງເຂົາເຈົ້າ. ການຈັດສັນງົບປະມານແຫ່ງຊາດສຳລັບການບໍລິການດ້ານສາທາລະນະສຸກ ແລະ ການສຶກສາໄດ້ຫຼຸດລົງຍ້ອນຄວາມຮຽກຮ້ອງຕ້ອງການດ້ານເສດຖະກິດແລະສັງຄົມເນື່ອງການແຜ່ລະບາດຂອງພະຍາດ. ມາດຕະການປິດເມືອງແຫ່ງຊາດ ແລະ ລະບຽບການຮັກສາໄລຍະຫ່າງທາງສັງຄົມ ເຮັດໃຫ້ຕ້ອງໄດ້ຍົກເລີກການເຂົ້າເຖິງການບໍລິການ, ການໂຈະການບໍລິການຢູ່ສະຖານທີ່ບໍລິການສາທາລະນະສຸກ/ຄລີນິກ ແລະ ການຫຼຸດລົງໃນການບໍລິໂພກອາຫານທີ່ມີໂພຊະນາການ. ຂໍ້ມູນຈາກອົງການອະນາໄມໂລກເປີດເຜີຍຜົນໄດ້ຮັບດ້ານສຸຂະພາບທີ່ຫຼຸດລົງໃນລະຫວ່າງການແຜ່ລະບາດ. ອັນທີໜຶ່ງ, ປະເທດໄດ້ປະສົບກັບການຫຼຸດລົງຂອງອັດຕາການປົກຄຸມຂອງວັກຊີນກັນພະຍາດໝາກແດງນ້ອຍ ແລະ ໝາກແດງໃຫຍ່ 4%, ຈາກ 83% ໃນປີ 2019 ເປັນ 79% ໃນປີ 2020. ອັນທີສອງ, ອັດຕາການຄຸມກາເນີດຫຼຸດລົງ. ອັນທີສາມ, ການເອົາລູກອອກເພີ່ມຂຶ້ນ 2% ແລະ ການເສຍຊີວິດຂອງແມ່ອາຍຸ 15-24 ເພີ່ມຂຶ້ນເປັນ 48% ຂອງການເສຍຊີວິດຂອງແມ່ທັງໝົດ, ເພີ່ມຂຶ້ນຈາກ 35% ໃນປີ 2019.[16] ຜົນກະທົບເຫຼົ່ານີ້ ແມ່ນຜົນກະທົບທີ່ໃຫຍ່ທີ່ສຸດໃນກຸ່ມການບໍລິໂພກທີ່ທຸກຍາກທີ່ສຸດ, ປະຊາຊົນທີ່ອາໄສໃນເຂດຫ່າງໄກສອກຫຼີກທີ່ສຸດ ແລະ ຜູ້ທີ່ມີຄວາມສ່ຽງທີ່ສຸດລວມທັງຄົນພິການ.

## COVID-19 ແລະ ການເຕີບໂຕສີຂຽວ, ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງຄວາມສ່ຽງໄພພິບັດ

ມາດຕະການປິດເມືອງທີ່ປະຕິບັດກັນທົ່ວໂລກເພື່ອຈຳກັດການແຜ່ລະບາດຂອງໄວຣັສໂຄໂລນາ ໄດ້ສົ່ງຜົນດີຕໍ່ສິ່ງແວດລ້ອມ. ອີງຕາມ Verma and Prakash (2020)[17] ກິດຈະກຳໃນອຸດສາຫະກຳ, ໂຮງງານ ແລະ ຂະແໜງການກໍ່ສ້າງທີ່ຫນ້ອຍລົງໄດ້ເຮັດໃຫ້ຄຸນນະພາບອາກາດດີຂຶ້ນ. ນອກຈາກນີ້, ການປ່ອຍອາຍພິດທາງອາກາດ (ການບິນ), ເຊິ່ງກວມເອົາ 2.4% ຂອງການປ່ອຍກາກໂບນິກທົ່ວໂລກໃນປີ 2018, ຫຼຸດລົງຢ່າງຫຼວງຫຼາຍ. ນອກນັ້ນ, ຄວາມຕ້ອງການພະລັງງານໃນອຸດສາຫະກຳທີ່ໜ້ອຍລົງ, ການໃຊ້ພະລັງງານຈາກຖ່ານຫີນ ຫຼື ແຫຼ່ງພະລັງງານແບບດັ້ງເດີມຫຼຸດລົງຢ່າງຫຼວງຫຼາຍ. ຄວາມກົດດັນຕໍ່ລະບົບນິເວດກໍ່ຫຼຸດລົງເຊັ່ນດຽວກັນ. ຢູ່ໃນຕົວເມືອງໃຫຍ່ຫຼາຍແຫ່ງ, ປະຊາຊົນເຫັນທ້ອງຟ້າທີ່ສົດໃສ ແລະ ນ້ຳໃນແມ່ນ້ຳທີ່ໃສສະອາດ ແລະ ໃນທ້ອງຖິ່ນຍັງໄດ້ພົບເຫັນນົກຫຼາຍຊະນິດອີກຄັ້ງ. ຄຽງຄູ່ກັນນັ້ນ ຍັງມີການລາຍງານວ່າ ລະດັບມົນລະພິດໃນແຫຼ່ງທ່ອງທ່ຽວຫຼຸດລົງ ເຊັ່ນ: ປ່າໄມ້, ຫາດຊາຍທະເລ.

ໃນ ສປປລາວ, ມີຂໍ້ສັງເກດທີ່ແຕກຕ່າງກັນກ່ຽວກັບການປັບປຸງຄຸນນະພາບອາກາດ ເນື່ອງຈາກມາດຕະການປິດເມືອງໃນໄລຍະການແຜ່ລະບາດ, ຕາມການລາຍງານຂອງ USAID (2020, p.21)[18] ວ່າມີການຫຼຸດຜ່ອນການຈູດໄຮ່ຖາງ

---

[15] UNICEF. (2022). SEA-PLM 2019 Main Regional Report Children's learning in 6 Southeast Asian countries,https://www.unicef.org/eap/media/7356/file/SEAPLM%202019%20Main%20Regional%20Report.pdf, accessed October 29, 2022

[16] UN, COVID 19 Recovery Background papers

[17] Verma, Ashok K. and Prakash, Sadguru (2020). *Journal of Global Biosciences.* DOI: www.mutagens.co.in/jgb/vol.09/05/090506.pdf

[18] USAID. Final Report USAID/LAO PDR COVID-19 Assessment https://pdf.usaid.gov/pdf_docs/PA00XS7K.pdf accessed August 8, 2022

ປ່າ ແລະ ການປ່ອຍອາຍພິດຂອງຍານພາຫະນະ ສົ່ງຜົນໃຫ້ຄຸນນະພາບອາກາດດີຂຶ້ນ. ເຖິງຢ່າງໃດກໍ່ຕາມ ຍັງມີຫຼັກຖານວ່າໂຄວິດ-19 ເພີ່ມຄວາມກົດດັນຕໍ່ສິ່ງແວດລ້ອມໃນບັນດາທ້ອງຖິ່ນຕ່າງໆ ຍ້ອນມາດຕະການຈຳກັດການເດີນທາງຂອງຜູ້ຄ້າຂາຍ ແລະ ການສູນເສຍເງິນທີ່ສົ່ງກັບບ້ານຂອງແຮງງານເຄື່ອນຍ້າຍ ເຮັດໃຫ້ຊຸມຊົນຕ້ອງເພິ່ງພາຊັບພະຍາ ກອນທຳມະຊາດຫຼາຍຂຶ້ນເພື່ອຕອບສະໜອງຄວາມຕ້ອງການດ້ານອາຫານ ແລະລາຍຮັບ.[19] ນອກນີ້, ຄວາມຕ້ອງການໃຊ້ໄຟຟ້າໃນປະເທດ ແລະ ການສົ່ງອອກເພີ່ມຂຶ້ນໃນຊ່ວງເຄິ່ງປີຫຼັງຂອງປີ 2020 ແລະ ຄາດວ່າໂດຍລວມຈະເພີ່ມຂຶ້ນ 33% ໃນທ້າຍປີ 2020. ສິ່ງນີ້ສົ່ງຜົນໃຫ້ເກີດຄວາມສົນໃຈໃນການສ້າງຄວາມຫຼາກຫຼາຍຂອງແຫລ່ງພະລັງງານທີ່ປະ ສົມປະສານກັນເພື່ອເພີ່ມແຫຼ່ງພະລັງງານທົດແທນທີ່ບໍ່ເອື່ອຍອີງໃສ່ແຕ່ພະລັງງານໄຟຟ້ານໍ້າຕົກ. ສິ່ງນີ້ຕິດພັນກັບຄວາມຕ້ອງການໃນການຫຼຸດຜ່ອນຜົນກະທົບຈາກປະລິມານນໍ້າຝົນທີ່ຫຼຸດລົງເຊິ່ງເປັນຜົນຈາກການປ່ຽນແປງດິນຟ້າອາ ກາດ ເຊິ່ງເຮັດໃຫ້ລັດຖະບານລວມເອົາການປະສົມປະສານພະລັງງານທີ່ແຕກຕ່າງກັນ ແລະ ການສະໜອງພະລັງງານທີ່ຫຼາກຫຼາຍເຂົ້າໃນຂະບວນການວາງແຜນຊັບພະຍາກອນ ແລະ ຄວາມທົນທານຂອງ ສປປລາວ. ເຖິງຢ່າງໃດກໍ່ຕາມ,ໃນທາງກັບກັນຄວາມຫຼາກຫຼາຍດັ່ງກ່າວໃນສປປລາວຍັງສາມາດເພີ່ມຄວາມທົນທານຕໍ່ຜົນກະທົບຂອງໂຄວິດ-19 ເນື່ອງຈາກຄ່າໃຊ້ຈ່າຍໃນການດຳເນີນງານແລະອັດຕາພາສີຄຸ້ມຄອງພະລັງງານທົດແທນ (USAID 2020).[20]

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 9 ໄດ້ວາງເປົ້າໝາຍໃຫ້ເສດຖະກິດມະຫາພາກ ແລະ ການເງິນມີສະຖຽນລະພາບເພື່ອບັນລຸຄວາມຍືນຍົງ, ສີຂຽວ ແລະ ທົ່ວເຖິງ. ການລົງທຶນໃນການເຕີບໂຕສີຂຽວ, ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະການຄຸ້ມຄອງຄວາມສ່ຽງໄພພິບັດຈະຕ້ອງໃຊ້ຊັບພະຍາກອນທາງການເງິນຈຳນວນຫຼາຍທັງຈາກພາກລັດ ແລະ ເອກະຊົນ. ຜົນກະທົບດ້ານສິ່ງແວດລ້ອມ ເນື່ອງຈາກໂຄວິດ-19 ໃນໄລຍະກາງ ຫາໄລຍະຍາວອາດສ້າງຄວາມເສຍຫາຍໄດ້ເນື່ອງຈາກງົບປະມານຂອງລັດຖືກນຳໃຊ້ເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດ ແລະ ການຂະຫຍາຍຕົວທີ່ຊ້າລົງຂອງເສດຖະກິດ ສົ່ງຜົນໃຫ້ລາຍຮັບຂອງລັດຖະບານຫຼຸດລົງ ເຊິ່ງຈະສົ່ງຜົນກະທົບຕໍ່ຄວາມສາມາດໃນການຊຳລະໜີ້ ແລະ ຄວາມຕ້ອງການໃຊ້ຈ່າຍອື່ນໆທີ່ສຳຄັນ. ລັດຖະບານຫັນໄປສູ່ການຂຸດຄົ້ນຊັບພະຍາກອນທຳມະຊາດອີກຄັ້ງ ແລະ ການຈ່າຍລ່ວງໜ້າໃຫ້ແກ່ການສຳປະທານບໍ່ແຮ່ ກໍ່ເປັນກົນໄກໃນການຮັບມືໄລຍະສັ້ນຫາໄລຍະກາງ. ໃນສະພາບການດັ່ງກ່າວການຈັດຕັ້ງປະຕິບັດບັນດາມາດຕະການປັບປຸງສະພາບແວດລ້ອມທາງທຸລະກິດຢ່າງວ່ອງໄວ ສຳລັບການລົງທຶນຂອງພາກເອກະຊົນ ຖືວ່າມີຄວາມສຳຄັນຫຼາຍ.

### 3.2 ວິກິດການ '4F' (ອາຫານ, ຝຸ່ນ, ນ້ຳມັນເຊື້ອໄຟ ແລະ ການເງິນ)

ນັບແຕ່ເດືອນພຶດສະພາ 2022 ເປັນຕົ້ນມາ, ເມື່ອ ສປປ ລາວ ໄດ້ເປີດຊາຍແດນຄືນໃໝ່ ແລະ ຢຸດຕິມາດຕະການສ່ວນໃຫຍ່ຂອງການຈຳກັດການລະບາດຂອງພະຍາດໂຄວິດ 19 ກໍ່ໄດ້ຮັບການລາຍງານວ່າ ມີການປັບປຸງທີ່ດີຂຶ້ນໃນລະບົບເສດຖະກິດ. ອີງຕາມທະນາຄານໂລກ (2022)[21] ມີການປັບປຸງຫຼາຍຢ່າງ ລວມມີ:

1. ອັດຕາສ່ວນຂອງປະຊາຊົນທີ່ລາຍງານວ່າອອກຈາກວຽກຫຼຸດລົງ ຈາກ 30% ເປັນ 12% ຈາກທ້າຍປີ 2021 ຫາເດືອນພຶດສະພາ 2022;

---

[19] Rieger, Ricarda (2020) *Covid-19: Cleaner Air, well not in Laos,* https://www.undp.org/laopdr/blog/covid-19-cleaner-air-well-not-laos *October 6, 2022*
[20] Ibid
[21] World Bank. As impacts of COVID-19 recede, Lao PDR faces new challenges, https://www.worldbank.org/en/news/press-release/2022/07/06/as-impacts-of-covid-19-recede-lao-pdr-faces-new-challenges, accessed August 8, 2022

2. ທຸລະກິດຄອບຄົວສ່ວນຫຼາຍໄດ້ເລີ່ມກັບມາດໍາເນີນກິດຈະການຄືນໃໝ່ໃນປີ 2022. ໃນເດືອນພຶດສະພາ, ເກືອບ 90% ຂອງທຸລະກິດຄອບຄົວໄດ້ເລີ່ມສືບຕໍ່ດໍາເນີນກິດຈະການກ່ອນການລະບາດຂອງພະຍາດ ຫຼື ເລີ່ມຕົ້ນທຸລະກິດໃໝ່;
3. ການປູກຝັງແມ່ນຟື້ນໂຕໄວກວ່າຂະແໜງການອື່ນ, ໂດຍ 93% ຂອງຄົວເຮືອນກະສິກໍາທີ່ໃຫ້ສໍາພາດ ລາຍງານວ່າມີການເຮັດກະສິກໍາແບບປົກກະຕິໃນປີ 2022, ເຖິງວ່າຄົວເຮືອນກະສິກໍາສ່ວນຫຼາຍຈະໄດ້ຮັບຜົນກະທົບຈາກລາຄານໍ້າມັນເຊື້ອໄຟ ແລະ ປັດໃຈການຜະລິດກະສິກໍາທີ່ແພງຂຶ້ນ; ແລະ
4. ເກືອບສາມສ່ວນສີ່ຂອງຄົວເຮືອນທີ່ໄດ້ຮັບຄ່າຈ້າງ (73%) ລາຍງານວ່າມີລາຍຮັບຫຼາຍ ຫຼື ຫຼາຍກວ່າໃນເວລາດຽວກັນຂອງປີທີ່ຜ່ານມາ ເມື່ອມີການປິດເມືອງຄັ້ງທີສອງ. ຄົວເຮືອນທີ່ທຸກຍາກກວ່າໄດ້ຮັບປະໂຫຍດຈາກການໄດ້ຮັບຄ່າຈ້າງ ແລະ ການສົ່ງເງິນກັບບ້ານ.

ຢ່າງໃດກໍ່ຕາມ, ການຂະຫຍາຍຕົວຂອງເສດຖະກິດທີ່ຂະຫຍາຍຕົວຊ້າລົງໃນສອງປີກ່ອນກໍາລັງດີຂຶ້ນເທື່ອລະກ້າວ, ແຕ່ມາຮອດປັດຈຸບັນນີ້ພັດກໍາລັງປະສົບກັບສິ່ງທ້າທາຍອັນໃໝ່ ເຊິ່ງສະພາບທີ່ເກີດຂຶ້ນນີ້ບວກກັບຄວາມອ່ອນແອທາງດ້ານໂຄງສ້າງເສດຖະກິດກ່ອນໂຄວິດໄດ້ສົ່ງຜົນດັ່ງຕໍ່ໄປນີ້:

1. 86% ຂອງຜູ້ຕອບແບບສອບຖາມລາຍງານວ່າຄົວເຮືອນຂອງເຂົາເຈົ້າໄດ້ຮັບຜົນກະທົບຈາກອັດຕາເງິນເຟີ້ ນັບຕັ້ງແຕ່ຕົ້ນປີນີ້, ໂດຍ 52% ອ້າງເຖິງຜົນກະທົບທີ່ສໍາຄັນ, 65% ຂອງຄົວເຮືອນໄດ້ຫຼຸດຄ່າໃຊ້ຈ່າຍດ້ານການສຶກສາ ແລະ ສຸຂະພາບ ເພື່ອຮັບມືກັບໄພເງິນເຟີ້;
2. 64% ຂອງຄົວເຮືອນປ່ຽນພຶດຕິກໍາຈາກການຂຶ້ນລາຄານໍ້າມັນເຊື້ອໄຟໂດຍການຈໍາກັດການເດີນທາງ ຫຼື ໃຊ້ລົດຖີບ ແລະ ອື່ນໆ. ເພື່ອຮັບມືກັບອັດຕາເງິນເຟີ້ທີ່ເພີ່ມຂຶ້ນ ຄົວເຮືອນຕ່າງໆໄດ້ຫຼຸດການບໍລິໂພກອາຫານ, ປ່ຽນເປັນອາຫານທີ່ມີລາຄາຖືກກວ່າ, ໃຊ້ການລ່າສັດ ແລະ ການເກັບອອມ, ຫຼື ຫັນໄປຜະລິດເອງ.
3. ເຖິງແມ່ນວ່າຄວາມບໍ່ໝັ້ນຄົງດ້ານສະບຽງອາຫານລວມຈະຫຼຸດລົງເລັກນ້ອຍ ແຕ່ອັດຕາສ່ວນຂອງຄອບຄົວທີ່ປະສົບກັບຄວາມບໍ່ໝັ້ນຄົງດ້ານອາຫານຢ່າງຮຸນແຮງໄດ້ເພີ່ມຂຶ້ນເປັນ 23% ໃນເດືອນເມສາ/ພຶດສະພາໃນປີ 2022;
4. ພະຍາດໂຄວິດ-19 ໄດ້ສ້າງຜົນກະທົບອັນໃຫຍ່ຫຼວງຕໍ່ກັບການຮຽນຮູ້ໃນ ສປປລາວ. ໃນ 12 ເດືອນຜ່ານມາ, 42% ຂອງເດັກນ້ອຍໄດ້ຢຸດຮຽນຊົ່ວຄາວ ຫຼື ຖາວອນ ໂດຍສະເພາະຄົວເຮືອນໃນຊົນນະບົດແມ່ນມີສັດສ່ວນສູງກວ່າໃນເມືອງ.

ສະຫະພັນລັດເຊຍ ແລະ ຢູເຄນ ບໍ່ໄດ້ເປັນຄູ່ຮ່ວມການຄ້າ ແລະ ການລົງທຶນທີ່ສໍາຄັນຂອງສະມາຊິກອາຊຽນ ລວມທັງ ສປປລາວ. ເຖິງຢ່າງໃດກໍ່ຕາມ, ຄວາມຂັດແຍ່ງ ແລະ ຜົນກະທົບທາງດ້ານເສດຖະກິດໂລກ ໄດ້ສົ່ງຜົນສະທ້ອນອັນໜັກໜ່ວງຕໍ່ການເຄື່ອນໄຫວເສດຖະກິດລະດັບຊາດ ແລະ ພາກພື້ນອາຊີຕາເວັນອອກສ່ຽງໃຕ້. ຜົນກະທົບຢ່າງໜຶ່ງທີ່ສັງເກດໄດ້ຄືລາຄາສິນຄ້າກະສິກໍາ, ພະລັງງານ ແລະ ສິນຄ້າອື່ນໆສູງຂຶ້ນ. ຄວາມຂັດແຍ່ງໃນຢູເຄນ ຍັງເປັນອຸປະສັກຕໍ່ການເຕີບໂຕທົ່ວໂລກ ແລະ ເຮັດໃຫ້ແຮງກົດດັນຈາກເງິນເຟີ້ຮຸນແຮງຂຶ້ນໃນສິນຄ້າທີ່ສໍາຄັນ ເຊັ່ນ ເຂົ້າສາລີ, ນໍ້າມັນ, ແຮ່ທາດ ແລະ ແກັສທາມະຊາດ (OECD 2022).[22]

[22] OECD. Economic and social impacts and policy implications of the war in Ukraine, https://www.oecd.org/economy/Interim-economic-outlook-report-march-2022.pdf, accessed August 8, 2022

**ແຜນວາດ 2: ລາຄາສິນຄ້າສົ່ງອອກຕົ້ນຕໍຂອງລັດເຊຍ ແລະ ຢູເຄຣນເພີ່ມສູງຂຶ້ນຢ່າງວ່ອງໄວ**




ແຫຼ່ງຂໍ້ມູນ: OECD 2022

### 3.3 ວິໄສທັດ

ໂຄວິດ-19 ແລະ ຄວາມເປັນຈິງອັນໃໝ່ຂອງຍຸກຫຼັງການແຜ່ລະບາດຂອງພະຍາດດັ່ງກ່າວ ໄດ້ສົ່ງຜົນໃຫ້ເກີດສິ່ງທ້າທາຍດ້ານເສດຖະກິດ-ສັງຄົມຫຼາຍຢ່າງ. ໃນຂະນະທີ່ ສປປລາວ ຍັງສືບຕໍ່ຟື້ນຕົວຈາກໂລກລະບາດ ແລະ ຕໍ່ສູ້ກັບຜົນກະທົບຈາກຄວາມທ້າທາຍຂອງເສດຖະກິດມະຫາພາກລະດັບໂລກທີ່ກໍາລັງດໍາເນີນຢູ່, ສິ່ງສາຄັນທີ່ ສປປລາວ ຕ້ອງທົບທວນ ແລະ ຈັດຕັ້ງປະຕິບັດແຜນດໍາເນີນງານທີ່ລະບຸໄວ້ໃນເອກະສານການຟື້ນຟູຈາກໂຄວິດ 19 ເພື່ອອໍານວຍຄວາມສະດວກໃຫ້ແກ່ຂະແໜງການຕ່າງໆ ເຊັ່ນ ກະສິກໍາ, ທ່ອງທ່ຽວ, ການຜະລິດ, ການສຶກສາ ແລະ ສາທາລະນະສຸກໃຫ້ສາມາດປັບຕົວໄດ້ ແລະ ຕອບສະໜອງຕໍ່ການກັບຄືນສູ່ສະພາບປົກກະຕິແບບໃໝ່ (*new normal).* ໃນນີ້, ວິໄສທັດຂອງຂອບການຟື້ນຟູເສດຖະກິດຂອງ ສປປລາວ ຈະໄດ້ຮັບການຊີ້ນໍາໂດຍຈຸດປະສົງຕົ້ນຕໍ ແລະ 9 ຜົນໄດ້ຮັບຂອງ NSEDP ຄັ້ງທີ 9:

> ***ສຸມໃສ່ການພັດທະນາເສດຖະກິດ-ສັງຄົມຢ່າງຄົບຖ້ວນຕາມຄວາມສາມາດບົ່ມຊ້ອນທີ່ມີຢູ່ ເພື່ອຊ່ວຍໃຫ້ປະເທດບັນລຸມາດຖານຂອງ LDC ຢ່າງມີປະສິດທິພາບ ຜ່ານການເຕີບໂຕຢ່າງມີຄຸນນະພາບ, ທົ່ວເຖິງ ແລະ ເປັນມິດຕໍ່ສິ່ງແວດລ້ອມ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ ພາຍໃນປີ 2030.*** ຜົນສໍາເລັດດັ່ງກ່າວຈະເຮັດໃຫ້ບັນລຸ 9 ຜົນໄດ້ຮັບຈາກການປະຕິບັດ ຄື: (a) ຄຸນນະພາບ, ທົ່ວເຖິງ ແລະ ການເຕີບໂຕແບບຍືນຍົງ; (b) ປັບປຸງຊັບພະຍາກອນມະນຸດ, ການຄົ້ນຄວ້າ ແລະ ການນໍາໃຊ້ວິທະຍາສາດ; (c) ເຕັກໂນໂລຊີ ແລະ ຜູ້ທີ່ມີຄວາມຮູ້ເພື່ອສົ່ງເສີມການຜະລິດ ແລະ ການບໍລິການທີ່ຫຼາກຫຼາຍ ແລະ ສ້າງມູນຄ່າເພີ່ມ; (d) ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ເພື່ອຍົກສູງຊີວິດການເປັນຢູ່ຂອງບຸກຄົນ ແລະ ສັງຄົມ; (e) ການພັດທະນາເປັນສີຂຽວ ແລະ ເປັນມິດກັບສິ່ງແວດລ້ອມ; (f) ເພີ່ມທະວີການຮ່ວມມືພາກພື້ນ ແລະ ສາກົນທີ່ເຂັ້ມແຂງ ແລະ ທັນສະໄໝ, ເຊື່ອມໂຍງ ແລະ ເຊື່ອມຈອດ; ແລະ (g) ການຄຸ້ມຄອງຂອງລັດ ແລະ ກົດໝາຍທີ່ມີປະສິດທິຜົນ.

**ຂອບການຟື້ນຟູເສດຖະກິດຂອງ ສປປ ລາວ ກໍານົດພາລະກິດດັ່ງຕໍ່ໄປນີ້:**

ສປປ ລາວ ໃຫ້ຄໍາໝັ້ນສັນຍາຈະປະຕິບັດບັນດາມາດຕະການທີ່ຈໍາເປັນ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາສະຖາບັນ, ພັດທະນາພື້ນຖານໂຄງລ່າງ ແລະ ປັບປຸງຄວາມສາມາດດ້ານຊັບພະຍາກອນມະນຸດ ເພື່ອຊຸກຍູ້ ແລະ ບັນລຸການ

ເຕີບໂຕຂອງເສດຖະກິດແບບຍືນຍົງ ແລະ ການພັດທະນາຮອບດ້ານແບບຍືນຍົງໃຫ້ແກ່ພົນລະເມືອງ ສປປລາວ ທຸກ ຄົນຕະຫຼອດຊີວິດ.

# 4 ເສົາຄໍ້າຂອງຂອບການຟື້ນຟູເສດຖະກິດ

ຂອບການຟື້ນຟູເສດຖະກິດປະກອບດ້ວຍ 73 ບູລິມະສິດໃນການຈັດຕັ້ງປະຕິບັດ ທີ່ກໍານົດໂດຍພາກສ່ວນກ່ຽວຂ້ອງ ທີ່ສໍາຄັນຂອງລັດຖະບານ ແລະ ຄູ່ຮ່ວມພັດທະນາ ແລະ ການຈັດຕັ້ງໃນຫ້າເສົາຄໍ້າ, ແລະ ການພິຈາລະນາໃນແຕ່ລະ ຂົງເຂດທີ່ແຕກຕ່າງກັນ.

## ປັດໃຈຂອງຂົງເຂດທີ່ແຕກຕ່າງກັນສໍາລັບການພິຈາລະນາການຈັດຕັ້ງປະຕິບັດຂອບການຟື້ນຟູເສດຖະກິດ

ຄວາມສະເໝີພາບຂອງບົດບາດຍິງຊາຍ, ການຫັນປ່ຽນດ້ານປະຊາກອນ ແລະ ການລວມຕົວຂອງສະຖາບັນແມ່ນປັດ ໃຈຕົ້ນຕໍທີ່ຈໍາເປັນຂອງຂອບການຟື້ນຟູເສດຖະກິດ. ທັງສາມປັດໃຈແມ່ນຕິດພັນກັບວາລະການພັດທະນາແບບຍືນ ຍົງ 2030 ແລະ ເປັນພື້ນຖານ ເພື່ອຮັບປະກັນວ່າການຈັດຕັ້ງປະຕິບັດແຕ່ລະ 5 ເສົາຄໍ້າ ແມ່ນທົ່ວເຖິງ ແລະ ຍືນຍົງ.

*ຄວາມສະເໝີພາບລະຫວ່າງຍິງ-ຊາຍ*

ຄວາມສະເໝີພາບລະຫວ່າງຍິງຊາຍແມ່ນເປັນທັງຕົວຊ່ວຍ ແລະ ເປັນຕົວຂັບເຄື່ອນຂອງຫ້າເສົາຄໍ້າຫຼັກຂອງຂອບການ ຟື້ນຟູເສດຖະກິດ. ການບໍ່ພິຈາລະນາຄວາມສະເໝີພາບລະຫວ່າງຍິງຊາຍ ສົ່ງຜົນຕໍ່ວິໄສທັດຂອງ NSEDP ຄັ້ງທີ 9. ຄວາມຮັບຜິດຊອບທີ່ເພີ່ມຂຶ້ນກ່ຽວກັບການເຮັດວຽກທີ່ບໍ່ໄດ້ຮັບຄ່າຕອບແທນໃນຄົວເຮືອນແລະການວ່າງງານທີ່ເປັນ ຜົນມາຈາກຂະແໜງການຕ່າງໆທີ່ຖືກກະທົບຢ່າງໜັກໜ່ວງທີ່ສຸດຈາກພະຍາດລະບາດ ເຮັດໃຫ້ຄວາມທຸກຍາກ ແລະ ຄວາມບອບບາງດ້ານຕ່າງໆເພີ່ມຫຼາຍຂຶ້ນ. ໃນຂະນະດຽວກັນ, ຄວາມສາມາດໃນເຂົ້າເຖິງຂໍ້ມູນແຍກເພດທີ່ຈໍາກັດຂອງ ຜູ້ກໍານົດນະໂຍບາຍເຮັດໃຫ້ການລະບຸ ແລະ ການອະທິບາຍແນວທາງທີ່ຈໍາເປັນຍິ່ງມີຄວາມທ້າທາຍຫຼາຍຂຶ້ນ. ດັ່ງນັ້ນ ຈຶ່ງເປັນສິ່ງສໍາຄັນທີ່ພາກເອກະຊົນ ແລະ ພາກລັດ, ຄູ່ຮ່ວມພັດທະນາ ຕະຫຼອດຮອດອົງການຈັດຕັ້ງທາງສັງຄົມ ຕ້ອງ ຮ່ວມມືກັບຄູ່ຮ່ວມງານລັດຖະບານ ເພື່ອແກ້ໄຂສິ່ງກີດຂວາງທີ່ເປັນອຸປະສັກຕໍ່ຄວາມເທົ່າທຽມ ແລະ ຄວາມສະເໝີ ພາບລະຫວ່າງຍິງຊາຍ. **ຕາຕະລາງ** 2 ລາຍລະອຽດຄວາມແຕກຕ່າງລະຫວ່າງແມ່ຍິງ ແລະ ຜູ້ຊາຍໃນຂົງເຂດທີ່ຖືກຄັດ ເລືອກຂອງແຕ່ລະເສົາຄໍ້າ.

**ຕາຕະລາງ 2: ຄວາມບໍ່ສະເໝີພາບລະຫວ່າງຍິງຊາຍໃນແຕ່ລະເສົາຄໍ້າຂອງຂອບການຟື້ນຟູເສດຖະກິດ**

| ເສົາຄໍ້າ | ການພິຈາລະນາບົດບາດຍິງຊາຍ |
|---|---|
| ເສົາຄໍ້າ 1: ຂອບງົບປະມານມະຫາພາກ | 45.6% ຂອງແມ່ຍິງ ແລະ ເດັກຍິງ ຜູ້ທີ່ມີວຽກເຮັດງານທໍາ ແມ່ນແຮງງານຄອບຄົວທີ່ບໍ່ໄດ້ ຮັບຄ່າຈ້າງ ທຽບໃສ່ 31.9% ຂອງຜູ້ຊາຍ ແລະ ເດັກຊາຍ[23] |
| ເສົາຄໍ້າ 2: ການຄ້າ ແລະ ຂະແໜງເອກະຊົນ, ຕ່ອງໂສ້ມູນຄ່າ, ແລະ ການທ່ອງທ່ຽວ | ມີຄວາມຈໍາເປັນຕ້ອງສົ່ງເສີມ ແລະ ຈ້າງງານແມ່ຍິງໃຫ້ເຮັດວຽກໃນຂະແໜງການຕ່າງໆ ເຊັ່ນ ພະລັງງານ, ກໍ່ສ້າງ, ການຜະລິດ, ການຂົນສົ່ງ ແລະ ອື່ນໆ ທີ່ຕິດພັນກັບວຽກຂອງ "ຜູ້ຊາຍ". ທີ່ສໍາຄັນແມ່ນປັບປຸງ ແລະ ສ້າງຄວາມຫຼາກຫຼາຍທາງດ້ານສີມືແຮງງານ, ເພີ່ມຄວາມສາມາດ ໃນການແຂ່ງຂັນພາຍໃນຕະຫຼາດແຮງງານຂອງ ສປປລາວ ຫຼື ຕ່າງປະເທດ. |

[23] Luxembourg Development Corporation Agency. Gender equality in Lao PDR , https://luxdev.lu/files/documents/Genre_LAO_vF.pdf, accessed August 15, 2022

| ເສົາຄ້ຳ | ການພິຈາລະນາບົດບາດຍິງຊາຍ |
|---|---|
| | ໃນທົ່ວໂລກ, ແມ່ຍິງມີຄວາມສ່ຽງທີ່ຈະໄດ້ຮັບຄວາມເສຍຫາຍຫຼາຍກວ່າຜູ້ຊາຍ ຈາກການຢຸດຊະງັກທາງການຄ້າ ທີ່ເກີດຈາກພະຍາດລະບາດໂຄວິດ-19. ໜຶ່ງໃນເຫດຜົນແມ່ນຍ້ອນວ່າ ແມ່ຍິງສ່ວນໃຫຍ່ເຮັດວຽກໃນຂະແໜງການ ແລະ ປະເພດຂອງບໍລິສັດທີ່ໄດ້ຮັບຜົນກະທົບຢ່າງໜັກຈາກພະຍາດລະບາດດັ່ງກ່າວ. ໃນສະພາບການຂອງລາວ, ການຄົ້ນພົບເຫຼົ່ານີ້ ມີຕົວຢ່າງການສໍາຫຼວດຜົນກະທົບດ້ານທຸລະກິດ ເນື່ອງຈາກໂຄວິດ-19 ທີ່ຈັດຂຶ້ນໂດຍສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ, ເຊິ່ງເຫັນວ່າແມ່ຍິງມີແນວໂນ້ມທີ່ຈະໂຈະການດໍາເນີນທຸລະກິດຫຼາຍກວ່າຜູ້ຊາຍ. ການປະເມີນຂອງຂະແໜງການທ່ອງທ່ຽວຂອງລາວ ເມື່ອບໍ່ດົນມານີ້ ເຫັນວ່າມີພະນັກງານເພດຍິງຫຼາຍກວ່າ (40%) ເພດຊາຍ (34%).[24] |
| ເສົາຄ້ຳ 3: ຄຸ້ມຄອງການປ່ຽນແປງ ແລະ ເພີ່ມທະວີການກະກຽມນະໂຍບາຍເພື່ອວຽກງານທີ່ເປັນທຳ | 70% ຂອງແຮງງານເຄື່ອນຍ້າຍທັງໝົດເປັນແມ່ຍິງ. ແມ່ຍິງທີ່ເປັນແຮງງານເຄື່ອນຍ້າຍສ່ວນຫຼາຍແມ່ນເດີນທາງໄປປະເທດໄທ ເຊິ່ງສ່ວນໃຫຍ່ຈະເຮັດວຽກໃນຂະແໜງການບໍລິການ ແລະ ເປັນແຮງງານຮັບໃຊ້ຄົວເຮືອນ. ຈາກການສຶກສາຄົ້ນຄວ້າຂອງ UNODC ຄາດຄະເນວ່າ 35% ຂອງແມ່ຍິງທີ່ອົບພະຍົບໄປປະເທດໄທ ແມ່ນຜູ້ເຄາະຮ້າຍຈາກການຂູດຮີດທາງເພດ[25]<br><br>ການສູນເສຍຊີວິດການເປັນຢູ່ຍ້ອນພະຍາດໂຄວິດ 19 ເຮັດໃຫ້ຄົວເຮືອນກ້າວສູ່ຄວາມທຸກຍາກ ແລະ ເຮັດໃຫ້ເດັກນ້ອຍ ແລະ ໄວໜຸ່ມຕົກເປັນຜູ້ເຄາະຮ້າຍ, ໂດຍສະເພາະຢ່າງຍິ່ງ ນັບແຕ່ຄອບຄົວທີ່ທຸກຍາກ ແລະ ພື້ນຖານຊົນເຜົ່າ ຈົນເຖິງ ຄວາມດ້ອຍໂອກາດຫຼາຍ ເຊິ່ງຈະສົ່ງຜົນສະທ້ອນໃນໄລຍະຍາວ ຕໍ່ກັບການຜະລິດ ແລະ ການພັດທະນາຄວາມສາມາດຂອງມະນຸດ. ແມ່ຍິງຍັງມີສັດສ່ວນທີ່ເປັນຕົວແທນກຸ່ມຄົນທຸກຍາກ ແລະ ກຸ່ມທີ່ມີຄວາມບອບບາງ. ພວກເຂົາມີແນວໂນ້ມທີ່ຈະຖືກຈໍາກັດໂດຍການປະກອບອາຊີບທີ່ບໍ່ເປັນທາງການ, ບໍ່ປອດໄພ, ແລະ ເປັນອັນຕະລາຍຫຼາຍຂຶ້ນ ລວມເຖິງການປະກອບອາຊີບອິດສະຫຼະ ໂດຍສະເພາະໃນເສດຖະກິດນອກລະບົບ ໂດຍບໍ່ໄດ້ຮັບ ຫຼື ຈໍາກັດການເຂົ້າເຖິງການປົກປ້ອງທາງສັງຄົມ[26] |
| ເສົາຄ້ຳ 4: ທຶນມະນຸດ (ການພັດທະນາຊັບພະຍາກອນມະນຸດ) | 35% ຂອງແມ່ຍິງທີ່ເປັນຜູ້ໃຫຍ່ ໄດ້ເຂົ້າເຖິງການສຶກສາຂັ້ນມັດທະຍົມເປັນຢ່າງໜ້ອຍ ເມື່ອທຽບໃສ່ກັບ 46% ຂອງຜູ້ຊາຍ[27]<br><br>ຂໍ້ມູນ EMIS ກ່ອນເກີດພະຍາດລະບາດ ສະແດງໃຫ້ເຫັນວ່າໃນລະດັບປະເທດ, ສປປ ລາວ ອັດຕາການອອກໂຮງຮຽນລະຫວ່າງຍິງຊາຍເກືອບບໍ່ມີຄວາມແຕກຕ່າງກັນ, ເດັກຍິງມີອັດຕາການອອກໂຮງຮຽນຕໍ່າກວ່າເລັກນ້ອຍໃນທົ່ວລະດັບການສຶກສາ. ເດັກຊາຍແລະເດັກຍິງຕ້ອງປະເຊີນກັບອຸປະສັກດ້ານການສຶກສາທີ່ແຕກຕ່າງກັນໄປຕາມເພດສະພາບ, ເຖິງແມ່ນວ່າທັງສອງຈະໄດ້ຮັບຜົນກະທົບຫຼາຍທີ່ສຸດຈາກປັດໄຈດ້ານເສດຖະກິດ. ເນື່ອງຈາກການແຜ່ລະບາດ ຂໍ້ມູນດຽວກັນນີ້ ສະແດງໃຫ້ເຫັນອັດຕາການອອກໂຮງຮຽນກາງພາກຂອງທັງເດັກຍິງ ແລະ ເດັກຊາຍໃນທຸກລະດັບການສຶກສາເພີ່ມຂຶ້ນ ແລະ ຂໍ້ມູນ EMIS ຈາກປີ 2021/22 |

[24] Source: COVID 19 Recovery Background papers, p.22.
[25] Ibid.
[26] United Nations. Developing a shock-responsive national social protection system to respond to the COVID-19 crisis in Lao PDR, https://laopdr.un.org/sites/default/files/2021-01/covid-19%20Laos_revised.pdf, accessed August 15, 2022
[27] Luxembourg Development Corporation Agency. Gender equality in Lao PDR https://luxdev.lu/files/documents/Genre_LAO_vF.pdf, accessed August 15, 2022

| ເສົາຄ້ຳ | ການພິຈາລະນາບົດບາດຍິງຊາຍ |
|---|---|
| | ສະແດງໃຫ້ເຫັນອັດຕາການອອກໂຮງຮຽນຂອງເດັກຊາຍໃນຊັ້ນປະຖົມ ແລະ ມັດທະຍົມຕອນຕົ້ນເພີ່ມຂຶ້ນແລະອັດຕາການອອກໂຮງຮຽນຂອງເດັກຍິງໃນຊັ້ນມັດທະຍົມສຶກສາຕອນປາຍເພີ່ມຂຶ້ນ.<br><br>ການລະບາດຂອງໂຄວິດ 19 ແລະ ຜົນກະທົບດ້ານເສດຖະກິດ ແລະ ຄວາມກັງວົນດ້ານສຸຂະພາບ ເຮັດໃຫ້ການສຶກສາຢຸດຊະງັກ ແລະ ການປິດການບໍລິການທີ່ຈຳເປັນ. ສິ່ງເຫຼົ່ານີ້ໄດ້ເພີ່ມຄວາມສ່ຽງໃຫ້ແກ່ເດັກນ້ອຍ, ໂດຍສະເພາະແມ່ນເດັກຍິງ ທີ່ອາດຕ້ອງປະເຊີນກັບຄວາມຮຸນແຮງໃນຮູບແບບຕ່າງໆ ເຊັ່ນ ການມີລູກໃນໄວຮຽນ, ການແຕ່ງງານກ່ອນໄວອັນຄວນ ແລະ ການໃຊ້ແຮງງານເດັກ. ອັດຕາການອອກໂຮງຮຽນຂອງເດັກຊາຍກໍ່ເພີ່ມຂຶ້ນເຊັ່ນກັນ ແລະ ມີທ່າອ່ຽງວ່າພວກເຂົາຈະເຂົ້າສູ່ຂະບວນການໃຊ້ແຮງງານເດັກ, ໃນຂະນະທີ່ເດັກຍິງຈະຖືກຜັກດັນໃຫ້ແຕ່ງງານໄວຂຶ້ນ. ເປັນສິ່ງສຳຄັນທີ່ຈະຕ້ອງຮັບຮູ້ເລື່ອງນີ້, ແລະ ບົດບາດຍິງຊາຍບໍ່ແມ່ນພຽງແຕ່ເລື່ອງການສຶກສາຂອງເດັກຍິງເທົ່ານັ້ນ.<br><br>ຄາດຄະເນ 70% ຂອງພະນັກງານສາທາລະນະສຸກແຖວໜ້າ (ລວມທັງໝໍ, ພະຍາບານ ແລະ ພະດຸງຄັນ) ແມ່ນແມ່ຍິງ, ມີທ່າອ່ຽງທີ່ຈະສາຜັດກັບໄວຣັສ ແລະ ຈະມີພາລະໃນການດູແລເພີ່ມຂຶ້ນເປັນສອງເທົ່າ ແລະ ຕ້ອງການການສະໜັບສະໜູນສະເພາະ ເພື່ອເບິ່ງແຍງລູກຂອງເຂົາເຈົ້າໄປພ້ອມໆກັນ ໃນຊ່ວງທີ່ປິດໂຮງຮຽນ.[28] |
| ເສົາຄ້ຳ 5: ການເຕີບໂຕສີຂຽວ, ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງຄວາມສ່ຽງໄພພິບັດ | ການປັບຕົວເຂົ້າກັບຄວາມບອບບາງ ແລະ ການປ່ຽນແປງດິນຟ້າອາກາດ ຂຶ້ນກັບປັດໃຈຕ່າງໆ ເຊັ່ນ ຄວາມຮັ່ງມີ, ລະດັບຊັບພະຍາກອນຂອງພື້ນຖານໂຄງລ່າງ ແລະ ເຕັກໂນໂລຊີ, ແລະ ທຶນສັງຄົມ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ, ເຊິ່ງທັງໝົດນີ້ ແມ່ນເນັ້ນໜັກໃສ່ບົດບາດຍິງຊາຍໃນຄົວເຮືອນ, ເສດຖະກິດ ແລະ ສັງຄົມ<br>- ແມ່ຍິງເຂົ້າເຖິງປັດໃຈການຜະລິດ ແລະ ສິນເຊື່ອໄດ້ໜ້ອຍ, ເຊິ່ງສົ່ງຜົນຕໍ່ການຜະລິດຂອງພວກເຂົາ ເຖິງວ່າພວກເຂົາຈະມີບົດບາດສຳຄັນໃນດ້ານກະສິກຳກໍ່ຕາມ[29]<br>- ກິດຈະກຳເສດຖະກິດທີ່ອີງໃສ່ຊັບພະຍາກອນທຳມະຊາດ ເຊັ່ນ ການຂຸດຄົ້ນບໍ່ແຮ່ ແລະ ພະລັງງານໄຟຟ້ານ້ຳຕົກ ທີ່ໄດ້ປະກອບສ່ວນສຳຄັນຕໍ່ການເຕີບໂຕຂອງເສດຖະກິດ ຍັງສົ່ງຜົນໃຫ້ເກີດຄວາມສ່ຽງໃໝ່ໆ ເຊັ່ນ ການສູນເສຍທີ່ດິນ, ການສູນເສຍຊັບພະຍາກອນ, ຄວາມບໍ່ໝັ້ນຄົງດ້ານສະບຽງອາຫານ ແລະ ການປ່ຽນແປງຂອງທຶນສັງຄົມ. ຄວາມສ່ຽງທັງໝົດເຫຼົ່ານີ້ມີຄວາມສຳຄັນຕໍ່ບົດບາດຍິງຊາຍ<br>- ແມ່ຍິງ ແລະ ຜູ້ຊາຍ ປະສົບກັບຜົນກະທົບຈາກໄພນ້ຳຖ້ວມ ແລະ ແຫ້ງແລ້ງແຕກຕ່າງກັນ. ຍ້ອນບົດບາດຂອງແມ່ຍິງໃນຄົວເຮືອນ, ຄວາມຮັບຜິດຊອບໃນການເບິ່ງແຍງຄອບຄົວ ແລະ ລັກສະນະການຈ້າງງານ, ເຂົາເຈົ້າມີແນວໂນ້ມທີ່ຈະແບກຮັບຜົນກະທົບຈາກໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ. |

[28] United Nations. Developing a shock-responsive national social protection system to respond to the COVID-19 crisis in Lao PDR, https://laopdr.un.org/sites/default/files/2021-01/covid-19%20Laos_revised.pdf, accessed August 15, 2022

[29] Global Green Growth Initiative. Gender Inclusive Green Growth in Lao PDR, https://www.greengrowthknowledge.org/sites/default/files/downloads/resource//Gender-and-Green-Growth-Policy-Brief-Lao-PDR-1.pdf, accessed August 15, 2022

*ປະຊາກອນ ຫຼື ປະຊາຊົນເປັນສູນກາງຂອງລະບົບການຄຸ້ມຄອງທາງສັງຄົມທີ່ມີຄວາມທົນທານ ແລະ ຕອບໂຕ້ຕໍ່ຄວາມສ່ຽງ.*

ອັດຕາການຈະເລີນພັນທັງໝົດ (TFR) ຂອງ ສປປລາວ ສູງເປັນອັນດັບສອງໃນພາກພື້ນອາຊຽນ, ປະມານ 3.2 ຈາກການສໍາຫຼວດປະຊາກອນປີ 2015.[30] ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 9 ລະບຸໄວ້ວ່າປະຊາກອນໄວໜຸ່ມໃນ ສປປລາວ ກວມປະມານ 60% ຂອງປະຊາກອນທັງໝົດ ເຊິ່ງແມ່ນຊັບສິນທີ່ສໍາຄັນໃນການດຶງດູດການລົງ ທຶນໃນອະນາຄົດ, ດັ່ງນັ້ນມີຄວາມຈໍາເປັນທີ່ຕ້ອງສ້າງຄວາມພ້ອມຂອງແຮງງານດ້ວຍການລົງທຶນທີ່ເໝາະສົມທີ່ສຸດໃນການພັດທະນາຊັບພະຍາກອນມະນຸດ. ບັນດາຜົນປະໂຫຍດດ້ານເສດຖະກິດທີ່ຈະໄດ້ຮັບຈາກກຸ່ມດັ່ງກ່າວແມ່ນຂຶ້ນກັບການປະຕິບັດນະໂຍບາຍເສດຖະກິດ, ສາທາລະນະສຸກ ແລະ ການສຶກສາຂອງລັດຖະບານ ເພື່ອສະໜັບສະໜູນການສ້າງຄວາມສາມາດບົ່ມຊ້ອນຂອງໄວໜຸ່ມ.

ການປ່ຽນແປງດິນຟ້າອາກາດໄດ້ເລີ່ມສົ່ງຜົນກະທົບຕໍ່ການດໍາລົງຊີວິດ ແລະ ການເຕີບໂຕດ້ານເສດຖະກິດໃນ ສປປລາວ ແລ້ວ. ບັນຫາໄດ້ຮັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແມ່ນການຄໍ້າປະກັນດ້ານສະບຽງອາຫານ, ການສະໜອງນໍ້າ ແລະ ສຸຂະພາບຂອງປະຊາກອນ. ເງື່ອນໄຂເຫຼົ່ານີ້ສົ່ງຜົນກະທົບຕໍ່ GDP ແລະ ຊີວິດການເປັນຢູ່ຂອງຫຼາຍຄົວເຮືອນ ທີ່ອີງໃສ່ກະສິກໍາ.

ດັ່ງນັ້ນ ຂອບການຟື້ນຟູເສດຖະກິດ ຈຶ່ງພະຍາຍາມທີ່ຈະກໍານົດແນວທາງໃນການຈັດຕັ້ງປະຕິບັດການປົກປ້ອງສັງຄົມໂດຍສະເພາະແມ່ນການລຶບລ້າງຄວາມທຸກຍາກ ແລະ ການພັດທະນາສັງຄົມ. ແນວທາງນີ້ແມ່ນສອດຄ່ອງກັບການປ່ຽນແປງທາງດ້ານປະຊາກອນທີ່ປະເຊີນຢູ່ໃນເວລານີ້.

*ຂໍ້ມູນທີ່ມີຢູ່*

ການມີຂໍ້ມູນ ແລະ ນໍາໃຊ້ຂໍ້ມູນທີ່ມີຄຸນນະພາບສູງ ແມ່ນມີຄວາມສໍາຄັນທີ່ສຸດຕໍ່ການຕັດສິນໃຈ ເຊິ່ງຖືເປັນຫຼັກຖານຂໍ້ມູນທີ່ອ້າງອີງໄດ້ໃນການຈັດຕັ້ງປະຕິບັດວາລະການພັດທະນາແບບຍືນຍົງ. ຂໍ້ມູນແຍກເພດທີ່ໜ້າເຊື່ອຖື, ຖືກຕ້ອງ ມີຄວາມສໍາຄັນໃນການວັດແທກຄວາມຄືບໜ້າຂອງວຽກ ພ້ອມທັງຮູ້ໄດ້ບັນຫາ/ສິ່ງກີດຂວາງ. ຕາຕະລາງ 3 ສະແດງລາຍລະອຽດແຫຼ່ງຂໍ້ມູນທີ່ຈໍາເປັນສໍາລັບແຕ່ລະເສົາຄໍ້າ.

*ນະໂຍບາຍລວມ*

ການເຊື່ອມໂຍງທາງດ້ານນະໂຍບາຍພາຍໃນປະເທດ ແລະ ພາກສ່ວນກ່ຽວຂ້ອງໃນສາກົນ ແມ່ນມີຄວາມສໍາຄັນຕໍ່ກັບຜົນສໍາເລັດຂອງການຈັດຕັ້ງປະຕິບັດຂອບການຟື້ນຟູເສດຖະກິດ.

ການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ແມ່ນຊັບພະຍາກອນທີ່ສໍາຄັນ ໃນການອໍານວຍຄວາມສະດວກໃຫ້ແກ່ລາວເພື່ອບັນລຸເປົ້າໝາຍທີ່ໄດ້ລະບຸໄວ້ໃນ NSEDP ຄັ້ງທີ 9. ດັ່ງນັ້ນ, ການຫັນປ່ຽນຍຸດທະສາດ, ການປະສານງານ, ແລະ ການສື່ສານແມ່ນວຽກທີ່ສໍາຄັນໃນການສ້າງການມີສ່ວນຮ່ວມລະຫວ່າງລັດຖະບານ ແລະ ຄູ່ຮ່ວມພັດທະນາສາກົນ ໃນການຈັດຕັ້ງປະຕິບັດຕາມຂອບການຟື້ນຟູເສດຖະກິດ.

[30] Luxembourg Development Corporation Agency. Gender equality in Lao PDR https://luxdev.lu/files/documents/Genre_LAO_vF.pdf, accessed August 15, 2022

## 4.1 ເສົາຄ້ຳ 1: ການສະໜອງທຶນໃຫ້ແກ່ການພັດທະນາແບບຍືນຍົງ ແລະ ການຮ່ວມມືພັດທະນາຢ່າງມີປະສິດທິຜົນ

ໃນເສົາຄ້ຳນີ້ໄດ້ຮັບຮອງເອົາການຈັດຕັ້ງປະຕິບັດທີ່ກ່ຽວຂ້ອງກັບການຟື້ນຟູຂອງຍຸດທະສາດການເງິນໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ເຊິ່ງໄດ້ສ້າງຂຶ້ນພາຍໃຕ້ເວທີການສົນທະນາຂອງທຸກພາກສ່ວນທີ່ກ່ຽວຂ້ອງພາຍໃນລັດຖະບານ ທີ່ນຳພາໂດຍກະຊວງແຜນການ ແລະ ການລົງທຶນ ແລະ ໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມພັດທະນາຢ່າງກວ້າງຂວາງ. ໂດຍອີງໃສ່ເອກະສານປະຫວັດຄວາມເປັນມາຂອງການແຜ່ລະບາດຂອງພະຍາດໂຄວິດ-19 ໃນປີ 2020, 2021 ແລະ ຂັ້ນຕອນການວິໄຈທີ່ເກີດຂຶ້ນໃນໄລຍະເດືອນເມສາ ຫາ ເດືອນຕຸລາ 2021.

ການຈັດຕັ້ງປະຕິບັດຍຸດທະສາດການເງິນທີ່ສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ (NSEDP) 5 ປີ ຄັ້ງທີ IX ໄດ້ມີການປຶກສາຫາລືຢ່າງກວ້າງຂວາງໃນກອງປະຊຸມວິຊາການໃນເດືອນມິຖຸນາ-ເດືອນສິງຫາ 2022, ໄດ້ມີການທົບທວນຄືນ (*writeshop)* ສະເພາະຂອງໜ່ວຍງານລັດຖະບານໃນເດືອນກັນຍາ ແລະ ໄດ້ຖືກຮັບຮອງໃນກອງປະຊຸມປຶກສາຫາລືລະດັບລັດຖະມົນຕີ ແລະ ຮັບຮອງຈາກລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເພື່ອລາຍງານລັດຖະບານ.

| ອົງປະກອບ 1: ຄວາມຍືນຍົງດ້ານການເງິນ | ເສົາຄ້ຳ 1: ການສະໜອງທຶນໃຫ້ແກ່ການພັດທະນາແບບຍືນຍົງ ແລະ ການຮ່ວມມືພັດທະນາຢ່າງມີປະສິດທິພາບ | ໜ່ວຍງານນຳພາຈັດຕັ້ງປະຕິບັດ: ກົມນະໂຍບາຍການເງິນ ແລະ ນິຕິກຳ, ກະຊວງການເງິນ |
|---|---|---|
| **ລາຍລະອຽດຂອງອົງປະກອບ (9th NSEDP ຈຸດປະສົງຍຸດທະສາດການເງິນ 1.1.1, ໃນຂົງເຂດນະໂຍບາຍ 1.1: ການເກັບລາຍຮັບ):**<br><br>ລາຍຮັບຕົ້ນຕໍຂອງລັດເພີ່ມຂຶ້ນ ໂດຍການທົບທວນນະໂຍບາຍການເງິນເພື່ອຂະຫຍາຍຖານພາສີ, ສອດຄ່ອງກັບບູລິມະສິດການຂະຫຍາຍຕົວລວມ. | | |
| **ການຈັດຕັ້ງບູລິມະສິດ**<br><br>1. ການປະເມີນຄ່າໃຊ້ຈ່າຍ ແລະ ການທົບທວນຄືນ, ການສອດຄ່ອງກົມກຽວ ແລະ ການປັບປຸງກົດໝາຍ, ລະບຽບການ ແລະ ຂະບວນການ ເພື່ອຂະຫຍາຍຖານອາກອນ, ຍົກເລີກ ແລະ ເຈລະຈາ CIT ຄືນໃໝ່ ແລະ ການຍົກເວັ້ນທາງການເງິນອື່ນໆ.<br>2. ການປັບອັດຕາອາກອນໃຫ້ສອດຄ່ອງກັນ ເພື່ອເພີ່ມປະສິດທິພາບການສ້າງລາຍຮັບ ໃນຂະນະດຽວກັນກໍ່ສົ່ງເສີມການພັດທະນາຂະແໜງເອກະຊົນ ແລະ ການລົງທຶນໃນຂະແໜງການບູລິມະສິດ ແລະ ການເຕີບໂຕສີຂຽວ, ລວມທັງການປະເມີນລາຍໄດ້ທີ່ຄາດວ່າຈະເກີດຂຶ້ນ, ການຈິດທະບຽນທຸລະກິດ, ຄວາມເປັນໄປໄດ້ຂອດບໍລິຫານ, ແລະ ຜົນກະທົບຕໍ່ຊີວິດການເປັນຢູ່ ຕໍ່ກັບຄວາມເປັນໄປໄດ້ໃນການກັບໄປເກັບອັດຕາອາກອນມູນຄ່າເພີ່ມ (VAT) 10%. | | |
| **ເຫດຜົນ:** ປະຈຸບັນລັດຖະບານ ສປປລາວ ບໍ່ມີລາຍຮັບພຽງພໍ ເພື່ອສະໜອງທຶນໃຫ້ແກ່ການພັດທະນາບູລິມະສິດຂອງຕົນ. ອັດຕາສ່ວນອາກອນຕໍ່ GDP ໃນປີ 2020 ແມ່ນຕ່ຳສຸດໃນຈຳນວນ 28 ປະເທດໃນອາຊີ-ປາຊີຟິກ, ທີ່ 8.9% ອີງຕາມ OECD, ມີຫຼາຍກວ່າ 6 ຈຸດສ່ວນຮ້ອຍທີ່ຕ່ຳກວ່າລະດັບທີ່ IMF ຄາດໄວ້ ສຳລັບປະເທດທີ່ກຳລັງພັດທະນາ. ຜົນສຳເລັດຂອງບູລິມະສິດໃນຫຼາຍຂະແໜງການທີ່ສຳຄັນ (ທຶນມະນຸດ, ການປ່ຽນແປງດິນຟ້າ | | |

| ອົງປະກອບ 1: ຄວາມຍືນຍົງດ້ານການເງິນ | ເສົາຄໍ້າ 1: ການສະໜອງທຶນໃຫ້ແກ່ການພັດທະນາແບບຍືນຍົງ ແລະ ການຮ່ວມມືພັດທະນາຢ່າງມີປະສິດທິພາບ | ໜ່ວຍງານນໍາພາຈັດຕັ້ງປະຕິບັດ: ກົມນະໂຍບາຍການເງິນ ແລະ ນິຕິກໍາ, ກະຊວງການເງິນ |
|---|---|---|
| ອາກາດ, ການປົກປັກຮັກສາສິ່ງແວດລ້ອມ, ການປົກຄອງ) ແມ່ນຂຶ້ນກັບຄວາມສາມາດຂອງລັດ ໃນການເພີ່ມງົບປະມານຢ່າງໄວ, ຕົ້ນຕໍແມ່ນຜ່ານການປະກອບສ່ວນຈາກພາກເອກະຊົນ, ທີ່ມີການຈໍາກັດຫຼາຍທີ່ສຸດ ເນື່ອງຈາກການຍົກເວັ້ນອາກອນ. | | |
| **ເຊື່ອມໂຍງກັບ NSEDP ຄັ້ງທີ IX:**<br><br>ຜົນໄດ້ຮັບ 1: ການເຕີບໂຕດ້ານເສດຖະກິດທີ່ມີຄຸນນະພາບ, ໝັ້ນຄົງ ແລະ ຍືນຍົງ; ໝາກຜົນ 4: ຄຸນນະພາບດີຂຶ້ນ, ເຂັ້ມແຂງ ແລະ ສາມາດແຂ່ງຂັນໃນລະດັບພາກພື້ນ ແລະ ລະດັບສາກົນ ຂອງຈູນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ.<br><br>ຜົນໄດ້ຮັບ 6: ການຄຸ້ມຄອງຂອງລັດ ແລະ ການປົກຄອງໄດ້ຮັບການປັບປຸງ, ສັງຄົມມີຄວາມສະເໝີພາບ, ຍຸຕິທໍາ, ແລະ ໄດ້ຮັບການປົກປ້ອງດ້ວຍກົດໝາຍ. | | |
| **ໜ່ວຍງານຄູ່ຮ່ວມງານ:** ກົມສົ່ງເສີມການລົງທຶນ (ກະຊວງແຜນການ ແລະ ການລົງທຶນ), ກົມພາສີ (ກະຊວງການເງິນ), ກອງທຶນ SME ແລະ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ (ກະຊວງອຸດສາຫະກໍາ ແລະ ການຄ້າ), ເສດຖະກິດມະຫາພາກ SWG | | |

| ອົງປະກອບ 2: ການຄຸ້ມຄອງໜີ້ສິນ ແລະ ຄວາມໂປ່ງໃສ | ເສົາຄໍ້າ 1: ການສະໜອງທຶນສໍາລັບການພັດທະນາແບບຍືນຍົງ ແລະ ການພັດທະນາການຮ່ວມມືຢ່າງມີປະສິດທະຜົນ | ໜ່ວຍງານນໍາພາຈັດຕັ້ງປະຕິບັດ: ກົມຄຸ້ມຄອງໜີ້ສິນ, ກະຊວງການເງິນ |
|---|---|---|
| **ລາຍລະອຽດອົງປະກອບ ($9^{th}$ NSEDP ຈຸດປະສົງຍຸດທະສາດການເງິນ 1.3.1, ໃນຂົງເຂດນະໂຍບາຍ 1.3: ການຄຸ້ມຄອງໜີ້ສິນ)**<br><br>ການແກ້ໄຂໜີ້ສິນຢ່າງທັນການແມ່ນຈໍາເປັນ ເພື່ອສ້າງພື້ນທີ່ຂອບເຂດງົບປະມານໃຫ້ແກ່ການລົງທຶນພັດທະນາ | | |
| **ການຈັດຕັ້ງບູລິມະສິດ:**<br><br>1. ສືບຕໍ່ສັງລວມໜີ້ສິນໂດຍການເຈລະຈາຄືນໃໝ່ ເພື່ອ (1) ຍົກເລີກ ຫຼື ຫຼຸດຜ່ອນການຊໍາລະໜີ້ສິນ ແລະ/ຫຼື ຂະຫຍາຍໄລຍະເງິນກູ້ຢືມໃຫ້ຮອດເຄິ່ງປີທີສອງຂອງຊຸມປີ 2020 ໂດຍບໍ່ໃຫ້ສູນເສຍການເຂົ້າເຖິງເງິນກູ້ຢືມໃນອະນາຄົດ ແລະ (2) ຄົ້ນຄວ້າການທັບປ່ຽນໜີ້ສິນກັບເຈົ້າໜີ້ລາຍໃຫຍ່; | | |

<table>
<tr><th>ອົງປະກອບ 2: ການຄຸ້ມຄອງໜີ້ສິນ ແລະ ຄວາມໂປ່ງໃສ</th><th>ເສົາຄໍ້າ 1: ການສະໜອງທຶນສໍາລັບການພັດທະນາແບບຍືນຍົງ ແລະ ການພັດທະນາການຮ່ວມມືຢ່າງມີປະສິດທະຜົນ</th><th>ໜ່ວຍງານນໍາພາຈັດຕັ້ງປະຕິບັດ: ກົມຄຸ້ມຄອງໜີ້ສິນ, ກະຊວງການເງິນ</th></tr>
<tr><td colspan="3">2. ການສຶກສາ ແລະ ການຄົ້ນຄວ້າຂໍ້ລິເລີ່ມໃນການແກ້ໄຂໜີ້ສິນຫຼາຍຝ່າຍ ແລະ ການພັກຊໍາລະໜີ້ ເພື່ອສ້າງພື້ນທີ່ງົບປະມານໃຫ້ແກ່ການລົງທຶນພັດທະນາ ແລະ ໃຫ້ສປປລາວມີເວລາພຽງພໍໃນການເພີ່ມອັດຕາລາຍຮັບຕໍ່ GDP</td></tr>
<tr><td colspan="3">ເຫດຜົນ: ການຊໍາລະໜີ້ສິນ ແລະ ການບໍລິການແມ່ນໜັກໜ່ວງຫຼາຍຕໍ່ຄວາມສາມາດຂອງງົບປະມານໃນການພັດທະນາດ້ານການເງິນ. ໃນປີ 2022 ເປັນຄັ້ງທໍາອິດ, ທີ່ຄ່າໃຊ້ຈ່າຍໃນການຊໍາລະໜີ້ສິນຈະເກີນງົບປະມານທີ່ມີຢູ່ຂອງຂະແໜງການສາທາລະນະສຸກແລະການສຶກສາລວມກັນ. ການຫຼຸດອັດຕາການໃຫ້ສິນເຊື່ອຂອງ ສປປລາວ ເຮັດໃຫ້ປະເທດມີອັນດັບສິນເຊື່ອຕໍ່າສຸດໃນອາຊີໂດຍບໍ່ຕ້ອງຜິດນັດຊໍາລະ, ຄວາມຕ້ອງການຊື້ພັນທະບັດມີຈໍາກັດ, ເຮັດໃຫ້ການອອກພັນທະບັດໃໝ່ມີຄ່າໃຊ້ຈ່າຍສູງ, ດັ່ງນັ້ນຈຶ່ງຈໍາກັດໂອກາດໃນການລວມໜີ້. ການປະເມີນການກໍານົດການຊໍາລະໜີ້ຢ່າງລະອຽດ, ການລະບຸຄວາມເປັນໄປໄດ້ໃນການທົດແທນເງິນກູ້ຢືມເພື່ອການຄ້າທີ່ມີອັດຕາດອກເບ້ຍສູງ, ການເຈລະຈາກັບເຈົ້າໜີ້ຕ່າງປະເທດ, ແລະ ການພິຈາລະນາຢ່າງລະມັດລະວັງກ່ຽວກັບ SOEs (ທະນາຄານສົ່ງເສີມກະສິກໍາ ແລະ ທະນາຄານພັດທະນາລາວ ໄດ້ຮັບການປະຕິຮູບເມື່ອບໍ່ດົນມານີ້) ຈຶ່ງຖືເປັນເລື່ອງເລັ່ງດ່ວນ.</td></tr>
<tr><td colspan="3">ເຊື່ອມໂຍງກັບ NSEDP ຄັ້ງທີ IX:<br><br>ຜົນໄດ້ຮັບ 1: ການເຕີບໂຕດ້ານເສດຖະກິດທີ່ມີຄຸນນະພາບ, ໝັ້ນຄົງ ແລະ ຍືນຍົງ; ໝາກຜົນ 4: ຄຸນນະພາບດີຂຶ້ນ, ເຂັ້ມແຂງ ແລະ ສາມາດແຂ່ງຂັນໃນລະດັບພາກພື້ນ ແລະ ລະດັບສາກົນ ຂອງຈູນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ.</td></tr>
<tr><td colspan="3">ໜ່ວຍງານຄູ່ຮ່ວມງານ: ກະຊວງກະສິກໍາ ແລະ ປ່າໄມ້, ກະຊວງແຜນການ ແລະ ການລົງທຶນ, ເສດຖະກິດມະຫາພາກ SWG</td></tr>
</table>

<table>
<tr><th>ອົງປະກອບ 3: ຄວາມໝັ້ນຄົງຂອງຂະແໜງ ການເງິນ</th><th>ເສົາຄໍ້າ 1: ການສະໜອງທຶນໃຫ້ແກ່ການພັດທະນາແບບຍືນຍົງ ແລະ ການຮ່ວມມືພັດທະນາຢ່າງມີປະສິດທິພາບ</th><th>ໜ່ວຍງານນໍາພາຈັດຕັ້ງປະຕິບັດ: ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ</th></tr>
<tr><td colspan="3">ລາຍລະອຽດອົງປະກອບ ($9^{th}$ NSEDP ຈຸດປະສົງຍຸດທະສາດການເງິນ 3.2.2, ໃນຂົງເຂດນະໂຍບາຍ 3.2: ການລວບລວມດ້ານການເງິນ):<br><br>ການເລັ່ງການຈັດຕັ້ງປະຕິບັດໂຄງການ ເພື່ອເສີມຂະຫຍາຍລະບຽບການຄຸ້ມຄອງຄວາມສ່ຽງທາງການເງິນ ແລະ ຮັດແໜ້ນຂະແໜງການທະນາຄານ ໂດຍພິຈາລະນາເຖິງຄວາມສ່ຽງດ້ານເສດຖະກິດມະຫາພາກ ແລະ ເງິນຕາໃນປະຈຸບັນ</td></tr>
</table>

| **ອົງປະກອບ 3:** ຄວາມໝັ້ນຄົງຂອງຂະແໜງ ການເງິນ | **ເສົາຄໍ້າ 1:** ການສະໜອງທຶນໃຫ້ແກ່ການພັດທະນາແບບຍືນຍົງ ແລະ ການຮ່ວມມືພັດທະນາຢ່າງມີປະສິດທິພາບ | **ໜ່ວຍງານນໍາພາຈັດຕັ້ງປະຕິບັດ:** ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ |
|---|---|---|

**ການຈັດຕັ້ງບູລິມະສິດ:**

1. ການເລັ່ງການຈັດຕັ້ງປະຕິບັດໂຄງການ ເພື່ອເສີມຂະຫຍາຍລະບຽບການຄຸ້ມຄອງຄວາມສ່ຽງທາງການເງິນ ແລະ ຮັດແໜ້ນຂະແໜງການທະນາຄານ ໂດຍພິຈາລະນາເຖິງຄວາມສ່ຽງດ້ານເສດຖະກິດມະຫາພາກ ແລະ ເງິນຕາໃນປະຈຸບັນ
2. ກະກຽມຖານຂໍ້ມູນລວມສູນກ່ຽວກັບສັນຍາສໍາປະທານທັງໝົດ

**ເຫດຜົນ:** ຂະແໜງການເງິນພົບສິ່ງທ້າທາຍທີ່ມີມາຍາວນານ ແລະເພື່ອຄວາມຍືນຍົງຂອງຂະແໜງການເງິນ ທະນາຄານພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກໍາໄດ້ປະຕິຮູບຄືນໃໝ່ - ແຕ່ໂຄວິດ 19 ເຮັດໃຫ້ສິ່ງທ້າທາຍນີ້ຮຸນແຮງຂຶ້ນ. ທະນາຄານໂລກສັງເກດວ່າອັດຕາສ່ວນ NPL ເພີ່ມຈາກ 3 ເປັນ 3.2% ແລະ ກໍາໄລຂອງທະນາຄານຫຼຸດລົງ. ເຖິງຢ່າງໃດກໍ່ຕາມ, ອັດຕາສ່ວນເງິນທຶນຕໍ່ຊັບສິນມີຄວາມສ່ຽງເພີ່ມຂຶ້ນຈາກ 11.8% ໃນໄຕມາດ 4 ປີ 2019 ເປັນ 13.2% ໃນໄຕມາດ 4 ປີ 2020, ປະຕິບັດຕາມລະບຽບການດ້ານຄວາມສ່ຽງສະບັບປັບປຸງໃໝ່, ສະແດງໃຫ້ເຫັນຄວາມຈໍາເປັນເພື່ອສ້າງຄວາມເຂັ້ມແຂງໃຫ້ກັບລະບຽບການດ້ານການເງິນອີງໃສ່ທ່າອ່ຽງດ້ານການເງິນທົ່ວໂລກໃນປະຈຸບັນ.

**ເຊື່ອມໂຍງກັບ NSEDP ຄັ້ງທີ IX:**

ຜົນໄດ້ຮັບ 1: ການເຕີບໂຕດ້ານເສດຖະກິດທີ່ມີຄຸນນະພາບ, ໝັ້ນຄົງ ແລະ ຍືນຍົງ; ໝາກຜົນ 4: ຄຸນນະພາບດີຂຶ້ນ, ເຂັ້ມແຂງ ແລະ ສາມາດແຂ່ງຂັນໃນລະດັບພາກພື້ນ ແລະ ລະດັບສາກົນ ຂອງຈູນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ.

**ໜ່ວຍງານຄູ່ຮ່ວມງານ:** ກອງປະຊຸມທຸລະກິດລາວ, ເສດຖະກິດມະຫາພາກ SWG, ກົມນະໂຍບາຍການເງິນ (ທະນາຄານແຫ່ງ ສປປ ລາວ), ກະຊວງພະລັງງານ ແລະ ບໍ່ແຮ່

## 4.2 ເສົາຄ້ຳ 2: ການຄ້າ ແລະ ພາກເອກະຊົນ, ຕ່ອງໂສ້ມູນຄ່າ ແລະ ການທ່ອງທ່ຽວ

ເສົາຄ້ຳນີ້ຊີ້ໃຫ້ເຫັນເຖິງການປັບປຸງສະພາບແວດລ້ອມທາງທຸລະກິດ ແລະ ການລົງທຶນ. ການຈັດຕັ້ງປະຕິບັດສະເພາະທີ່ໄດ້ລະບຸໄວ້ໃນຂອບການຟື້ນຟູເສດຖະກິດແມ່ນສອດຄ່ອງກັບການຈັດຕັ້ງປະຕິບັດ/ຄຳແນະນຳຕົ້ນຕໍທີ່ລະບຸໄວ້ໃນເອກະສານປະຫວັດຄວາມເປັນມາຂອງໂຄວິດ 19, ໄດ້ແກ່: (a) ສະພາບແວດລ້ອມທາງທຸລະກິດ ແລະ ການລົງທຶນ, (b) ການທ່ອງທ່ຽວ, (c) ກະສິກຳ, ແລະ (d) ການຫັນປ່ຽນເປັນດີຈີຕອນ.

<table>
<tr>
<th>ອົງປະກອບ 1: ສະພາບແວດລ້ອມການລົງທຶນ ແລະ ທຸລະກິດ</th>
<th>ເສົາຄ້ຳ 2: ການຄ້າ ແລະ ພາກເອກະຊົນ, ຕ່ອງໂສ້ມູນຄ່າ ແລະ ການທ່ອງທ່ຽວ</th>
<th>ໜ່ວຍງານນຳພາຈັດຕັ້ງປະຕິບັດ: ກົມສົ່ງເສີມການລົງທຶນ (ກະຊວງແຜນການ ແລະ ການລົງທຶນ), ກະຊວງອຸດສາຫະກຳ ແລະ ການຄ້າ</th>
</tr>
<tr>
<td colspan="3">ລາຍລະອຽດອົງປະກອບ: ສ້າງສະພາບແວດລ້ອມທີ່ດຶງດູດການລົງທຶນໂດຍກົງຈາກຕ່າງປະເທດທັງພາຍໃນ ແລະ ທົ່ວໂລກ ເພື່ອສະໜັບສະໜູນຄວາມໝັ້ນຄົງດ້ານງົບປະມານມະຫາພາກ, ການໃຊ້ຈ່າຍທາງສັງຄົມ ແລະ ກິດຈະກຳຊຸກຍູ້ເສດຖະກິດສີຂຽວ ແລະ ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ເຊັ່ນດຽວກັນກັບການນຳໃຊ້ຮູບແບບການສະໜອງທຶນທີ່ແຕກຕ່າງກັນລວມທັງການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ[31].</td>
</tr>
<tr>
<td colspan="3">ການຈັດຕັ້ງບູລິມະສິດ:<br><br>1. ໃຊ້ປະໂຫຍດຈາກການເຈລະຈາລະຫວ່າງພາກລັດ ແລະ ເອກະຊົນ ໃນກອງປະຊຸມທຸລະກິດລາວ ເພື່ອເປັນເວທີໃນການແກ້ໄຂບັນຫາທີ່ກະທົບຕໍ່ການດຳເນີນທຸລະກິດ[32].<br>2. ສືບຕໍ່ພະຍາຍາມຊຸກຍູ້ສະພາບແວດລ້ອມທາງທຸລະກິດທີ່ມີປະສິດທິພາບ ແລະ ຍຸດທະສາດດຶງດູດ ແລະ ສົ່ງເສີມການລົງທຶນໂດຍກົງຈາກຕ່າງປະເທດ (FDI) ຮອບດ້ານ[33]. ໃນນີ້ລວມມີ:<br>1) ການຫຼຸດຄວາມຊັບຊ້ອນໃນການຂໍໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນ ແລະ ໃບອະນຸຍາດ (ສະໜັບສະໜູນພາຍໃຕ້ໂຄງການແຂ່ງຂັນ ແລະ ການຄ້າຂອງລາວ) ແລະ ຂະຫຍາຍອາຍຸການນຳໃຊ້<br>2) ການປະຕິຮູບສະພາບແວດລ້ອມໃນການດຳເນີນທຸລະກິດ, ໂດຍສະເພາະແມ່ນອຳນວຍຄວາມສະດວກໃນການເຂົ້າເມືອງ ແລະ ການຄຸ້ມຄອງນັກລົງທຶນທີ່ເພີ່ມຂຶ້ນ, ທັງໝົດນີ້ແມ່ນເປັນໄປຕາມມາດ ຕະຖານສາກົນ.</td>
</tr>
</table>

[31] ທິດທາງຂອງນະໂຍບາຍນີ້ແມ່ນຕິດພັນກັບຈຸດປະສົງນະໂຍບາຍ 4.1.1 ຂອງຍຸດທະສາດດ້ານການເງິນ ຂອງ NSEDP ຄັ້ງທີ 9: ການລົງທຶນໂດຍກົງຈາກຕ່າງປະເທດທີ່ມີຄຸນນະພາບ ຈະຊ່ວຍປະກອບສ່ວນເຂົ້າໃນການພັດທະນາວຽກງານບູລິມະສິດຂອງປະເທດເພີ່ມຫຼາຍຂຶ້ນ ຜ່ານຍຸດທະສາດສົ່ງເສີມການລົງທຶນທີ່ສຸມໃສ່ແຮງຈູງໃຈທີ່ບໍ່ແມ່ນດ້ານການເງິນ ແລະ ການປະຕິຮູບສະພາບແວດລ້ອມໃນການດຳເນີນທຸລະກິດ.

[32] ການດຳເນີນການນີ້ໄດ້ຮັບແຮງບັນດານໃຈ ແລະ ກຳນົດການປະຕິບັດງານທີ່ສຳຄັນພາຍໃຕ້ NSEDP ຄັ້ງທີ 9 ຂົງເຂດນະໂຍບາຍຂອງຍຸດທະສາດດ້ານການເງິນ 3.1: ສະພາບແວດລ້ອມໃນການດຳເນີນທຸລະກິດສຳລັບ MSMEs, ຈຸດປະສົງນະໂຍບາຍ 3.1.1: ປັບປຸງສະພາບແວດລ້ອມການດຳເນີນທຸລະກິດ ເພື່ອປົດລັອກກະແສການເງິນພາກເອກະຊົນພາຍໃນປະເທດໃນຂະແໜງການບູລິມະສິດ, ບໍ່ມີຫົວຂໍ້: ການປຶກສາຫາລືລະຫວ່າງພາກລັດ ແລະ ເອກະຊົນ ເພື່ອເພີ່ມທະວີການຄົ້ນຄວ້າ ແລະ ນະໂຍບາຍກ່ຽວກັບສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ແຮງຈູງໃຈໃຫ້ແກ່ MSME (1) ການພັດທະນາໃນຂະແໜງການບູລິມະສິດ, (2) ການເຊື່ອມໂຍງກັບຕ່ອງໂສ້ມູນຄ່າໃນພາກພື້ນ ແລະ ສາກົນ , ແລະ (3) ການດຳເນີນທຸລະກິດທີ່ມີຄວາມຮັບຜິດຊອບ (ເຊິ່ງມີກອງປະຊຸມທຸລະກິດລາວເປັນດັ່ງກົນໄກການປະສານງານ)

[33] ການດຳເນີນການນີ້ໄດ້ຮັບແຮງບັນດານໃຈ ແລະ ກຳນົດການປະຕິບັດງານທີ່ສຳຄັນພາຍໃຕ້ NSEDP ຄັ້ງທີ 9 ຂົງເຂດນະໂຍບາຍຂອງຍຸດທະສາດດ້ານການເງິນ 4.1: ການລົງທຶນໂດຍກົງຈາກຕ່າງປະເທດ, ຂົງເຂດນະໂຍບາຍ 4.1.1: FDI ທີ່ມີຄຸນນະພາບຈະຊ່ວຍປະກອບສ່ວນເຂົ້າໃນການພັດທະນາວຽກງານບູລິມະສິດຂອງປະເທດເພີ່ມຫຼາຍຂຶ້ນ ຜ່ານຍຸດທະສາດສົ່ງເສີມການລົງທຶນທີ່ສຸມໃສ່ແຮງຈູງໃຈທີ່ບໍ່ແມ່ນທາງການເງິນ ແລະ ການປະຕິຮູບສະພາບແວດລ້ອມໃນການດຳເນີນທຸລະກິດ. ບໍ່ມີຫົວຂໍ້: ການສ້າງຍຸດທະສາດການດຶງດູດ ແລະ ສົ່ງເສີມ FDI ຮອບດ້ານ ທີ່ມີຫຼາຍພາກສ່ວນກ່ຽວຂ້ອງ, ເຊິ່ງປະກອບດ້ວຍ (1) ຖະແຫຼງການນະໂຍບາຍ FDI ທີ່ຊີ້ແຈງວິໄສທັດຍຸດທະສາດຂອງ ສປປ ລາວ ກ່ຽວກັບການສົ່ງເສີມ ແລະ ດຶງດູດ FDI, (2) ການທົບທວນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ລະບຽບການຂອງ SEZ (3) ການວິເຄາະຕົ້ນທຶນ-ຜົນປະໂຫຍດ ແລະ ສະເໜີການປະຕິຮູບກົດໝາຍ ແລະ ລະບຽບການຂອງລະບອບແຮງຈູງໃຈໃນປະຈຸບັນ, ໃຫ້ບູລິມະສິດເປົ້າໝາຍການຈູງໃຈທາງການເງິນແກ່ຂະແໜງການບູລິມະສິດ (ຂະແໜງສັງຄົມ ແລະ ການເຕີບໂຕສີຂຽວ) ແລະ ແຮງຈູງໃຈທີ່ບໍ່ແມ່ນດ້ານການເງິນ ແລະ (4) ການປະຕິຮູບສະພາບແວດລ້ອມໃນການດຳເນີນທຸລະກິດ, ໂດຍສະເພາະແມ່ນອຳນວຍຄວາມສະດວກໃນການເຂົ້າເມືອງ ແລະ ການຄຸ້ມຄອງນັກລົງທຶນທີ່ເພີ່ມຂຶ້ນ, ທັງໝົດນີ້ແມ່ນເປັນໄປຕາມມາດຕະຖານສາກົນ.

<table>
<tr><th>ອົງປະກອບ 1: ສະພາບແວດລ້ອມການລົງທຶນ ແລະ ທຸລະກິດ</th><th>ເສົາຄ້ຳ 2: ການຄ້າ ແລະ ພາກເອກະຊົນ, ຕ່ອງໂສ້ມູນຄ່າ ແລະ ການທ່ອງທ່ຽວ</th><th>ໜ່ວຍງານນຳພາຈັດຕັ້ງປະຕິບັດ: ກົມສົ່ງເສີມການລົງທຶນ (ກະຊວງແຜນການ ແລະ ການລົງທຶນ), ກະຊວງອຸດສາຫະກຳ ແລະ ການຄ້າ</th></tr>
<tr><td colspan="3">
3) ມີຖະແຫຼງການນະໂຍບາຍ FDI ທີ່ຊີ້ແຈງວິໄສທັດຍຸດທະສາດຂອງ ສປປ ລາວ ກ່ຽວກັບການສົ່ງເສີມ ແລະ ດຶງດູດ FDI,<br>
4) ຊຸກຍູ້ການປຸງແຕ່ງວັດຖຸດິບຂອງທ້ອງຖິ່ນ ໂດຍຜ່ານລະບົບຕ່ອງໂສ້ອຸດສາຫະກຳທ້ອງຖິ່ນ, ເພື່ອຍາດແຍ່ງມູນຄ່າເພີ່ມໃຫ້ແກ່ເສດຖະກິດ ສປປ ລາວ [ເຊື່ອມໂຍງກັບເສົາຄ້ຳ 5],<br>
5) ທົບທວນຄືນກົດໝາຍສົ່ງເສີມການລົງທຶນ ແລະ ລະບຽບການ SEZ<br>
6) ດຳເນີນການວິເຄາະຕົ້ນທຶນ ແລະ ຜົນປະໂຫຍດ ແລະ ສະເໜີການປັບປຸງກົດໝາຍ ແລະ ລະບຽບຂໍ້ບັງຄັບຂອງສິ່ງຈູງໃຈໃນປະຈຸບັນ, ຈັດລຳດັບຄວາມສຳຄັນຂອງແຮງຈູງໃຈທາງການເງິນຕາມເປົ້າໝາຍຂອງຂະແໜງການບູລິມະສິດ (ຂະແໜງສັງຄົມ ແລະ ການເຕີບໂຕສີຂຽວ) ແລະ ແຮງຈູງໃຈທີ່ບໍ່ແມ່ນທາງການເງິນ ແລະ (5)<br>
3. ປຶກສາຫາລືກັບກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ພາກເອກະຊົນ ເພື່ອຮັບປະກັນຄຸນນະພາບຂອງຫົນທາງ ແລະ ພື້ນຖານໂຄງລ່າງໃຫ້ດີຂຶ້ນ ເພື່ອໃຫ້ການດຳເນີນທຸລະກິດມີປະສິດທິພາບ, ພ້ອມທັງປັບປຸງການເຊື່ອມໂຍງເຂົ້າກັບຕ່ອງໂສ້ມູນຄ່າຂອງພາກພື້ນ ໂດຍການນຳໃຊ້ລະບົບຂົນສົ່ງ ແລະ ພື້ນຖານໂຄງລ່າງທີ່ທັນສະໄໝ ເຊັ່ນ ທາງດ່ວນ ແລະ ທາງລົດໄຟລະຫວ່າງ ສປປ ລາວ ແລະ ຈີນ<br>
4. ເສີມສ້າງຄວາມສາມາດຂອງ SME ເພື່ອເພີ່ມທະວີຄວາມທົນທານຂອງເຂົາເຈົ້າຕໍ່ຜົນກະທົບໃນອະນາຄົດ (ເສດຖະກິດ, ສິ່ງແວດລ້ອມ, ສາທາ ລະນະສຸກ ແລະ ອື່ນໆ) ພ້ອມທັງລົງທຶນໃນຊັບພະຍາກອນມະນຸດຂອງປະເທດ ເພື່ອຕອບສະໜອງຄວາມຕ້ອງການດ້ານແຮງງານທີ່ມີສີມື (ເບິ່ງເສົາຄ້ຳ 4).
</td></tr>
<tr><td colspan="3">ເຫດຜົນ: ສປປລາວ ປະເຊີນກັບສະພາບແວດລ້ອມ ໃນການດຳເນີນທຸລະກິດທີ່ຊັບຊ້ອນ ແລະ ຄຸມເຄືອ ພ້ອມທັງອຸປະສັກດ້ານການຄ້າ ແລະ ການເຊື່ອມໂຍງກັບພາກພື້ນ. ສິ່ງດັ່ງກ່າວໄດ້ຈຳກັດແຮງດຶງດູດຂອງ ສປປລາວ ໃນການເປັນຈຸດໝາຍປາຍທາງຂອງການລົງທຶນ. ພະຍາດລະບາດໂຄວິດ 19 ເຮັດໃຫ້ການລົງທຶນຕ່າງປະເທດຫຼຸດລົງຕື່ມອີກ.</td></tr>
<tr><td colspan="3">ເຊື່ອມໂຍງກັບ NSEDP ຄັ້ງທີ IX:<br>
1. ຜົນໄດ້ຮັບ 1: ການເຕີບໂຕດ້ານເສດຖະກິດທີ່ມີຄຸນນະພາບ, ໝັ້ນຄົງ ແລະ ຍືນຍົງ; ໝາກຜົນ 4: ຄຸນນະພາບດີຂຶ້ນ, ເຂັ້ມແຂງ ແລະ ສາມາດແຂ່ງຂັນໃນລະດັບພາກພື້ນ ແລະ ລະດັບສາກົນ ຂອງຈູນລະວິສາຫະກິດ , ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ.<br>
2. ຜົນໄດ້ຮັບ 2: ປັບປຸງຄຸນນະພາບຂອງຊັບພະຍາກອນມະນຸດເພື່ອຕອບສະໜອງການພັດທະນາ, ຄວາມສາມາດໃນການຄົ້ນຄວ້າ, ວິທະຍາສາດ, ເຕັກໂນໂລຊີ, ສ້າງມູນຄ່າເພີ່ມໃຫ້ແກ່ການຜະລິດແລະການບໍລິການ.<br>
3. ຜົນໄດ້ຮັບ 5: ການມີສ່ວນຮ່ວມໃນພາກພື້ນ ແລະ ສາກົນ ແລະ ເຊື່ອມໂຍງເຂົ້າກັບພື້ນຖານໂຄງລ່າງທີ່ເຂັ້ມແຂງ ແລະ ນຳໃຊ້ທ່າແຮງຂອງຊາດ ແລະ ຄວາມໄດ້ປຽບທາງພູມມີສາດຢ່າງມີປະສິດທິຜົນ.</td></tr>
<tr><td colspan="3">ໜ່ວຍງານຄູ່ຮ່ວມງານທີ່ມີທ່າແຮງ: ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ທະນາຄານແຫ່ງ ສປປ ລາວ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງກະສິກຳ ແລະ ປ່າໄມ້, ຄູ່ຮ່ວມພັດທະນາ</td></tr>
</table>

| ອົງປະກອບ 2: ການທ່ອງທ່ຽວ | ເສົາຄ້ຳ 2: ການຄ້າ ແລະ ພາກເອກະຊົນ, ຕ່ອງໂສ້ມູນຄ່າ ແລະ ການທ່ອງທ່ຽວ | ໜ່ວຍງານນຳພາຈັດຕັ້ງປະຕິບັດ: ກົມແຜນການ ແລະ ການຮ່ວມມື (ກະຊວງອຸດສາຫະກຳ ແລະ ການຄ້າ) |
|---|---|---|

**ລາຍລະອຽດການຈັດຕັ້ງປະຕິບັດ:** ການຟື້ນຟູຂະແໜງການທ່ອງທ່ຽວ ໃຫ້ໄປສູ່ຕຳແໜ່ງທີ່ເປັນໜຶ່ງໃນຂະແໜງການສະໜັບສະໜູນຫຼັກຕໍ່ເສດຖະກິດ ແລະ ນາຍຈ້າງ ໃນ ສປປລາວ ເຊິ່ງເປັນປັດໃຈສຳຄັນໃນການຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມກ້າວໜ້າທາງດ້ານເສດຖະກິດ-ສັງຄົມ.

**ການຈັດຕັ້ງບູລິມະສິດ:**

1. ເສີມຂະຫຍາຍຂະແໜງການທ່ອງທ່ຽວຂອງ ສປປ ລາວ ສຳລັບການເຕີບໂຕຂອງຕະຫຼາດ ສ.ເກົາຫຼີ ແລະ ຈີນ ແລະ ບັນດາປະເທດອື່ນໆ (ການພັດທະນາດ້ານຕະຫຼາດ, ຜະລິດຕະພັນ ແລະ ຈຸດໝາຍປາຍທາງ, ພັດທະນາສີມືແຮງງານ).
2. ສ້າງຕ່ອງໂສ້ການສະໜອງດ້ານການທ່ອງທ່ຽວໃຫ້ແທດເໝາະກັບທ່າອ່ຽງຂອງເສດຖະກິດສີຂຽວ ແລະ ການຊົມໃຊ້ແບບຍືນຍົງ (ຊື້ສິນຄ້າທີ່ເປັນມິດກັບສິ່ງແວດລ້ອມ, ປົກປັກຮັກສາແຫຼ່ງທ່ອງທ່ຽວທີ່ບໍ່ສາມາດປ່ຽນແປງໃໝ່, ປົກປັກຮັກສາລະບົບນິເວດ, ຄວາມຫຼາກຫຼາຍຂອງຜະລິດຕະພັນທີ່ຫັນໄປສູ່ການບໍລິໂພກສີຂຽວ).
3. ເພີ່ມທະວີການຮ່ວມມືພາກລັດ, ເອກະຊົນໃນຂະແໜງການທ່ອງທ່ຽວຜ່ານເວທີການຮ່ວມມື ເຊັ່ນ: ເຄືອຂ່າຍຄຸ້ມຄອງຈຸດໝາຍປາຍທາງ (DMN).

**ເຫດຜົນ:** ໂຄວິດ 19 ໄດ້ເຮັດໃຫ້ອຸດສາຫະກຳການທ່ອງທ່ຽວທົ່ວໂລກເປັນອຳມະພາດ, ດ້ວຍຈຳນວນນັກທ່ອງທ່ຽວສາກົນທົ່ວໂລກຫຼຸດລົງປະມານ 74%. ທຸລະກິດການທ່ອງທ່ຽວປະສົບກັບການຫຼຸດລົງຂອງລາຍຮັບໃນບາງພື້ນທີ່ລະຫວ່າງ 70 ຫາ 80%. ຈາກນັ້ນ, ລັດຖະບານລາວໄດ້ຮັບຮອງເອົາແຜນການພື້ນຟູຂະແໜງການທ່ອງທ່ຽວ ຂອງ ສປປລາວ ໃນໄລຍະ 2021 – 2025, ເຊິ່ງກຳນົດແນວທາງການດຳເນີນງານໃນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ເພື່ອການຟື້ນຕົວຂອງຂະແໜງການທ່ອງທ່ຽວຫຼັງພະຍາດໂຄວິດລະບາດ. ເປັນເວລາເກືອບ 2 ປີແລ້ວ, ທຸລະກິດທ່ອງທ່ຽວຫຼາຍຫົວໜ່ວຍບໍ່ໄດ້ດຳ ເນີນທຸລະກິດ ແລະ ບູລິມະສິດອັນດັບໜຶ່ງໃນອະນາຄົດອັນໃກ້ນີ້ ແມ່ນການຟື້ນຟູທຸລະກິດຫຼັກ (ໝາຍເຖິງ ຟື້ນຟູກະແສເງິນສົດຈາກຜະລິດຕະພັນທ່ອງທ່ຽວ ທີ່ເປັນລາຍຮັບສ່ວນໃຫຍ່ຂອງພວກເຂົາກ່ອນໂຄວິດ). ພາກເອກະຊົນໄດ້ຮ້ອງຂໍການສະໜັບສະໜູນໃນ 3 ຂົງເຂດຄື: ການເຄື່ອນໄຫວເງິນສົດ, ການຝຶກອົບຮົມເພື່ອໃຫ້ໄດ້ການຮັບຮອງ LaoSafe ແລະ ກຽມພ້ອມສຳລັບໂອກາດໃໝ່ ຜ່ານເສັ້ນທາງລົດໄຟເຊື່ອມຈອດ ລາວ-ຈີນ ທີ່ເປີດໃໝ່. ນອກຈາກນັ້ນ, ອາດຈະມີໂອກາດອັນໃຫຍ່ຫຼວງສາລັບການທ່ອງທ່ຽວ, ເມື່ອຈີນເປີດປະເທດຄືນໃໝ່ - ກະກຽມຂະແໜງການທ່ອງທ່ຽວ ແລະ ຂະແໜງ ການບໍລິການ ໃນການເຂົ້າມາຂອງນັກທ່ອງທ່ຽວຈີນ ແລະ ພາກສ່ວນຕະຫຼາດທີ່ມີທ່າແຮງແມ່ນການດຳເນີນການທີ່ສຳຄັນທີ່ຈະຕ້ອງໄດ້ຮັບການຈັດຕັ້ງປະຕິບັດ.

**ເຊື່ອມໂຍງກັບ NSEDP ຄັ້ງທີ IX:**

1. ຜົນໄດ້ຮັບ 1: ການເຕີບໂຕດ້ານເສດຖະກິດທີ່ມີຄຸນນະພາບ, ໝັ້ນຄົງ ແລະ ຍືນຍົງ
2. ຜົນໄດ້ຮັບ 4: ການປົກປັກຮັກສາສິ່ງແວດລ້ອມ ໄດ້ຮັບການເສີມຂະຫຍາຍ ແລະ ຄວາມສ່ຽງໄພພິບັດຫຼຸດລົງ

| ອົງປະກອບ 2: ການທ່ອງທ່ຽວ | ເສົາຄ້ຳ 2: ການຄ້າ ແລະ ພາກເອກະຊົນ, ຕ່ອງໂສ້ມູນຄ່າ ແລະ ການທ່ອງທ່ຽວ | ໜ່ວຍງານນຳພາຈັດຕັ້ງປະຕິບັດ: ກົມແຜນການ ແລະ ການຮ່ວມມື (ກະຊວງອຸດສາຫະກຳ ແລະ ການຄ້າ) |
|---|---|---|
| **ໜ່ວຍງານຄູ່ຮ່ວມງານທີ່ມີທ່າແຮງ:** ກະຊວງແຜນການ ແລະ ການລົງທຶນ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ທະນາຄານແຫ່ງ ສປປ ລາວ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງສາທາລະນະສຸກ, ຄູ່ຮ່ວມພັດທະນາ | | |

| ອົງປະກອບ 3: ກະສິກຳ | ເສົາຄ້ຳ 2: ການຄ້າ ແລະ ພາກເອກະຊົນ , ຕ່ອງໂສ້ມູນຄ່າ, ແລະ ການທ່ອງທ່ຽວ | ໜ່ວຍງານນຳພາຈັດຕັ້ງປະຕິບັດ: ກົມແຜນການ ແລະ ການເງິນ (ກະຊວງກະສິກຳ ແລະ ປ່າໄມ້) |
|---|---|---|
| **ລາຍລະອຽດອົງປະກອບ:** ສົ່ງເສີມກະສິກຳທີ່ເປັນມິດກັບສິ່ງແວດລ້ອມ ແລະ ປອດໄພ ເພື່ອແນໃສ່ການເພີ່ມຜົນຜະລິດ ແລະ ຜະລິດຕະພັນທີ່ມີຄວາມຫຼາກຫຼາຍ, ທີ່ເຮັດໃຫ້ຄວາມທຸກຍາກໃນເຂດຊົນນະບົດຫຼຸດລົງ ແລະ ເສີມສ້າງຄວາມທົນທານ. ໂຄວິດ 19 ສົ່ງຜົນກະທົບທາງລົບຕໍ່ຂະແໜງການ. ໃນການຕອບສະໜອງຕໍ່ຊາວກະສິກອນຂະໜາດນ້ອຍໄດ້ຮັບການສະໜັບສະໜູນໃຫ້ຟື້ນຟູຜະລິດຕະພັນກະສິກຳ ແລະ ການຫັນປ່ຽນໄປສູ່ລະບົບສະບຽງອາຫານທີ່ທົນທານ ໂດຍຜ່ານການເສີມສ້າງລະບົບຕ່ອງໂສ້ມູນຄ່າ ແລະ ການເຂົ້າເຖິງຕະຫຼາດ. ອົງຕາມອົງການອາຫານ ແລະ ການກະເສດ (2022) ເຫັນວ່າມີການສະໜອງທີ່ຫຼຸດລົງ ແລະ ລາຄາສິນຄ້າການກະເສດທີ່ເພີ່ມຂຶ້ນສູງ ສົ່ງຜົນກະທົບຕໍ່ການຜະລິດພືດໃນລະດູ "ຝົນ" ໃນປີ 2022, ລວມທັງເຂົ້າ ເປືອກ ເຊິ່ງເປັນອາຫານຫຼັກຂອງປະເທດ. ນອກນີ້, ລາຄາວັດຖຸດິບຂອງສັດລ້ຽງກໍ່ສູງຂຶ້ນຕັ້ງແຕ່ເດືອນເມສາ 2022 ແລະ ນັບແຕ່ທ້າຍເດືອນກໍລະກົດ 2022 ລາຄາອາຫານສ່ວນຫຼາຍກໍ່ເພີ່ມຂຶ້ນຢ່າງຫຼວງຫຼາຍ.[34] | | |
| **ການຈັດຕັ້ງບູລິມະສິດ:**<br><br>ເສີມຂະຫຍາຍຕ່ອງໂສ້ມູນຄ່າການຜະລິດໃນຂະແໜງກະສິກຳປຸງແຕ່ງ ໃຫ້ເໝາະສົມກັບຄວາມຕ້ອງການດ້ານສະບຽງອາຫານທັງພາຍໃນ ແລະ ພາຍນອກ. ຄວນໄດ້ຮັບບູລິມະສິດໃນການເຂົ້າເຖິງການນຳເຂົ້າ ເຊັ່ນ ຝຸ່ນ ແລະ ເບ້ຍໄມ້ ເຊັ່ນດຽວກັນກັບການປັບປຸງພື້ນຖານໂຄງລ່າງ ເຊັ່ນ ຖະໜົນຫົນທາງ, ການເກັບຮັກສາ ແລະ ລະບົບເຢັນ, ການຕະຫຼາດ, ການຂາຍຍ່ອຍ, ແລະ ການແຈກຢາຍຂົນສົ່ງ.<br><br>1. ເປີດໂອກາດສຳລັບການປະດິດສ້າງຂອງໄວໜຸ່ມ ແລະ ຜູ້ປະກອບການດ້ານກະສິກຳ ທີ່ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ເນື່ອງຈາກຄວາມໄດ້ປຽບໂດຍທຳມະຊາດຂອງພວກເຂົາ ຄືຄວາມເຂົ້າໃຈໃນເຕັກໂນໂລຊີ ແລະ ໂອກາດທີ່ເປັນໄປໄດ້ສຳລັບການຄົ້ນຄວ້າ ແລະ ການພັດທະ ນາ. | | |

34 Food and Agricultural Organization 2022. *Soaring prices and reduced availability of agricultural inputs curb 2022 agricultural production prospects, increasing risks for acute food insecurity*, https://www.fao.org/3/cc2094en/cc2094en.pdf accessed October 4, 2022

| ອົງປະກອບ 3: ກະສິກຳ | ເສົາຄ້ຳ 2: ການຄ້າ ແລະ ພາກເອກະຊົນ, ຕ່ອງໂສ້ມູນຄ່າ, ແລະ ການທ່ອງທ່ຽວ | ໜ່ວຍງານນຳພາຈັດຕັ້ງປະຕິບັດ: ກົມແຜນການ ແລະ ການເງິນ (ກະຊວງກະສິກຳ ແລະ ປ່າໄມ້) |
|---|---|---|

2. ການສົ່ງເສີມເຕັກນິກກະສິກຳ/ການປູກພືດທີ່ປັບປຸງໃຫ້ດີຂຶ້ນ ເພື່ອຫຼຸດຜ່ອນການປ່ອຍອາຍພິດ - ຍັງສາມາດສະໜອງຜົນປະໂຫຍດຮ່ວມກັນ ລວມທັງການເພີ່ມຄວາມທົນທານຂອງພືດ, ຜົນຜະລິດພືດ ແລະ ສິນເຊື່ອກາກບອນທີ່ມີທ່າແຮງ (**ເຊື່ອມໂຍງກັບເສົາຄ້ຳ 5; ອົງປະກອບ 2**).
3. ສະໜັບສະໜູນການຜະລິດສິນຄ້າທ້ອງຖິ່ນ ແລະ ຜະລິດຕະພັນກະສິກຳ ເພື່ອເຮັດໃຫ້ຕ່ອງໂສ້ການສະໜອງສັ້ນລົງ, ຫຼຸດຜ່ອນການປ່ອຍອາຍພິດໃນການຂົນສົ່ງ ແລະ ຊຸກຍູ້ການຈ້າງງານ ແລະ ສ້າງລາຍຮັບໃນທ້ອງຖິ່ນ.

**ເຫດຜົນ:** ໃນຊຸມຊົນເຂດຊົນນະບົດ ສປປ ລາວ ທີ່ຕ້ອງເພິ່ງພາອາໄສກະສິກຳຫຼາຍ ກໍ່ໃຫ້ເກີດຄວາມສ່ຽງເສດຖະກິດຕົກຕ່ຳເຊັ່ນກັນ. ໃນຊ່ວງທີ່ມີການແຜ່ລະບາດຂອງໂຄວິດ 19 ມີການຈຳກັດການເດີນທາງ ທີ່ໄດ້ສົ່ງຜົນກະທົບຕໍ່ການຂົນສົ່ງສິນຄ້າກະສິກຳພາຍໃນປະເທດ ຈາກຟາມໄປຫາຕະຫຼາດທ້ອງຖິ່ນທີ່ສຳຄັນ ໃນຂະນະດຽວກັນກໍ່ສົ່ງຜົນກະທົບຕໍ່ການສົ່ງອອກສິນຄ້າກະສິກຳບາງຊະນິດ ເຊັ່ນ ໝາກໂມ ສົ່ງໄປປະເທດຈີນ ແລະ ໄທ. ນັກລົງທຶນທີ່ປະຖິ້ມທີ່ດິນກະສິກຳ ບໍ່ສາມາດກັບຄືນມາ ສປປລາວ ເນື່ອງຈາກປິດຊາຍແດນ, ເຊິ່ງນຳໄປສູ່ການປິດກິດຈະການຂອງເຂົາເຈົ້າ, ເຮັດໃຫ້ປະຊາຊົນໃນຊົນນະບົດຂາດວຽກເຮັດງານທາ ແລະ ຫຼຸດຜ່ອນການບໍລິໂພກພາຍໃນປະເທດ. ມີການລິເລີ່ມຫຼາຍໂຄງການ ເພື່ອສະໜັບສະໜູນຊາວກະສິກອນຂະໜາດນ້ອຍທີ່ໄດ້ຮັບຜົນກະທົບທາງລົບຈາກພະບາດລະບາດ ເຊັ່ນ ການປູກຈິດສຳນຶກກ່ຽວກັບຄວາມສ່ຽງຕໍ່ການລະບາດຂອງໂຄວິດ 19 ແລະ ເສີມສ້າງຄວາມສາມາດຂອງທ້ອງຖິ່ນ ໃນການຄຸ້ມຄອງຄວາມສ່ຽງເຫຼົ່ານີ້ ດ້ວຍວິທີການທີ່ຫຼາກຫຼາຍ. ບັນຫາຄວາມບໍ່ໝັ້ນຄົງດ້ານສະບຽງອາຫານ ແລະ ການຫຼຸດຜ່ອນການຜະລິດກະສິກຳເພື່ອສົ່ງອອກ ແລະ ບໍລິໂພກພາຍໃນ ອາດຈະສົ່ງຜົນກະທົບຕໍ່ການຂາດສານອາຫານ ແລະ ການພັດທະນາຊົນນະບົດແບບຍືນຍົງ.

**ເຊື່ອມໂຍງກັບ NSEDP ຄັ້ງທີ IX:**

1. ຜົນໄດ້ຮັບ 1: ການເຕີບໂຕດ້ານເສດຖະກິດທີ່ມີຄຸນນະພາບ, ໝັ້ນຄົງ ແລະ ຍືນຍົງ
2. ຜົນໄດ້ຮັບ 2: ປັບປຸງຄຸນນະພາບຊັບພະຍາກອນມະນຸດ ເພື່ອຕອບສະໜອງການພັດທະນາ, ຄວາມສາມາດຄົ້ນຄວ້າ, ຄວາມຕ້ອງການດ້ານວິທະຍາສາດ ແລະ ເຕັກໂນໂລຊີ, ສ້າງມູນຄ່າເພີ່ມໃຫ້ແກ່ການຜະລິດ ແລະ ການບໍລິການ
3. ຜົນໄດ້ຮັບ 3: ເພີ່ມທະວີການເປັນຢູ່ທີ່ດີຂຶ້ນຂອງປະຊາຊົນ
4. ຜົນໄດ້ຮັບ 4: ການປົກປັກຮັກສາສິ່ງແວດລ້ອມເພີ່ມຂຶ້ນ, ຄວາມສ່ຽງໄພພິບັດຫຼຸດລົງ; ໝາກຜົນ 3: ຄວາມສາມາດໃນການປ້ອງກັນ, ຄຸ້ມຄອງ ແລະ ຟື້ນຟູໄພພິບັດເພີ່ມຂຶ້ນ

**ໜ່ວຍງານຄູ່ຮ່ວມງານທີ່ມີທ່າແຮງ:** ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງແຜນການ ແລະ ການລົງທຶນ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ສູນກາງຊາວໜຸ່ມ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ຄູ່ຮ່ວມພັດທະນາ

<table>
<tr><th>ອົງປະກອບ 4: ການຫັນປ່ຽນເປັນດີຈິຕອນ</th><th>ເສົາຄ້ຳ 2: ການຄ້າ ແລະ ພາກເອກະຊົນ, ຕ່ອງໂສ້ມູນຄ່າ, ແລະ ການທ່ອງທ່ຽວ</th><th>ໜ່ວຍງານນໍາພາຈັດຕັ້ງປະຕິບັດ: ກະຊວງອຸດສາຫະກໍາ ແລະ ການຄ້າ</th></tr>
<tr><td colspan="3">ລາຍລະອຽດອົງປະກອບ: ການຫັນປ່ຽນເປັນດິຈິຕອນໝາຍເຖິງ ວິທີການທີ່ເຕັກໂນໂລຊີດີຈິຕອນ ຖືກລວມເຂົ້າໃນການຂົນສົ່ງສິນຄ້າ ແລະ ການບໍລິການໃຫ້ແກ່ຜູ້ບໍລິໂພກ. ປະກອບດ້ວຍຫົກລັກສະນະຕົ້ນຕໍ ໄດ້ແກ່ ການເຮັດວຽກຮ່ວມກັນ, ປະສິບການ, ນະວັດຕະກໍາ, ພື້ນຖານໂຄງລ່າງທີ່ທັນສະໄໝ, ຄວາມຊໍານິຊໍານານໃນການດໍາເນີນງານ ເຊັ່ນ ດຽວກັນກັບຂໍ້ມູນ ແລະ ຄວາມເຂົ້າໃຈ.</td></tr>
<tr><td colspan="3">ການຈັດຕັ້ງບູລິມະສິດ:<br><br>1. ເສີມສ້າງສະພາບແວດລ້ອມສໍາລັບການຄ້າດິຈິຕອນ ດ້ວຍການພິຈາລະນາສິ່ງຕ່າງໆ ເຊັ່ນ:<br>a. ບັງຄັບໃຊ້ສັນຍາການຄ້າອີເລັກໂຕນິກແລະການຮ່ວມມືດ້ານເສດຖະກິດແບບຮອບດ້ານລະດັບພາກພື້ນ (RCEP). ຂໍ້ຕົກລົງເຫຼົ່ານີ້ແມ່ນເນັ້ນໜັກໃສ່ການຊຸກຍູ້ການເຕີບໂຕດ້ານການຄ້າອີເລັກໂຕນິກ (e-commerce) ໃນພາກພື້ນ ແລະ ເພີ່ມທະວີຄວາມສາມາດໃນການຈັດຕັ້ງປະຕິບັດ<br>b. ກໍານົດຂອບເຂດຂອງການຄ້າອີເລັກໂຕນິກ ແລະ ເຊື່ອມໂຍງຂະແໜງການຂອງຕົນ ໃນ ສປປລາວ. ຂອບເຂດ ແລະ ການເຊື່ອມໂຍງຂອງຕົນຄວນໄດ້ຮັບການຊຸກຍູ້ນະໂຍບາຍ, ຍຸດທະສາດ, ແລະ ລະບຽບການແຫ່ງຊາດໃຫ້ສອດຄ່ອງກັບກອບຍຸດທະສາດພາກພື້ນທີ່ໄດ້ວາງອອກໃນ “ການເລັ່ງການຫັນເປັນດິຈິຕອນ” ຕາມທີ່ກໍານົດໄວ້ໃນກອບການຟື້ນຟູຮອບດ້ານຂອງອາຊຽນ. ສິ່ງເຫຼົ່ານີ້ອະນຸຍາດໃຫ້ມີການປຽບທຽບກັບປະເທດອື່ນໆໃນພາກພື້ນ.<br>c. ພັດທະນາທິດທາງ IT-BPO ໂດຍສະຫຼຸບໂອກາດດ້ານເຕັກໂນໂລຊີທີ່ເກີດຂຶ້ນໃໝ່, ຂໍ້ກໍານົດດ້ານທັກສະ ແລະ ຂໍ້ກໍານົດດ້ານພື້ນຖານໂຄງລ່າງ<br>2. ການພັດທະນານະໂຍບາຍການຄ້າອີເລັກໂຕນິກທີ່ດີ ແລະ ກອບການປົກຄອງ, ໂດຍຜ່ານຍຸດທະສາດການຄ້າອີເລັກໂຕນິກແຫ່ງຊາດຢ່າງລະອຽດ ແລະ ແຜນການຈັດຕັ້ງປະຕິບັດ ທີ່ສະໜັບສະໜູນຜູ້ເຮັດການຄ້າອີເລັກໂຕນິກ ແລະ ຜູ້ບໍລິໂພກພາຍໃນປະເທດ, ສຸມໃສ່ທ່າແຮງ e-commerce ໃນຂະແໜງການຍ່ອຍທາງເສດຖະກິດຕ່າງໆ. ວິທີການແບບລວມໝູ່ ແລະ ຫຼາຍພາກສ່ວນທີ່ກ່ຽວຂ້ອງ, ເບິ່ງບັນດາຂົງເຂດນະໂຍບາຍທີ່ເຊື່ອມຕໍ່ກັນ ເຊັ່ນ ພື້ນຖານໂຄງລ່າງ ICT ແລະ ການບໍລິການ, ການອໍານວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ, ການແກ້ໄຂການຊໍາລະເງິນ, ກອບກົດໝາຍ ແລະລະບຽບການ, ການພັດທະນາສີມືແຮງງານ ແລະ ການເຂົ້າເຖິງການເງິນ[35]. ກອບດັ່ງກ່າວຈະປະກອບສ່ວນເຂົ້າໃນເປົ້າໝາຍການພັດທະນາທີ່ກວ້າງຂວາງຂອງລາວ ເຊັ່ນ ຄວາມຫຼາກຫຼາຍທາງດ້ານເສດຖະກິດ, ການສ້າງວຽກເຮັດງານທໍາ (ລວມທັງກຸ່ມແມ່ຍິງ, ໄວໜຸ່ມ ແລະ MSME) ແລະ ການສົ່ງອອກທີ່ເພີ່ມຂຶ້ນ.</td></tr>
</table>

[35] ການດໍາເນີນການນີ້ໄດ້ກໍານົດການປະຕິບັດງານທີ່ສໍາຄັນຂອງຍຸດທະສາດດ້ານການເງິນ ຂອງ NSEDP ຄັ້ງທີ 9, ຂົງເຂດນະໂຍບາຍ 3.1: ສະພາບແວດລ້ອມໃນການດໍາເນີນທຸລະກິດສໍາລັບ MSMEs, ຈຸດປະສົງນະໂຍບາຍ 3.1.1: ປັບປຸງສະພາບແວດລ້ອມການດໍາເນີນທຸລະກິດ ເພື່ອປົດລັອກກະແສການເງິນພາກເອກະຊົນພາຍໃນປະເທດໃນຂະແໜງການບູລິມະສິດ, ບໍ່ມີຫົວຂໍ້: ການປຶກສາຫາລືລະຫວ່າງລັດ ແລະ ເອກະຊົນ ເພື່ອເພີ່ມທະວີການຄົ້ນຄວ້າ ແລະ ນະໂຍບາຍກ່ຽວກັບສະພາບແວດລ້ອມທີ່ເອື້ອອໍານວຍ ແລະ ສ້າງແຮງຈູງໃຈໃຫ້ແກ່ MSME (1) ການພັດທະນາໃນຂະແໜງການບູລິມະສິດ, (2) ການເຊື່ອມໂຍງກັບຕ່ອງໂສ້ມູນຄ່າໃນພາກພື້ນ ແລະ ສາກົນ, ແລະ (3) ການດໍາເນີນທຸລະກິດທີ່ມີຄວາມຮັບຜິດຊອບ.

| **ອົງປະກອບ 4:** ການຫັນປ່ຽນເປັນດິຈິຕອນ | **ເສົາຄ້ຳ 2:** ການຄ້າ ແລະ ພາກເອກະຊົນ, ຕ່ອງໂສ້ມູນຄ່າ, ແລະ ການທ່ອງທ່ຽວ | ໜ່ວຍງານນໍາພາຈັດຕັ້ງປະຕິບັດ: ກະຊວງອຸດສາຫະກໍາ ແລະ ການຄ້າ |
|---|---|---|

3. ສົ່ງເສີມການຫັນເປັນດິຈິຕອນໃນຂະແໜງການບໍລິການພື້ນຖານ ເຊັ່ນ ການສຶກສາ ແລະ ສາທາລະນະສຸກ. ຕົວຢ່າງ ການນໍາສະເໜີ ICT ສາມາດຊ່ວຍຍົກລະດັບຄຸນນະພາບຂອງການສຶກສາ ແລະ ການບໍລິການສາທາລະນະສຸກແບບກ້າວກະໂດດ **(ສອດຄ່ອງກັບເສົາຄ້ຳ 4; ອົງປະກອບ 1 ແລະ 2).**

**ເຫດຜົນ:** ພື້ນຖານໂຄງລ່າງດ້ານໂທລະຄົມມະນາຄົມທີ່ດ້ອຍພັດທະນາ, ການແກ້ໄຂການຊໍາລະແບບດິຈິຕອນທີ່ຍັງຕໍ່າ, ການຮູ້ໜັງສື ແລະ ຄວາມເຂົ້າໃຈ ດ້ານເຕັກໂນໂລຊີທີ່ຈໍາກັດ ແມ່ນສິ່ງທ້າທາຍອັນໃຫຍ່ຫຼວງທີ່ຂັດຂວາງການບໍລິການ ICT ໃນ ສປປ ລາວ, ໂດຍສະເພາະໃນເຂດຊົນນະບົດ. ການເຕີບໂຕເພີ່ມເຕີມແມ່ນຖືກຈໍາກັດໂດຍການຂາດກົດໝາຍ ແລະ ຂໍ້ບັງຄັບສໍາລັບ e-commerce, ເປັນສະຖານະການທີ່ເຮັດໃຫ້ e-commerce ຢູ່ໃນຂອບເຂດຂອງການຄ້ານອກລະບົບ.

ການລະບາດຂອງໂຄວິດ 19 ໄດ້ກະຕຸ້ນໃຫ້ເກີດການຫັນປ່ຽນເປັນດິຈິຕອນຫຼາຍຂຶ້ນໃນທົ່ວໂລກ. ເຖິງຢ່າງໃດກໍ່ຕາມ, ການຂະຫຍາຍຕົວຂອງ e-commerce ແລະ ເສດຖະກິດດິຈິຕອນ ໃນຊ່ວງທີ່ເກີດພະຍາດລະບາດ ບໍ່ໄດ້ໃຫ້ປະໂຫຍດແບບດຽວກັນ ສໍາລັບປະເທດທີ່ມີລາຍຮັບຕໍ່າ ແລະ ຄວາມພ້ອມດ້ານດິຈິຕອນ ສົ່ງຜົນໃຫ້ຄວາມບໍ່ເທົ່າທຽມກັນທີ່ມີຢູ່ແລ້ວລະຫວ່າງ ແລະ ພາຍໃນປະເທດຂະຫຍາຍກວ້າງຂຶ້ນ[36]. ນອກຈາກນີ້, ວິກິດການຫຼາຍມິຕິ ຈາກຄວາມຂັດແຍ່ງໃນຢູເຄນ ໃນຊ່ວງເຄິ່ງປີທໍາອິດຂອງປີ 2022 ຄຸກຄາມ MSME ໃນປະເທດທີ່ກໍາລັງພັດທະນາ ໂດຍສະເພາະ LDC ທີ່ຕ້ອງຢຸດເຊົາກິດຈະການ, ໄດ້ສົ່ງຜົນໃຫ້ເສດຖະກິດ-ສັງຄົມຕົກຕໍ່າລົງ ແລະ ເຮັດໃຫ້ຄວາມບໍ່ສະເໝີພາບທີ່ມີຢູ່ແລ້ວຮຸນແຮງຂຶ້ນ, ໂດຍສະເພາະແມ່ນຜົນກະທົບທາງລົບຕໍ່ແມ່ຍິງ, ໄວໜຸ່ມ ແລະ ກຸ່ມປະຊາກອນທີ່ດ້ອຍໂອກາດຕາມຮີດຄອງປະເພນີ ເຊັ່ນ ຄົນພິການ (PwD)[37]. E-commerce ມີທ່າແຮງໃນການຢືນຢັນບົດບາດຂອງ MSME ໃນ LDC, ເປັນເຄື່ອງມືໃນການເຕີບໂຕ ແລະ ການຈ້າງງານ ໂດຍການເຂົ້າເຖິງຕະຫຼາດໃໝ່ ເຊັ່ນດຽວກັນກັບຕ່ອງໂສ້ມູນຄ່າຂອງພາກພື້ນ ແລະ ໃນທົ່ວໂລກ. ໃນ ສປປ ລາວ, ເຖິງວ່າຈະມີຄວາມພະຍາຍາມໃນການສ້າງກອບກົດໝາຍ ສໍາລັບ e-commerce[38] ແລະ ເພີ່ມທະວີການເຂົ້າຮ່ວມຂອງ ສປປ ລາວ ໃນຫຼາຍຂໍ້ລິເລີ່ມໃນລະດັບພາກພື້ນ ແລະ ສາກົນ, ແຕ່ກໍຍັງຈໍາເປັນຕ້ອງເພີ່ມທະວີການສ້າງຄວາມສາມາດເພີ່ມອີກ ເພື່ອຮັດ ແໜ້ນຄວາມພະຍາຍາມຢ່າງຕໍ່ເນື່ອງຂອງ 'ການຄ້າອີເລັກໂຕນິກເພື່ອທຸກຄົນ- eTrade for all" ແລະ ຄູ່ຮ່ວມງານອື່ນໆ[39], ເພື່ອສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ເສດຖະກິດດິຈິຕອນຂະຫຍາຍຕົວ.

**ເຊື່ອມໂຍງກັບ NSEDP ຄັ້ງທີ IX:**

1. ຜົນໄດ້ຮັບ 1: ການເຕີບໂຕດ້ານເສດຖະກິດທີ່ມີຄຸນນະພາບ, ໝັ້ນຄົງ ແລະ ຍືນຍົງ
2. ຜົນໄດ້ຮັບ 2: ປັບປຸງຄຸນນະພາບຊັບພະຍາກອນມະນຸດ ເພື່ອຕອບສະໜອງການພັດທະນາ, ຄວາມສາມາດໃນການຄົ້ນຄວ້າ, ຄວາມຕ້ອງການດ້ານວິທະຍາສາດ ແລະ ເຕັກໂນໂລຊີ, ສ້າງມູນຄ່າເພີ່ມໃຫ້ແກ່ການຜະລິດ ແລະ

36 E-Commerce and the Digital Economy in LDCs: At breaking point in COVID-19 times (unctad.org)
37 Ukraine in focus | UNCTAD
38 Laos Adopts New E-Commerce Regulation | ZICO Law
39 Socialisation Workshop on the RCEP E-Commerce Work Plan for Lao PDR | eTrade for all

| ອົງປະກອບ 4: ການຫັນປ່ຽນເປັນດີຈິຕອນ | ເສົາຄ້ຳ 2: ການຄ້າ ແລະ ພາກເອກະຊົນ, ຕ່ອງໂສ້ມູນຄ່າ, ແລະ ການທ່ອງທ່ຽວ | ໜ່ວຍງານນໍາພາຈັດຕັ້ງປະຕິບັດ: ກະຊວງອຸດສາຫະກໍາ ແລະ ການຄ້າ |
|---|---|---|
| ການບໍລິການ; ໝາກຜົນ 4: ສົ່ງເສີມ ແລະ ນໍາໃຊ້ການຄົ້ນຄວ້າວິທະຍາ ສາດ, ເຕັກໂນໂລຊີ, ນະວັດຕະກາ ແລະ ຄວາມຮູ້ ເພື່ອຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ. | | |
| **ໜ່ວຍງານຄູ່ຮ່ວມງານທີ່ມີທ່າແຮງ:** ກະຊວງອຸດສາຫະກໍາ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ, ກະຊວງກະສິກໍາ ແລະ ປ່າໄມ້, ສະຫະພັນແມ່ຍິງ, ສູນກາງຊາວໜຸ່ມ, ຄູ່ຮ່ວມພັດທະນາ | | |

## 4.3 ເສົາຄ້ຳ 3: ການຄຸ້ມຄອງການປ່ຽນແປງ ແລະ ການເພີ່ມທະວີການກະກຽມນະໂຍບາຍໃຫ້ແກ່ວຽກງານທີ່ເປັນທໍາ

ໃນເສົາຄ້ຳນີ້ສຸມໃສ່ບັນດາມາດຕະການກ່ຽວກັບຄ່າແຮງງານ, ການປົກປ້ອງສັງຄົມແລະການລວມຕົວ, ການອອກແຮງງານ, ການອົບພະຍົບ ແລະ ການຄຸ້ມຄອງຊາຍແດນ. ການດໍາເນີນງານບູລິມະສິດໄດ້ຖືກແບ່ງອອກເປັນຫົກອົງປະກອບ.

| ອົງປະກອບ 1: ການປຶກສາຫາລືກັບພາກສັງຄົມ. ກົດໝາຍວ່າດ້ວຍແຮງງານ, ການຄຸ້ມຄອງແຮງງານ ແລະ ການເຄື່ອນຍ້າຍຖິ່ນຖານ ແລະ ການຄຸ້ມຄອງຊາຍແດນແບບປະສົມປະສານ | ເສົາຄ້ຳ 3: ການຄຸ້ມຄອງການປ່ຽນແປງ ແລະ ການເພີ່ມທະວີການກະກຽມນະໂຍບາຍໃຫ້ແກ່ວຽກງານທີ່ເປັນທໍາ | ໜ່ວຍງານນໍາພາຈັດຕັ້ງປະຕິບັດ: ກົມແຜນການ ແລະ ການຮ່ວມມືສາກົນ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ) |
|---|---|---|
| **ລາຍລະອຽດອົງປະກອບ:** ສະພາບເສດຖະກິດ ແລະ ສັງຄົມທີ່ເປັນໄພຂົ່ມຂູ່ຕໍ່ຊີວິດການເປັນຢູ່ ແລະ ສະຫວັດດີການອັນຍາວນານຂອງປະຊາຊົນລາວທັງພາຍໃນ ແລະ ຕ່າງປະເທດ. ຄໍາແນະນໍານີ້ເນັ້ນໜັກໃສ່ການຈັດຕັ້ງປະຕິບັດ ແລະ ຂະບວນການທີ່ຈໍາເປັນ ເພື່ອຫຼຸດຜ່ອນການລົບກວນເຫຼົ່ານັ້ນ ແລະ ປົກປ້ອງສະຫວັດດີການຂອງສັງຄົມ ແລະ ສະຖາບັນຂອງຕົນໃນການຟື້ນຕົວຈາກພະຍາດລະບາດໂຄວິດ 19. | | |
| **ການຈັດຕັ້ງບູລິມະສິດ:**<br>1. ເສີມຂະຫຍາຍການເຂົ້າເຖິງການຍ້າຍຖິ່ນຖານແບບປົກກະຕິ ແລະປອດໄພ ໂດຍຂັ້ນຕອນການເຂົ້າອອກທີ່ເປັນມິດກັບແຮງງານເຄື່ອນຍ້າຍໃນ ສປປລາວ ແລະ ປະເທດປາຍທາງ ລວມທັງການສະໜອງຂໍ້ມູນທີ່ຈໍາເປັນສໍາລັບການຍ້າຍຖິ່ນຖານ ໃນຂັ້ນຕອນກ່ອນການຍ້າຍຖິ່ນຖານ.<br>2. ເພີ່ມທະວີລະບົບການສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ເພື່ອຫຼຸດຜ່ອນການເຄື່ອນຍ້າຍແຮງງານທີ່ບໍ່ສະໝໍ່າສະເໝີ, ລວມມີການພັດທະ ນາ/ທົບທວນ ບົດບັນທຶກຊ່ວຍຈໍາກັບປະເທດທີ່ຮັບແຮງງານ ເຊັ່ນ ໄທ, ມາເລເຊຍ, ສ.ເກົາຫຼີ ແລະ ຍີ່ປຸ່ນ.<br>3. ຮັບປະກັນວ່າແຮງງານທີ່ກັບຄືນມາ ແລະ ຄອບຄົວຂອງເຂົາເຈົ້າໄດ້ຮັບຜົນປະໂຫຍດຈາກການສົ່ງເງິນກັບບ້ານ. | | |
| **ເຫດຜົນ:** ການຈ້າງງານ ແລະ ທຸລະກິດໃນ ສປປລາວ ໄດ້ຮັບຜົນກະທົບຢ່າງໜັກໜ່ວງຈາກພະຍາດໂຄວິດ 19. ປະຊາຊົນຈໍານວນຫຼາຍຖືກບັງຄັບໃຫ້ອອກຈາກວຽກຍ້ອນການປິດກິດຈະການ, ທຸລະກິດຈໍານວນຫຼາຍຖືກຂັດ | | |

| **ອົງປະກອບ 1:** ການປຶກສາຫາລືກັບພາກສັງຄົມ. ກົດໝາຍວ່າດ້ວຍແຮງງານ, ການຄຸ້ມຄອງແຮງງານ ແລະ ການເຄື່ອນຍ້າຍຖິ່ນຖານ ແລະ ການຄຸ້ມຄອງຊາຍແດນແບບປະສົມປະສານ | **ເສົາຄ້ຳ 3:** ການຄຸ້ມຄອງການປ່ຽນແປງ ແລະ ການເພີ່ມທະວີການກະກຽມນະໂຍບາຍໃຫ້ແກ່ວຽກງານທີ່ເປັນທຳ | ໜ່ວຍງານນໍາພາຈັດຕັ້ງປະຕິບັດ: ກົມແຜນການ ແລະ ການຮ່ວມມືສາກົນ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ) |
|---|---|---|
| ຂວາງຍ້ອນເສດຖະກິດຖົດຖອຍ. ການສໍາຫຼວດໂດຍອົງການ ສປຊ ປະຈໍາ ສປປລາວ ໃນຈໍານວນ 350 SME (ສ່ວນຫຼາຍແມ່ນຂະແໜງຂາຍຍ່ອຍ) ໃນ 6 ແຂວງໃນເດືອນມິຖຸນາ 2020 ພົບວ່າ 95% ຂອງບໍລິສັດໄດ້ຮັບຜົນກະທົບທາງລົບຈາກວິກິດການ, ໃນນັ້ນ 71% ຂອງບໍລິສັດທີ່ຖືກສໍາຫຼວດຕ້ອງຢຸດການດໍາເນີນງານ. ການຄົ້ນພົບນີ້ ສະແດງໃຫ້ເຫັນຄວາມທ້າທາຍດ້ານງົບປະ ມານທີ່ບັນດາຄົວເຮືອນຕ້ອງປະເຊີນ ແລະ ລາຍຮັບທີ່ເກັບໂດຍລັດຫຼຸດລົງ. | | |
| **ເຊື່ອມໂຍງກັບ NSEDP ຄັ້ງທີ IX:**<br><br>1. ຜົນໄດ້ຮັບ 1: ການເຕີບໂຕດ້ານເສດຖະກິດທີ່ມີຄຸນນະພາບ, ໝັ້ນຄົງ ແລະ ຍືນຍົງ; ໝາກຜົນ 1: ການເຕີບໂຕທາງເສດຖະກິດມີຄຸນນະພາບ ແລະ ຍືນຍົງ; ໝາກຜົນ 2: ການຮັບປະກັນການຄຸ້ມຄອງເສດຖະກິດມະຫາພາກທີ່ເຂັ້ມແຂງ ແລະ ໝັ້ນຄົງ; ໝາກຜົນ 3 ຄຸນນະພາບ ແລະ ປະສິດທິພາບການລົງທຶນໄດ້ຮັບການປັບປຸງ | | |
| **ໜ່ວຍງານຄູ່ຮ່ວມງານທີ່ມີທ່າແຮງ:** ສະຫະພັນກໍາມະບານລາວ, ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ, ກະຊວງປ້ອງກັນຄວາມສະຫງົບ (ກວດຄົນເຂົ້າ-ອອກເມືອງ), ກະຊວງພາຍໃນ, ກະຊວງກະສິກໍາ ແລະ ປ່າໄມ້, ກະຊວງສຶກສາທິການ ແລະ ກິລາ, ສະຫະພັນແມ່ຍິງ, ຄູ່ຮ່ວມພັດທະນາ | | |

| **ອົງປະກອບ 2:** ລະບົບການປົກປ້ອງສັງຄົມ ແລະ ການບໍລິການທີ່ຈໍາເປັນ | **ເສົາຄ້ຳ 3:** ການຄຸ້ມຄອງການປ່ຽນແປງ ແລະ ການເພີ່ມທະວີການກະກຽມນະໂຍບາຍໃຫ້ແກ່ວຽກງານທີ່ເປັນທຳ | ໜ່ວຍງານນໍາພາຈັດຕັ້ງປະຕິບັດ: ກົມແຜນການ ແລະ ການຮ່ວມມືສາກົນ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ), ກົມແຜນການ (ກະຊວງແຜນການ ແລະ ການລົງທຶນ) |
|---|---|---|
| **ລາຍລະອຽດຂອງການຈັດຕັ້ງປະຕິບັດ:** ເພີ່ມທະວີການເຂົ້າເຖິງ ແລະ ເພີ່ມທະວີການປົກປ້ອງສັງຄົມ ເພື່ອແນໃສ່ການປົກປ້ອງແຮງງານ ແລະ ຄອບຄົວຂອງເຂົາເຈົ້າ ຈາກໄພຂົ່ມຂູ່ຕໍ່ຊີວິດການເປັນຢູ່ຂັ້ນພື້ນຖານ (ການປະກັນສັງຄົມ, ການຊ່ວຍເຫຼືອສັງຄົມ ແລະ ລະບຽບການຕະຫຼາດແຮງງານ). | | |
| **ການຈັດຕັ້ງບູລິມະສິດ:**<br><br>• ເສີມສ້າງການປົກປ້ອງທາງສັງຄົມເພື່ອສະໜັບສະໜູນທຶນຊ່ວຍເຫຼືອລ້າແກ່ເດັກນ້ອຍຢ່າງທົ່ວເຖິງ: (a) ສະໜອງເງິນສົດຢ່າງຕໍ່ເນື່ອງໃຫ້ແກ່ແມ່ຍິງຖືພາ ແລະ ເດັກນ້ອຍອາຍຸ 0-2 ປີ ລວມເຖິງຄົວເຮືອນທີ່ມີຄວາມສ່ຽງ ເພື່ອໃຫ້ພວກເຂົາໄດ້ຮັບການສະໜັບສະໜູນເພີ່ມເຕີມເພື່ອໃຫ້ແນ່ໃຈວ່າເດັກນ້ອຍຍັງຈະສືບຕໍ່ຮຽນໜັງສື, (b) ຂະຫຍາຍໂຄງການອາຫານໃນໂຮງຮຽນແຫ່ງຊາດ ເພື່ອຮັບປະກັນດ້ານໂພຊະນາການທີ່ພຽງພໍສໍາລັບເດັກ ແລະ ຄົວເຮືອນ ແລະ ຄ່ອຍໆຂະຫຍາຍອອກໄປຕາມຄວາມຈໍາເປັນ, (c) ຈັດລຽງບູລິມະສິດສໍາລັບການສະໜອງການບໍລິການ | | |

<table>
<tr>
<th>ອົງປະກອບ 2: ລະບົບການປົກປ້ອງສັງຄົມ ແລະ ການບໍລິການທີ່ຈຳເປັນ</th>
<th>ເສົາຄ້ຳ 3: ການຄຸ້ມຄອງການປ່ຽນແປງ ແລະ ການເພີ່ມທະວີການກະກຽມນະໂຍບາຍໃຫ້ແກ່ວຽກງານທີ່ເປັນທຳ</th>
<th>ໜ່ວຍງານນຳພາຈັດຕັ້ງປະຕິບັດ: ກົມແຜນການ ແລະ ການຮ່ວມມືສາກົນ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ), ກົມແຜນການ (ກະຊວງແຜນການ ແລະ ການລົງທຶນ)</th>
</tr>
<tr>
<td colspan="3">
ສຸຂະພາບ ແລະ ໂພຊະນາການທີ່ຈຳເປັນ ລວມທັງການເສີມວິຕາມິນ A, ການສັກຢາກັນພະຍາດ, ການໃຫ້ຄຳປຶກສາກ່ຽວກັບການໃຫ້ອາຫານເດັກອ່ອນ ແລະ ເດັກນ້ອຍ (IYCF), ການກຳນົດ ແລະ ການປິ່ນປົວການຂາດສານອາຫານ ແລະ ອື່ນໆ, (d) ສະໜອງການສະໜັບສະໜູນທາງດ້ານຈິດໃຈ ແລະ ສັງຄົມທີ່ຈຳເປັນ ແລະ ການຄຸ້ມຄອງທັກສະຊີວິດ ເພື່ອເຮັດໃຫ້ການພັດທະນາເປັນປົກກະຕິ ແລະ ຮັບມືກັບຄວາມຫຍຸ້ງຍາກພ້ອມທັງ (e) ສະໜອງພື້ນທີ່ໂຮງ ຮຽນທີ່ປອດໄພ.<br>
• ໃຫ້ບູລິມະສິດການລວມກຸ່ມຜູ້ທີ່ມີຄວາມບອບບາງອື່ນໆ ເຊັ່ນ ແມ່ຍິງແລະຄົນພິການ ເປັນຜູ້ໄດ້ຮັບຜົນປະໂຫຍດຈາກການຄຸ້ມຄອງທາງສັງຄົມ.<br>
• ສົ່ງເສີມຄວາມເປັນຢູ່ທີ່ດີຂອງແຮງງານເຄື່ອນຍ້າຍໃນໄລຍະການຮັບສະໝັກ ແລະ ຍົກຍ້າຍຖິ່ນຖານຄືນໃໝ່ ແລະ ຜ່ານ IEC ທີ່ສົມບູນແບບ ແລະ ຂໍ້ມູນທີ່ຖືກຕ້ອງກ່ຽວກັບນະໂຍບາຍ/ຄວາມຕ້ອງການຍົກຍ້າຍຖິ່ນຖານ.<br>
• ຈັດກິດຈະກຳປົກປ້ອງສັງຄົມກັບບັນດາໂຄງການທີ່ລະບຸໄວ້ໃນກອບການຟື້ນຟູຈາກໂຄວິດ 19 ແບບຮອບດ້ານຂອງອາຊຽນ.<br>
• ສົ່ງເສີມການສ້າງຄວາມສາມາດໃນການແຊກແຊງດ້ານວິຊາການແລະການທົດລອງທີ່ສະເໜີໂດຍຄູ່ຮ່ວມພັດທະນາສາກົນໃຫ້ແກ່ອົງການຂອງລັດ.<br>
• ຈັດຕັ້ງປະຕິບັດມາດຕະຖານສາກົນດ້ານຊີວະອະນາໄມ ແລະ ການເປັນຢູ່ທີ່ດີ ສຳລັບທຸກໜວດວຽກ ເພື່ອສົ່ງເສີມວຽກງານທີ່ເປັນທຳ ແລະ ການດຳລົງຊີວິດທີ່ມີສຸຂະພາບດີ.
</td>
</tr>
<tr>
<td colspan="3">
ເຫດຜົນ: ທ່າມກາງສະພາບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍດ້ານເສດຖະກິດ-ການເງິນ ທີ່ມີມາຍາວນານ ການປົກປ້ອງທາງສັງຄົມໃນ ສປປລາວ ແມ່ນຂ້ອນຂ້າງຕ່ຳ. ມີພຽງແຕ່ 16.7% ຂອງປະຊາກອນໄວອອກແຮງງານ 4.76 ລ້ານຄົນເທົ່ານັ້ນທີ່ໄດ້ຮັບການຄຸ້ມຄອງ.[40] ແຮງງານລາວສ່ວນຫຼາຍແມ່ນຢູ່ນອກລະບົບ ລວມມີ 82.9% ຂອງການຈ້າງທັງໝົດ. ອັດຕາການຈ້າງງານນອກລະບົບໃນກຸ່ມໄວໜຸ່ມອາຍຸລະຫວ່າງ 15-24 ປີ ຢູ່ທີ່ 90.1% ຂອງຜູ້ທີ່ມີອາຍຸຫຼາຍກວ່າ 25 ປີ.[41] ປະຊາກອນສ່ວນຫຼາຍແມ່ນອາໄສຢູ່ເຂດຊົນນະບົດ, 70.5%, ໃນນັ້ນ 1/3 (35.8%) ຂອງແຮງງານແມ່ນເຮັດວຽກໃນຂະແໜງກະສິກຳ, ປ່າໄມ້ ແລະ ການປະມົງ.[42] ທີ່ປະສົບກັບການມີລາຍຮັບທີ່ບໍ່ສະໝ່ຳສະເໝີໃນຂະແໜງການກະສິກຳ ແລະ ນອກລະບົບ, ເຊັ່ນດຽວກັນກັບການລົງທະບຽນໃນລະບົບປະກັນສັງຄົມແຫ່ງຊາດກໍຢູ່ໃນລະດັບຕ່ຳ, ກຸ່ມຄົນເຫຼົ່ານີ້ມີທ່າອ່ຽງໜ້ອຍທີ່ສຸດທີ່ຈະໄດ້ຮັບຜົນປະໂຫຍດຈາກການປົກປ້ອງທາງສັງຄົມ ໃນໄລຍະໄພພິບັດທຳມະຊາດ ຫຼື ພະຍາດລະບາດເຊັ່ນໂຄວິດ 19. ອີງໃສ່ຕົວເລກການສູນເສຍວຽກເຮັດງານທຳທີ່ສູງໃນຂະແໜງການທ່ອງທ່ຽວ, ການຜະລິດ ແລະ ການປິດກິດຈະການໃນຂະແໜງ MSME ການປົກປ້ອງທາງສັງຄົມມີຄວາມສຳຄັນຫຼາຍຕໍ່ກັບການແກ້ໄຂຄວາມບໍ່ເທົ່າທຽມກັນ ແລະ ຄວາມທ້າທາຍທາງດ້ານເສດຖະກິດໃນຄົວເຮືອນ.
</td>
</tr>
</table>

[40] USAID. *USAID/LAO PDR COVID-19 Assessment (Final Report)*, *https://pdf.usaid.gov/pdf_docs/PA00XS7K.pdf*, *August 5, 2022*
[41] United Nations. The situation of children and women of Lao People's Democratic Republic, https://www.unicef.org/laos/reports/situation-children-and-women-laoprd, accessed , August 18, 2022
[42] United Nations. Developing a shock responsive national social protection system to respond to the COVID-19 crisis in LAO PDR, https://laopdr.un.org/sites/default/files/2021-01/covid-19%20Laos_revised.pdf, accessed August 6, 2022

| **ອົງປະກອບ 2:** ລະບົບການປົກປ້ອງສັງຄົມ ແລະ ການບໍລິການທີ່ຈຳເປັນ | **ເສົາຄ້ຳ 3:** ການຄຸ້ມຄອງການປ່ຽນແປງ ແລະ ການເພີ່ມທະວີການກະກຽມນະໂຍບາຍໃຫ້ແກ່ວຽກງານທີ່ເປັນທຳ | ໜ່ວຍງານນຳພາຈັດຕັ້ງປະຕິບັດ: ກົມແຜນການ ແລະ ການຮ່ວມມືສາກົນ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ), ກົມແຜນການ (ກະຊວງແຜນການ ແລະ ການລົງທຶນ) |
|---|---|---|

**ເຊື່ອມໂຍງກັບ NSEDP ຄັ້ງທີ IX:**

1. ຜົນໄດ້ຮັບ 3: ເພີ່ມທະວີການເປັນຢູ່ທີ່ດີຂອງປະຊາຊົນ; ໝາກຜົນ 5: ຂະຫຍາຍການເຂົ້າເຖິງການບໍລິການປົກປ້ອງສັງຄົມໃຫ້ມີປະສິດທິພາບຫຼາຍຂຶ້ນໃຫ້ແກ່ປະຊາຊົນ, ລວມທັງຜູ້ອອກແຮງງານ ແລະ ຜູ້ປະກອບອາຊີບອິດສະຫຼະ.

**ໜ່ວຍງານຄູ່ຮ່ວມງານທີ່ມີທ່າແຮງ:** ສະຫະພັນແມ່ຍິງ, ສະຫະພັນກຳມະບານລາວ, ກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງກະສິກຳ ແລະ ປ່າໄມ້, ອົງການກາແດງລາວ, ກະຊວງການເງິນ, ກະຊວງການຕ່າງປະເທດ, ກະຊວງພາຍໃນ, ຫ້ອງການໄອຍະການປະຊາຊົນສູງສຸດ, ຄູ່ຮ່ວມພັດທະນາ.

| **ອົງປະກອບ 3:** ການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນກ່ຽວກັບທັກສະດິຈິຕອນ, ການຝຶກທັກສະຄືນ ໃໝ່ ແລະ ການຍົກລະດັບທັກສະ, ການບໍລິການຈ້າງງານ | **ເສົາຄ້ຳ 3:** ການຄຸ້ມຄອງການປ່ຽນແປງ ແລະ ການເພີ່ມທະວີການກະກຽມນະໂຍບາຍໃຫ້ແກ່ວຽກງານທີ່ເປັນທຳ | ໜ່ວຍງານນຳພາຈັດຕັ້ງປະຕິບັດ: ກົມແຜນການ ແລະ ການຮ່ວມມືສາກົນ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ) |
|---|---|---|

**ລາຍລະອຽດອົງປະກອບ:** ສົ່ງເສີມ ແລະ ເພີ່ມທະວີການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນກ່ຽວກັບທັກສະດິຈິຕອນ, ຍົກລະດັບທັກສະ ແລະ ຍົກລະດັບສີມືແຮງງານ, ການບໍລິການຈ້າງງານ ແລະ ລະບົບຂໍ້ມູນຂ່າວສານຕະຫຼາດແຮງງານໃຫ້ແກ່ຜູ້ອອກແຮງງານ.

**ການຈັດຕັ້ງບູລິມະສິດ:**

1. ພັດທະນາ ແລະ ຈັດຕັ້ງປະຕິບັດມາດຕະຖານສີມືແຮງງານ ແລະ ຫຼັກສູດສຳລັບກຸ່ມເປົ້າໝາຍຕ່າງໆ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານທີ່ສະທ້ອນເຖິງສະພາບທ້ອງຖິ່ນ.
2. ພັດທະນາ, ຈັດຕັ້ງປະຕິບັດນະໂຍບາຍ ແລະ ກົນໄກການພັດທະນາສີມືແຮງງານໃຫ້ມີຄຸນນະພາບ ແລະ ແທດເໝາະກັບໂອກາດໃນການຈ້າງງານ, ລວມທັງການຝຶກງານ ແລະ ໂອກາດໃນການຮຽນຮູ້ຈາກການປະຕິບັດຕົວຈິງ (ເບິ່ງເສົາຄ້ຳ 4).
3. ການສົ່ງເສີມຄວາມຮູ້ທາງດ້ານດິຈິຕອນ ແລະ ທັກສະໃນສັດຕະວັດທີ 21 ຈາກການສຶກສາຊັ້ນປະຖົມແມ່ນມີຄວາມສຳຄັນ (ເບິ່ງ**ເສົາຄ້ຳ 2; ອົງປະກອບ 4)**
4. ສົ່ງເສີມໂອກາດໃນການຍົກລະດັບ ແລະປັບປຸງສີມືແຮງງານ, ໂດຍສະເພາະແມ່ນແມ່ຍິງ, ເຊິ່ງເປັນຕົວແທນຂອງແຮງງານເຄື່ອນຍ້າຍສ່ວນໃຫຍ່ຂອງປະເທດ ແລະ ທີ່ເຮັດວຽກໃນຂະແໜງບໍລິການ ແລະ ເປັນແຮງງານພາຍຄົວ

| **ອົງປະກອບ 3**: ການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນກ່ຽວກັບທັກສະດິຈິຕອນ, ການຝຶກທັກສະຄືນ ໃໝ່ ແລະ ການຍົກລະດັບທັກສະ, ການບໍລິການຈ້າງງານ | **ເສົາຄ້ຳ 3:** ການຄຸ້ມຄອງການປ່ຽນແປງ ແລະ ການເພີ່ມທະວີການກະກຽມນະໂຍບາຍໃຫ້ແກ່ວຽກງານທີ່ເປັນທຳ | ໜ່ວຍງານນຳພາຈັດຕັ້ງປະຕິບັດ: ກົມແຜນການ ແລະ ການຮ່ວມມືສາກົນ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ) |
|---|---|---|

ເຮືອນເປັນສ່ວນໃຫຍ່. ສິ່ງດັ່ງກ່າວມີແນວໂນ້ມທີ່ຈະສົ່ງຜົນໃຫ້ມີຄວາມຮູ້ ແລະ ຄວາມຊຳນານທີ່ດີຂຶ້ນ ເພື່ອຮັບວຽກໃນຂະແໜງການທີ່ມີຄ່າຈ້າງສູງຂຶ້ນ.

**ເຫດຜົນ:** ແຮງງານຫຼາຍຄົນອອກຈາກວຽກ ຍ້ອນມາດຕະການປິດເມືອງ ແລະ ສະພາບເສດຖະກິດຖົດຖອຍຍ້ອນໂຄວິດ 19. ການສູນເສຍວຽກໃນຂະແໜງທີ່ສຳຄັນ (i) ການຄ້າຂາຍສົ່ງ ແລະຂາຍຍ່ອຍ, ການສ້ອມແປງຍານພາຫະນະ ແລະ ລົດຈັກ - 65,000; (ii) ການຜະລິດ - 46,000; (iii) ການກໍ່ສ້າງ - 24,900. ຈຳນວນສ່ວນຫຼາຍທີ່ສູນເສຍວຽກເຮັດງານທຳແມ່ນແມ່ຍິງ. ນອກນີ້, ຍັງມີແຮງງານເຄື່ອນຍ້າຍປະມານ 200,000 ກວ່າຄົນ ທີ່ຕ້ອງກັບຄືນມາໃນປີ 2021 ໂດຍຂາດໂອກາດໃນການດຳລົງຊີວິດທີ່ພຽງພໍ, ການວ່າງງານ ແລະ ການສູນເສຍລາຍໄດ້ເພີ່ມຂຶ້ນ. ອັດຕາການວ່າງງານຄາດວ່າຈະເພີ່ມຂຶ້ນ 20% ໃນປີ 2020. ດັ່ງນັ້ນ, ຄວາມສ່ຽງຂອງແຮງງານນອກລະບົບ ແລະ ຄວາມທຸກຍາກໃນການເຮັດວຽກຄາດວ່າຈະເພີ່ມຂຶ້ນ. ການຟື້ນຕົວໃນຕະຫຼາດແຮງງານ ໂດຍທົ່ວໄປໃຊ້ເວລາດົນກວ່າການຟື້ນຕົວຂອງເສດຖະກິດ.ຄວາມສ່ຽງທີ່ເພີ່ມຂຶ້ນຂອງການຂາດດຸນວຽກທີ່ເໝາະສົມຈະຍັງມີຢູ່.
(ແຫຼ່ງຂໍ້ມູນ: COVID -19 Background papers).

**ເຊື່ອມໂຍງກັບ NSEDP ຄັ້ງທີ IX:**

1. ຜົນໄດ້ຮັບ 2: ປັບປຸງຄຸນນະພາບຊັບພະຍາກອນມະນຸດ ເພື່ອຕອບສະໜອງການພັດທະນາ, ຄວາມສາມາດໃນການຄົ້ນຄວ້າ, ຄວາມຕ້ອງການດ້ານວິທະຍາສາດ ແລະ ເຕັກໂນໂລຊີ, ສ້າງມູນຄ່າເພີ່ມໃຫ້ແກ່ການຜະລິດ ແລະ ການບໍລິການ; ໝາກຜົນ 2.3: ທັກສະຂອງແຮງງານ ແລະ ຜະລິດຕະພັນໄດ້ຮັບການປັບປຸງ, ຄວາມຫຼາກຫຼາຍດ້ານວຽກເຮັດງານທຳ, ຄວາມປອດໄພ ແລະ ໂອກາດໃນການສ້າງລາຍຮັບເພີ່ມຂຶ້ນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ.
2. ຜົນໄດ້ຮັບ 3: ເພີ່ມທະວີການເປັນຢູ່ທີ່ດີຂຶ້ນຂອງປະຊາຊົນ; ໝາກຜົນ 3.4: ສົ່ງເສີມ ແລະ ພັດທະນາໄວໜຸ່ມເພື່ອປັບປຸງຊັບພະຍາກອນມະນຸດ ແລະ ການເຂົ້າຮ່ວມໃນກຳລັງແຮງງານ.

**ໜ່ວຍງານຄູ່ຮ່ວມງານທີ່ມີທ່າແຮງ:** ກະຊວງກະສິກຳ ແລະ ປ່າໄມ້, ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ສະຫະພັນກຳມະບານລາວ, ກະຊວງສຶກສາທິການ ແລະ ກິລາ (ອາຊີວະສຶກສາ), ສູນກາງຊາວໜຸ່ມ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ສະຖາບັນພັດທະນາສີມືແຮງງານ, ຄູ່ຮ່ວມພັດທະນາ

<table>
<tr><th>ອົງປະກອບ 4: ການຄໍ້າປະກັນດ້ານສະບຽງອາຫານ ແລະ ການສ້າງລາຍຮັບ, ການຈ້າງງານໃນລະບົບ ແລະ ການເຮັດວຽກທີ່ເປັນທໍາ ແລະ ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ</th><th>ເສົາຄໍ້າ 3: ການຄຸ້ມຄອງການປ່ຽນແປງ ແລະ ການເພີ່ມທະວີການກະກຽມນະໂຍບາຍໃຫ້ແກ່ວຽກງານທີ່ເປັນທໍາ</th><th>ໜ່ວຍງານນໍາພາຈັດຕັ້ງປະຕິບັດ: ກົມແຜນການ ແລະ ການຮ່ວມມື (ກະຊວງກະສິກໍາ ແລະ ປ່າໄມ້)</th></tr>
<tr><td colspan="3">ລາຍລະອຽດອົງປະກອບ: ເພີ່ມທະວີການຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດວ່າດ້ວຍການສົ່ງເສີມການຈ້າງງານໃນເຂດຊຸມຊົນ ເພື່ອຄໍ້າປະກັນສະບຽງອາຫານ ແລະ ການສ້າງລາຍຮັບທີ່ອໍານວຍຄວາມສະດວກໃຫ້ແກ່ການເຂົ້າເຖິງວຽກເຮັດງານທໍາໃນລະບົບ ແລະ ວຽກງານທີ່ເປັນທໍາ ແລະ ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ.</td></tr>
<tr><td colspan="3">ການຈັດຕັ້ງບູລິມະສິດ:<br><br>1. ສົ່ງເສີມຄວາມປອດໄພ ແລະ ການຄໍ້າປະກັນສະບຽງອາຫານ ເພື່ອຫຼຸດຜ່ອນການຂາດສານອາຫານ ຜ່ານການຜະລິດສະບຽງອາຫານໃນສວນຂອງຄົວເຮືອນ<br>2. ການເຂົ້າເຖິງດ້ານການເງິນ, ລະບົບການຜະລິດ, ຕະຫຼາດ, ບຸກຄະລາກອນ, ຊັບພະຍາກອນທີ່ດິນ (ທີ່ດິນ, ປ່າໄມ້ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ), ຂໍ້ມູນຂ່າວສານກະສິກາ, ການບໍລິການສັງຄົມ (ການສຶກສາ ແລະ ສຸຂະພາບ, ນໍ້າສະອາດ ແລະ ສຸຂາພິບານ) ແລະ ການເງິນໃນຊົນນະບົດ<br>3. ສົ່ງເສີມການພັດທະນາສີມືແຮງງານ ແລະ ຄວາມສາມາດທາງດ້ານເຕັກນິກທີ່ກ້າວໜ້າ ເພື່ອເພີ່ມຜົນຜະລິດໃນດ້ານອື່ນໆ (ເບິ່ງເສົາຄໍ້າ 2; ອົງປະກອບ 1)</td></tr>
<tr><td colspan="3">ເຫດຜົນ: ອີງຕາມ UNICEF (2019)[43] ຄົວເຮືອນທີ່ເພິ່ງພາກະສິກໍາມີສອງເທົ່າຂອງຄົວເຮືອນທີ່ຢູ່ນອກກະສິກໍາເຊິ່ງຈະຍັງຄົງທຸກຍາກ ເນື່ອງຈາກພວກເຂົາມີຄວາມສ່ຽງສູງຕໍ່ຜົນກະທົບຈາກການປ່ຽນແປງຂອງລາຄາຜົນຜະລິດກະສິກໍາ, ການສູນເສຍທີ່ດິນ ແລະ ສະພາບອາກາດທີ່ບໍ່ດີ, ລວມທັງຜົນກະທົບທີ່ເພີ່ມຂຶ້ນຈາກການປ່ຽນແປງດິນຟ້າອາກາດ.</td></tr>
<tr><td colspan="3">ເຊື່ອມໂຍງກັບ NSEDP ຄັ້ງທີ 9:<br><br>1. ຜົນໄດ້ຮັບ 3: ເພີ່ມທະວີການເປັນຢູ່ທີ່ດີຂຶ້ນຂອງປະຊາຊົນ; ໝາກຜົນ 3.1: ຫຼຸດຜ່ອນຄວາມທຸກຍາກໃນຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ, ແລະ ການດໍາລົງຊີວິດຂອງປະຊາຊົນ, ຄຸນຄ່າທາງວັດທະນະທໍາ, ວຽກງານສື່ມວນຊົນໄດ້ຮັບການປັບປຸງ.<br>2. ຜົນໄດ້ຮັບ 4: ການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສ່ຽງໄພພິບັດຫຼຸດລົງ</td></tr>
<tr><td colspan="3">ໜ່ວຍງານຄູ່ຮ່ວມງານທີ່ມີທ່າແຮງ: ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງການເງິນ, ກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະຖາບັນການເງິນ, ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ທະນາຄານແຫ່ງ ສປປ ລາວ, ຄູ່ຮ່ວມພັດທະນາ</td></tr>
</table>

[43] UNICEF. The situation of children and women of Lao People's Democratic Republic, https://www.unicef.org/laos/reports/situation-children-and-women-laoprd, accessed August 18, 2022

| **ອົງປະກອບ 5:** ສົ່ງເສີມ SMEs ທ້ອງຖິ່ນ, ການຈ້າງງານ, ແຮງງານເຄື່ອນຍ້າຍ ແລະ ການໂອນຖ່າຍຊັບພະຍາກອນ | **ເສົາຄ້ຳ 3:** ການຄຸ້ມຄອງການປ່ຽນແປງ ແລະ ການເພີ່ມທະວີການກະກຽມນະໂຍບາຍໃຫ້ແກ່ວຽກງານທີ່ເປັນທຳ | ໜ່ວຍງານນຳພາຈັດຕັ້ງປະຕິບັດ: ກົມແຜນການ ແລະ ການຮ່ວມມື (ກະຊວງອຸດສາຫະກຳ ແລະ ການຄ້າ) |
|---|---|---|

**ລາຍລະອຽດອົງປະກອບ:** ນະໂຍບາຍທີ່ສອດຄ່ອງເພື່ອປັບປຸງຜົນປະໂຫຍດຂອງການລົງທຶນຕ່າງປະເທດ ເຊິ່ງຈະຊ່ວຍສົ່ງເສີມ SMEs ທ້ອງຖິ່ນ, ການຈ້າງງານ, ແຮງງານເຄື່ອນຍ້າຍ, ແລະ ການໂອນຖ່າຍຊັບພະຍາກອນ.

**ການຈັດຕັ້ງບູລິມະສິດ:**

1. ພັດທະນາ ແລະ ປະຕິບັດນະໂຍບາຍຮັບປະກັນການຈ້າງງານແຮງງານເຄື່ອນຍ້າຍໃນເຂດເສດຖະກິດພິເສດ (SEZs) ແລະ ໂຄງການພັດທະນາຕາມຂໍ້ລິເລີ່ມໜຶ່ງແລວໜຶ່ງເສັ້ນທາງ ດ້ວຍການຮັບປະກັນວຽກງານທີ່ເປັນທຳໃຫ້ແກ່ເຂົາເຈົ້າ.
2. ພັດທະນາຜະລິດຕະພັນໃໝ່ເພື່ອອຳນວຍຄວາມສະດວກໃນການເຂົ້າເຖິງການໂອນເງິນ, ໂດຍສະເພາະປະຊາຊົນໃນຊຸມຊົນຊົນນະບົດໃຫ້ເຂົ້າເຖິງໄດ້ງ່າຍ.
3. ສະໜັບສະໜູນການສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ SME ຜ່ານ: (ເບິ່ງເສົາຄ້ຳ 2; ອົງປະກອບ 1)
    1) ພັດທະນາຂອບນະໂຍບາຍ ແລະ ນິຕິກຳທີ່ຈະແຈ້ງກ່ຽວກັບການລົງທຶນ, ການຄ້າ ແລະ ການພັດທະນາອຸດສາຫະກຳ ເພື່ອສົ່ງເສີມ SMEs ທ້ອງຖິ່ນ ເພື່ອແນໃສ່ຊຸກຍູ້ການຜະລິດ ແລະ ການຈ້າງງານ.
    2) ພັດທະນາຂອບນະໂຍບາຍ ແລະ ແຜນການຈັດຕັ້ງປະຕິບັດທີ່ເຮັດໃຫ້ SMEs ມີຄວາມທົນທານໃນເວລາທີ່ມີວິກິດການ

**ເຫດຜົນ:** ການຟື້ນຟູສູ່ຕະຫຼາດແຮງງານທີ່ດີຂຶ້ນ ຮຽກຮ້ອງໃຫ້ ສປປ ລາວ ກຳນົດບູລິມະສິດໃນການປັບປຸງກົດໝາຍວ່າດ້ວຍແຮງງານ, ໃຫ້ສອດຄ່ອງກັບມາດຕະຖານແຮງງານ ແລະ ການສະໜັບສະໜູນ (ທີ່ເປັນທຳ) ໃນນະໂຍບາຍການຈ້າງງານ ແລະ ຄ່າແຮງງານ. ຖ້າຫາກວ່າບໍ່ເຮັດສິ່ງນີ້, ຊ່ອງວ່າງລະຫວ່າງຄ່າແຮງງານ ແລະ ຜະລິດຕະພັນ ແລະ ຄວາມບໍ່ສະເໝີພາບໂດຍທົ່ວໄປຍັງຈະເພີ່ມຂຶ້ນພ້ອມກັບການເຕີບໂຕຂອງເສດຖະກິດຂອງລາວ. ນອກຈາກນີ້, ແຮງງານເຄື່ອນຍ້າຍຈຳນວນຫຼວງຫຼາຍໃນທົ່ວປະເທດໄດ້ອອກຈາກບ່ອນຢູ່ອາໄສໄປເຮັດວຽກໃນເຂດເສດຖະກິດພິເສດ (SEZs), ໂຄງການພັດທະນາ ແລະ ຕົວເມືອງທີ່ມີຄວາມສ່ຽງຕໍ່ການຖືກຂູດຮີດ. ສິ່ງທ້າທາຍຂອງຄຸນນະພາບວຽກທີ່ເຊື່ອມໂຍງກັບການຍອມຮັບແລະການບັງຄັບໃຊ້ມາດຕະຖານແຮງງານລະດັບຊາດແລະສາກົນຢ່າງຈຳກັດ. (COVID-19 Background Paper).

**ເຊື່ອມໂຍງກັບ NSEDP ຄັ້ງທີ IX:**

1. ຜົນໄດ້ຮັບ 1: ການເຕີບໂຕດ້ານເສດຖະກິດທີ່ມີຄຸນນະພາບ, ໝັ້ນຄົງ ແລະ ຍືນຍົງ; ໝາກຜົນ 1: ການເຕີບໂຕທາງເສດຖະກິດມີຄຸນນະພາບ ແລະ ຍືນຍົງ; ໝາກຜົນ 2: ຮັບປະກັນການຄຸ້ມຄອງເສດຖະກິດມະຫາພາກໃຫ້ມີຄວາມເຂັ້ມແຂງ ແລະ ໝັ້ນຄົງ; ໝາກຜົນ 4: ຄຸນນະພາບດີກວ່າເກົ່າ, ເຂັ້ມແຂງ ແລະ ສາມາດແຂ່ງຂັນໃນລະດັບພາກພື້ນ ແລະ ລະດັບສາກົນ, ວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ

| **ອົງປະກອບ 5:** ສົ່ງເສີມ SMEs ທ້ອງຖິ່ນ, ການຈ້າງງານ, ແຮງງານເຄື່ອນຍ້າຍ ແລະ ການໂອນຖ່າຍຊັບພະຍາກອນ | **ເສົາຄໍ້າ 3:** ການຄຸ້ມຄອງການປ່ຽນແປງ ແລະ ການເພີ່ມທະວີການກະກຽມນະໂຍບາຍໃຫ້ແກ່ວຽກງານທີ່ເປັນທຳ | ໜ່ວຍງານນໍາພາຈັດຕັ້ງປະຕິບັດ: ກົມແຜນການ ແລະ ການຮ່ວມມື (ກະຊວງອຸດສາຫະກໍາ ແລະ ການຄ້າ) |
|---|---|---|
| **ໜ່ວຍງານຄູ່ຮ່ວມງານທີ່ມີທ່າແຮງ:** ກະຊວງແຜນການ ແລະ ການລົງທຶນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງການເງິນ, ກະຊວງກະສິກໍາ ແລະ ປ່າໄມ້, ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ, ສະຫະພັນກໍາມະບານລາວ, ສະຫະພັນແມ່ຍິງ, ກະຊວງປ້ອງກັນຄວາມສະຫງົບ, ທະນາຄານແຫ່ງ ສປປ ລາວ, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຄູ່ຮ່ວມພັດທະນາ | | |

| **ອົງປະກອບ 6:** ເສີມສ້າງຄວາມເຂັ້ມແຂງໃນການຕັດສິນໃຈ ໂດຍອີງໃສ່ຂໍ້ມູນຫຼັກຖານ | **ເສົາຄໍ້າ 3:** ການຄຸ້ມຄອງການປ່ຽນແປງ ແລະ ການເພີ່ມທະວີການກະກຽມນະໂຍບາຍໃຫ້ແກ່ວຽກງານທີ່ເປັນທຳ | ໜ່ວຍງານນໍາພາຈັດຕັ້ງປະຕິບັດ: ກະຊວງແຜນການ ແລະ ການລົງທຶນ (ສູນສະຖິຕິແຫ່ງຊາດລາວ) |
|---|---|---|
| **ລາຍລະອຽດອົງປະກອບ:** ການໃຊ້ຂໍ້ມູນທີ່ມີຄຸນນະພາບ ແລະ ປະລິມານ ເພື່ອສະໜັບສະໜູນການຟື້ນຕົວຫຼັງພະຍາດໂຄວິດ 19 ລະບາດ ກ່ຽວກັບການເຄື່ອນໄຫວ ແລະ ຄົນທີ່ຕ້ອງເດີນທາງ. ການຕັດສິນໃຈໂດຍອີງໃສ່ຫຼັກຖານສະໜັບສະໜູນຄວາມຮັບຜິດຊອບ ແລະ ການນໍາໃຊ້ຊັບພະຍາກອນທີ່ໂປ່ງໃສ ເຊັ່ນດຽວກັນກັບໂຄງການທີ່ມີຜົນກະທົບຕໍ່ຜູ້ໄດ້ຮັບຜົນປະໂຫຍດ. | | |
| **ການຈັດຕັ້ງບູລິມະສິດ:**<br><br>1. ສ້າງຕັ້ງຄູ່ຮ່ວມມືກັບໜ່ວຍງານເກັບກໍາຂໍ້ມູນພາຍນອກຂອງ ສປປລາວ ເພື່ອເກັບກໍາຂໍ້ມູນພົນລະເມືອງລາວທີ່ໄປເຮັດວຽກຢູ່ຕ່າງປະເທດ<br>2. ສ້າງລະບົບການເກັບກໍາຂໍ້ມູນການເຄື່ອນຍ້າຍ ເພື່ອຮັບປະກັນການເກັບກໍາຂໍ້ມູນທີ່ຕໍ່ເນື່ອງ, ເສີມຂະຫຍາຍການວິເຄາະ ແລະ ຄວາມສາມາດໃນການຄາດຄະເນຂອງລັດຖະບານ ແລະ ຄູ່ຮ່ວມມືອື່ນໆໃນການຟື້ນຕົວຈາກໂຄວິດ 19 ພ້ອມທັງຜົນກະທົບຂອງອັດຕາເງິນເຟີ້ຢ່າງຕໍ່ເນື່ອງ. ຂົງເຂດການເກັບກໍາຂໍ້ມູນ ແລະ ການວິເຄາະລວມມີ:<br>1) ຜົນກະທົບຂອງພະຍາດລະບາດຕໍ່ກັບການປົກປ້ອງ ແລະ ການຊ່ວຍເຫຼືອແຮງງານເຄື່ອນຍ້າຍ, ລວມທັງການກັບຄືນມາ ແລະ ການເຊື່ອມໂຍງຄືນໃໝ່, ຮູບແບບການເຄື່ອນຍ້າຍ, ເຄືອຂ່າຍອາຊະຍາກໍາ, ຄ່າບໍລິການ, ເຫດການຄວາມຮຸນແຮງ, ການຂູດຮີດ, ການລ່ວງລະເມີດ, ແລະ ນໍາໃຊ້ສິ່ງທີ່ໄດ້ຮຽນຮູ້ເຂົ້າໃນການວາງແຜນ/ການຄາດຄະເນ ແລະ ວິກິດການໃນອະນາຄົດ.<br>2) ການສ້າງແຜນທີ່ການເຂົ້າ ແລະ ອອກ ໂດຍນໍາໃຊ້ການຕິດຕາມການໄຫຼວຽນໂດຍເນັ້ນໃສ່ການເຄື່ອນໄຫວພາຍໃນ, ການໄປ-ມາລະຫວ່າງປະເທດແລະພາກພື້ນທີ່ມີອັດຕາການແຜ່ລະບາດຂອງ COVID-19 ສູງກວ່າ.<br>**3)** ຜົນກະທົບຂອງ COVID-19 ຕໍ່ວຽກງານທີ່ເປັນທໍາ ລວມທັງການສ້າງວຽກເຮັດງານທໍາ, ການປົກປ້ອງທາງສັງຄົມ, ສິດໃນສະຖານທີ່ເຮັດວຽກ | | |

<table>
<tr><th>ອົງປະກອບ 6: ເສີມສ້າງຄວາມເຂັ້ມແຂງໃນການຕັດສິນໃຈ ໂດຍອີງໃສ່ຂໍ້ມູນຫຼັກຖານ</th><th>ເສົາຄໍ້າ 3: ການຄຸ້ມຄອງການປ່ຽນແປງ ແລະ ການເພີ່ມທະວີການກະກຽມນະໂຍບາຍໃຫ້ແກ່ວຽກງານທີ່ເປັນທຳ</th><th>ໜ່ວຍງານນຳພາຈັດຕັ້ງປະຕິບັດ: ກະຊວງແຜນການ ແລະ ການລົງທຶນ (ສູນສະຖິຕິແຫ່ງຊາດລາວ)</th></tr>
<tr><td colspan="3">ເຫດຜົນ: ຕ້ອງການຂໍ້ມູນການຈ້າງງານທີ່ກ່ຽວຂ້ອງ ແລະ ຄຸນນະພາບທີ່ດີກວ່າ. ຂໍ້ມູນຂອງຜູ້ທີ່ມີຄວາມສ່ຽງ ລວມທັງແຮງງານເຄື່ອນຍ້າຍທີ່ແຍກຂະແໜງການເຮັດວຽກ, ລາຍໄດ້, ເພດ, ອາຍຸ, ເຊື້ອຊາດ, ຊົນເຜົ່າ, ການອົບພະຍົບ, ຄວາມພິການ, ທີ່ຕັ້ງພູມສາດ ແລະ ລັກສະນະອື່ນໆທີ່ກ່ຽວຂ້ອງໃນສະພາບການແຫ່ງຊາດຕ້ອງໄດ້ຮັບບູລິມະສິດ. ຈຳເປັນຕ້ອງໄດ້ປະເມີນບັນຫາຕົວຈິງ ແລະ ຄວາມຕ້ອງການທີ່ປະເຊີນ ພ້ອມທັງເຂົ້າໃຈຄວາມສ່ຽງອື່ນໆທີ່ເຂົາເຈົ້າມີ; ການຈັດປະເພດຜົນກະທົບດ້ານການຈ້າງງານຖືເປັນສິ່ງຈຳເປັນເພື່ອຮັບປະກັນວ່ານະໂຍບາຍການຕອບໂຕ້ທີ່ອີງໃສ່ຫຼັກຖານແມ່ນມີປະໂຫຍດ (COVID-19 Background Paper).</td></tr>
<tr><td colspan="3">ເຊື່ອມໂຍງກັບ NSEDP ຄັ້ງທີ IX:<br><br>1. ຜົນໄດ້ຮັບ 2: ການປັບປຸງຄຸນນະພາບຊັບພະຍາກອນມະນຸດ ເພື່ອຕອບສະໜອງການພັດທະນາ, ຄວາມສາມາດໃນການຄົ້ນຄວ້າ, ຄວາມຕ້ອງການດ້ານວິທະຍາສາດ ແລະ ເຕັກໂນໂລຊີ, ສ້າງມູນຄ່າເພີ່ມໃຫ້ແກ່ການຜະລິດ ແລະ ການບໍລິການ; ໝາກຜົນ 3: ທັກສະຂອງແຮງງານ ແລະ ຜະລິດຕະພັນໄດ້ຮັບການປັບປຸງ, ຄວາມຫຼາກຫຼາຍດ້ານວຽກເຮັດງານທຳ, ຄວາມປອດໄພ ແລະໂອກາດໃນການສ້າງລາຍຮັບເພີ່ມຂຶ້ນເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ.<br>2. ຜົນໄດ້ຮັບ 3: ເພີ່ມທະວີການເປັນຢູ່ທີ່ດີຂອງປະຊາຊົນ; ໝາກຜົນ 5: ຂະຫຍາຍການເຂົ້າເຖິງການບໍລິການປົກປ້ອງສັງຄົມໃຫ້ມີປະສິດທິພາບຫຼາຍຂຶ້ນໃຫ້ແກ່ປະຊາຊົນ, ລວມທັງຜູ້ອອກແຮງງານ ແລະ ຜູ້ປະກອບອາຊີບອິດສະຫຼະ.</td></tr>
<tr><td colspan="3">ໜ່ວຍງານຄູ່ຮ່ວມງານທີ່ມີທ່າແຮງ: ກະຊວງປ້ອງກັນຄວາມສະຫງົບ, ທະນາຄານແຫ່ງ ສປປ ລາວ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ມະຫາວິທະຍາໄລແຫ່ງຊາດ, ສະພາວິທະຍາສາດ ແລະ ເສດຖະກິດຂອງລາວ, ກະຊວງການເງິນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຄູ່ຮ່ວມພັດທະນາ</td></tr>
</table>

### 4.4 ເສົາຄໍ້າ 4: ທຶນມະນຸດ/ຊັບພະຍາກອນມະນຸດ

ສະພາບການແລະການກະທຳທີ່ຈຳເປັນສຳລັບການເສີມສ້າງທຶນມະນຸດແລະເພີ່ມທະວີຄວາມຍືດຍຸ່ນເພື່ອໃຫ້ມີຄວາມພ້ອມຫຼາຍຂຶ້ນ ສຳລັບວິກິດການໃນອະນາຄົດແມ່ນໄດ້ຮັບການແກ້ໄຂໃນເສົາຄໍ້ານີ້.

<table>
<tr><th>ອົງປະກອບ 1: ການສຶກສາ</th><th>ເສົາຄໍ້າ 4: ທຶນມະນຸດ</th><th>ໜ່ວຍງານນຳພາຈັດຕັ້ງປະຕິບັດ: ກົມແຜນການ ແລະ ການຮ່ວມມື (ກະຊວງສຶກສາທິການ ແລະ ກິລາ)</th></tr>
